# <u>ກຸ່ມຜູ້ຈັດທຳ ຄຳແນະນຳສຳລັບຄຣູສອນ</u>

Copyright © 2002 by BAPTISTWAY PRESS®.
ສງວນລິກຂະສິດ

ອະນຸດຍາດໃຫ້ທາງຄຣິສຕະຈັກເຮັດກອບປີ້ໄດ້ຕາມຄວາມຕ້ອງການ ເພື່ອໃຊ້ຢູ່ພາຍໃນຄຣິສຕະຈັກ. ຫ້າມຂາຍ, ຫ້າມແຈກຢາຍ, ຫລືໃຊ້ໃນທາງອື່ນໆ ໂດຍທີ່ບໍ່ໄດ້ຂຽນຄຳຮ້ອງຂໍອະນຸຍາດເສັຽກ່ອນ. ຖ້າຢາກຊາບລາຍລະອຽດເພີ້ມເຕີມ ກະຣຸນາຕິດຕໍ່ໄປທີ່ BAPTISTWAY PRESS, Baptist General Convention of Texas, 333 North Washington, Dallas, TX 75246-1798.

BAPTISTWAY PRESS® is registered in U.S. Patent and Trademark Office.

ຂໍ້ຄວາມພຣະຄັມພີອ້າງອີງໃນບົດຮຽນນີ້ ໄດ້ຄັດມາຈາກປື້ມພຣະຄັມພີຕາມທີ່ໄດ້ບົ່ງຊື່ໄວ້ ລວມທັງການແປ, ແລະວັນທີຈົດທະບຽນສງວນລິຂະສິດຂອງປື້ມພຣະຄັມພີເຫລົ່ານັ້ນ.

ພິມອອກຄັ້ງທຳອິດ:  ເດືອນ ມີນາ, ໒000

BAPTISTWAY Management Team

Executive Director, Baptist General Convention of Texas: Charles Wade
Coordinator, Church Health and Growth Section: H. Lynn Eckeberger
Director, Bible Study/Discipleship Center: Dennis Parrott
Administrator, Curriculum Development Office:  Bernard M. Spooner
Publishing consultant: Ross West, Positive Difference Communications

Language Materials Team

Teaching Procedures Writer for Unit 1
Houmphanh Vongsurith, First Laotian Baptist Church, Dallas, Texas
Editor for Unit 1
Phaisane Somsith, Samakeetam Baptist Fellowship, Dallas, Texas

Teaching Procedures Writer for Unit 2
Bounheng Phongpraphan, First Lao Baptist Church, Amarillo, Texas
Editor for Unit 2
Phaisane Somsith, Samakeetam Baptist Fellowship, Dallas, Texas

Teaching Procedures Writer for Unit 3 & Bonus Lesson
Sidney Kahn, Saginaw Community Church, Fort Worth, Texas
Bounhome Phommachanh, Lao-Thai Baptist, San Antonio, Texas
Editor for Unit 3
Phaisane Somsith, Samakeetam Baptist Fellowship, Dallas, Texas

Facilitator for the LAOTIAN TEAM
Joe Haag, Associate Director, Christian Life Commission, Baptist General Convention of Texas

Patty Lane, Director, Office of Intercultural Initiatives, Baptist General Convention of Texas
Nelda P. Williams, Facilitators Coordinator and Manager, Curriculum Development Office

# <u>ຄຳແນະນຳຄຣູສອນ</u>

# <u>ບົດຮຽນ 1</u>

# <u>ການປະກາດຂອງພຣະເຢຊູ</u>

---

<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u> ມາຣະໂກ 1:9-15, 29-39

<u>ຂໍ້ພຣະຄັມທັງຫມົດສຳລັບບົດຮຽນນີ້:</u> ມາຣະໂກ 1:1-45

<u>ຈຸດສຳຄັນຂອງບົດຮຽນນີ້:</u> ບອກໃຫ້ເຮົາຮູ້ວ່າພຣະເຢຊູໄດ້ສະແດງຊີວິດການຢູ່ກິນເພື່ອພິສູດໃນການປະກາດເຣື່ອງແຜ່ນດິນສວັນມາໃກ້ແລ້ວນັ້ນມີຄວາມຈິງ.

<u>ຄຳຖາມເພື່ອການສຳຣວດ</u> ການສະເດັດມາຂອງພຣະເຢຊູຄຣິດມີຄວາມຫມາຍຢ່າງໃດ?

<u>ຈຸດປະສົງຂອງບົດຮຽນນີ້:</u> ບອກໃຫ້ຮູ້ວ່າພຣະເຢຊູແມ່ນໃຜແລະພຣະອົງມີຄວາມສຳຄັນຫລາຍປານໃດ.

<u>ຫນ້າທີ່ສຳຄັນຂອງຄຣິສຕຽນທຸກຄົນ</u>

- ນຳຂ່າວປະເສີດເຣື່ອງພຣະເຢຊູຄຣິດໄປເຖິງທຸກຄົນ.
- ຊ່ອຍເຫລືອເບິ່ງແຍງທຸກຄົນໃນພຣະນາມແຫ່ງພຣະເຢຊູຄຣິດທີ່ຕົກຢູ່ໃນຄວາມຂັດສົນ.
- ຈັດຕຽມໄພ່ພົນຂອງພຣະເຈົ້າໃຫ້ຕຽມພ້ອມໃນການປະກາດໃນໂບດແລະອອກໄປປະກາດທົ່ວໂລກ.
- ເສີມສ້າງຄອບຄົວຄຣິສຕຽນໃຫ້ເຂັ້ມແຂງ ແລະສ້າງຕັ້ງໂບດເລື້ອຍໄປ.

## <u>ແຜນການສອນ</u>

1. <u>ແບ່ງນັກຮຽນເປັນສີ່ກຸ່ມດັ່ງນີ້:</u>

ກ. <u>ກຸ່ມທີ່ນຶ່ງ</u> ເປັນໂຢຮັນ ໃຫ້ອ່ານມາຣະໂກ 1:9-13. ແລະຂຽນຄຳຖາມໃຫ້ດັ່ງຕໍ່ໄປນີ້:

- ທ່ານມີທ່າທີແນວໃດໃນເມື່ອພຣະເຢຊູປາກົດຕໍ່ທ່ານໃນຂນະທີ່ກຳລັງໃຫ້ບັບຕິສະມາປະຊາຊົນຢູ່?
- ຫລັງຈາກໃຫ້ບັບຕິສະມາພຣະເຢຊູແລ້ວທ່ານຮູ້ສຶກແນວໃດ?
- ທ່ານຄິດວ່າເປັນຫຍັງພຣະເຢຊູຈຶ່ງບັບຕິສະມາ?
- ຫລັງຈາກພຣະເຢຊູຮັບບັບຕິສະມາແລ້ວເປັນຫຍັງພຣະອົງຈຶ່ງເຂົ້າໄປໃນປ່າ? ໃນປ່ານັ້ນມີຫຍັງເກີດຂື້ນ?

ຂ. <u>ກຸ່ມທີ່ສອງ</u> ເປັນປະຊາຊົນ ໃຫ້ອ່ານ ມາຣະໂກ1:14-15 ແລະຂຽນຄຳຖາມໃຫ້ດັ່ງນີ້:

- ທ່ານໄດ້ຍິນພຣະເຢຊູປະກາດເຣື່ອງອັນໃດ?
- ເມື່ອທ່ານໄດ້ຍິນຄຳປະກາດຂອງພຣະເຢຊູແລ້ວພວກເຂົາມີຄວາມຮູ້ສຶກແນວໃດ?

ຄ. <u>ກຸ່ມທີ່ສາມ</u> ເປັນບຸກຄົນບໍ່ເຊື່ອ ໃຫ້ອ່ານ ມາຣະໂກ 1:29-34 ແລະຂຽນຄຳຖາມໃຫ້ດັ່ງນີ້:

- ເມື່ອໄດ້ຍິນຄຳເທສນາຂອງພຣະເຢຊູແລ້ວທ່ານຮູ້ສຶກແນວໃດ?

- ທ່ານຄິດແນວໃດເມື່ອເຫັນພຣະເຢຊູປົວແມ່ເມັຽຂອງຊີໂມນ?
- ບັນດາຄົນປ່ວຍແລະຄົນທີ່ຜີສິງມາຫາພຣະເຢຊູທ່ານມີຄວາມຮູ້ສຶກຢ່າງໃດ?
- ກ່ອນຮຸ່ງເຊົ້າຍັງມືດຢູ່ພຣະເຢຊູອອກໄປແລ້ວເປັນຫຍັງເພິ່ນຈຶ່ງບໍ່ກັບຄືນມາປົວຄົນປ່ວຍທີ່ມາຕາມພາຍຫລັງ?

ງ. <u>ກຸ່ມທີສີ່</u> ເປັນຊີໂມນ ໃຫ້ອ່ານ ມາຣະໂກ 1:35-39 ແລະຂຽນຄຳຖາມໃຫ້ດັ່ງນີ້:

- ເປັນຫຍັງທ່ານຈຶ່ງອອກໄປເອີ້ນພຣະເຢຊູ ເມື່ອທ່ານຮູ້ວ່າພຣະອົງກຳລັງອ້ອນວອນຢູ່?
- ເມື່ອໄປເອີ້ນເພິ່ນແລ້ວ ເພິ່ນຕອບທ່ານແນວໃດ?
- ທ່ານຄິດແນວໃດກັບຄຳຕອບຂອງເພິ່ນ?

**2. <u>ໃຫ້ເວລານັກຮຽນປະມານ 5 ນາທີ</u>** ຈາກນັ້ນໃຫ້ແຕ່ລະກຸ່ມມາລາຍງານໂດຍໃຫ້ຄົນໃນກຸ່ມຜູ້ນຶ່ງເປັນຜູ້ອ່ານຄຳຖາມແລະໃຫ້ຫົວໜ້າກຸ່ມເປັນຄົນຕອບຕໍ່ໜ້ານັກຮຽນທັງໝົດ.

3. <u>ວັກທີ 1 ພຣະເຢຊູຕຽມຕົວປະກາດ</u> (1:9-13)
   ກ. ຖາມນັກຮຽນເປັນຫຍັງພຣະເຢຊູຈຶ່ງຮັບບັບຕິສະມາ? ແລະຂຽນຄຳຕອບນັກຮຽນລົງກະດານ.
   ຂ. "ທ່ານເປັນບຸດທີ່ຮັກຂອງເຮົາເຮົາຊອບໃຈໃນທ່ານຫລາຍ" ທີ່ພຣະເຈົ້າກ່າວ ທ່ານເຂົ້າໃຈແນວໃດ?

4. <u>ວັກທີ 2 ການປະກາດຂອງພຣະເຢຊູ</u> (1:14-15)
   ກ. ພຣະເຢຊູເລີ້ມຕົ້ນການປະກາດແນວໃດ?
   ຂ. ຄຳວ່າຖິ້ມໃຈເກົ່າເອົາໃຈໃໝ່ມີຄວາມໝາຍວ່າຢ່າງໃດ?

5. <u>ວັກທີ 3 ຣິດອຳນາດພຣະເຢຊູ</u> (1:29-34)
   ກ. ນອກຈາກປະກາດເຣື່ອງແຜ່ນດິນສວັນມາໃກ້ແລ້ວພຣະເຢຊູເຮັດຫຍັງແດ່?
   ຂ. ໃນແລງວັນນັ້ນຄົນທັງຫລາຍມາອັ່ງອໍທີ່ປະຕູເຮືອນທີ່ພຣະເຢຊູພັກເຊົາເຮັດຫຍັງ?

6. <u>ວັກທີ 4 ຈຸດປະສົງຂອງການປະກາດ</u> (1:35-39)
   ກ. ເມື່ອຕອນເຊົ້າມືດພຣະເຢຊູອອກໄປເຮັດຫຍັງ?
   ຂ. ສາວົກອອກໄປນຳຫາພຣະອົງເຮັດຫຍັງ? ແລະພຣະອົງຊົງຕອບສາວົກແນວໃດ?
   <u>ສລຸບ:</u> ການປະກາດເຣື່ອງແຜ່ນດິນສວັນຂອງພຣະເຈົ້າແມ່ນພຣະປະສົງອັນສຳຄັນອັນແຣກຂອງພຣະເຢຊູ. ດັ່ງນັ້ນພຣະອົງຈຶ່ງສັ່ງໃຫ້ເຮົາທັງຫລາຍປະກາດ.

# ຄໍາແນະນໍາຄູສອນ
# ບົດຮຽນທີ 2
# ຜູ້ນໍາສາສນາຊາດຢິວປອງຮ້າຍພຣະເຢຊູ

---

<u>ຂໍ້ພຣະຄັມພີສໍາລັບບົດຮຽນນີ້:</u> ມາຣະໂກ 2:1-17; 3:1-6

<u>ຂໍ້ພຣະຄັມທັງຫມົດສໍາລັບບົດຮຽນນີ້:</u> ມາຣະໂກ 2:1--3:6

<u>ຈຸດສໍາຄັນຂອງບົດຮຽນນີ້:</u> ພຣະເຢຊູຊົງເຕືອນຜູ້ນໍາສາສນາຊາດຢິວຢ່າຄິດຊົ່ວໃນໃຈ.

<u>ຄໍາຖາມເພື່ອການສໍາຣວດ</u> ພຣະເຢຊູຊົງແກ້ໄຂບັນຫາແນວໃດ?

<u>ຈຸດປະສົງຂອງບົດຮຽນນີ້:</u> ບອກໃຫ້ຮູ້ວ່າພຣະເຢຊູມີບັນຫາກ່ອນພວກເຮົາແລ້ວຢ່າສູ້ຍ້ານ.

<u>ໜ້າທີ່ສໍາຄັນຂອງຄຣິສຕຽນທຸກຄົນ</u>

- ນໍາຂ່າວປະເສີດເຣື່ອງພຣະເຢຊູຄຣິດໄປເຖິງທຸກຄົນ.
- ຊ່ອຍເຫລືອເບິ່ງແຍງທຸກຄົນໃນພຣະນາມແຫ່ງພຣະເຢຊູຄຣິດທີ່ຕົກຢູ່ໃນຄວາມຂັດສົນ.
- ຈັດຕຽມໄພ່ພົນຂອງພຣະເຈົ້າໃຫ້ຕຽມພ້ອມໃນການປະກາດໃນໂບດແລະອອກໄປປະກາດທົ່ວໂລກ.

1. ຖາມນັກຮຽນ ແມ່ນຫຍັງເປັນຕົ້ນເຫດຂອງການທະເລາະວິວາດກັນ. ໃນບ້ານເຮືອນຕລອດເຖິງໃນໂບດ?

2. ແບ່ງນັກຮຽນອອກເປັນກຸ່ມລະສອງຫລືສາມຄົນ. ໃຫ້ກຸ່ມສົນທະນາກັນກັບຄໍາທີ່ຂຽນໃນກະດານດັ່ງນີ້:
   - ໂບດຂອງເຮົາແຕ່ກ່ອນນີ້ເຄີຍເຮັດຫຍັງແດ່?
   - ນັບແຕ່ມີອາຈານໃຫມ່ມານີ້ໂບດເຮົາປ່ຽນເປັນຮູບໄປແນວໃດ?
   - ການປ່ຽນນີ້ດີຫລືບໍ່ດີ?

3. ຫລັງຈາກໃຫ້ເວລານັກຮຽນ 5 ນາທີເພື່ອສົນທະນາກັນແລ້ວ ໃຫ້ມາລາຍງານຈັກສອງຫລືສາມຄົນ.

4. ບອກນັກຮຽນຮູ້ວ່າເມື່ອບໍ່ມີພຣະເຢຊູມາກໍບໍ່ມີຫຍັງປ່ຽນແປງ ແຕ່ເມື່ອພຣະອົງມາຫລາຍຢ່າງກໍປ່ຽນ ເປັນຕົ້ນເຫດໃຫ້ມີການຂັດແຍ່ງກັນກັບຫົວຫນ້າສາສນາທ້ອງຖິ່ນ ຄືພວກຟາຣີຊາຍບໍ່ມັກການກະທໍາຂອງພຣະເຢຊູ.

5. ແບ່ງນັກຮຽນເປັນສາມກຸ່ມ ແລະໃຫ້ຫົວຂໍ້ດັ່ງນີ້:
   - <u>ກຸ່ມທີ 1</u> ຊົງໂຜດຄົນເປ້ຍໃຫ້ຄືນດີ (2:1-12)
     1. ສົມມຸດວ່າເຮົາຢູ່ໃນຖ້າມກາງຄົນຫລວງຫລາຍແນວນີ້ເຮົາຄິດວ່າເຮົາເປັນໃຜ?
     2. ເຣື່ອງຄົນເປ້ຍຄົນນີ້ສອນຫຍັງທ່ານແດ່?

- <u>ກຸ່ມທີ 2</u> ຊີວິດເອີ້ນເລວີ (2:13-17)
  1. ຂະນະທີ່ພຣະເຢຊູເອີ້ນຄົນເລວີໃຫ້ຕິດຕາມພຣະອົງນັ້ນຄົນເລວີກຳລັງເຮັດຫຍັງຢູ່?
  2. ທ່ານເດກຳລັງເຮັດຫຍັງເວລາພຣະເຢຊູຮ້ອງທ່ານ?
  3. ເມື່ອພຣະເຢຊູຮ້ອງຄົນເວລີແລ້ວລາວເຮັດແນວໃດກັບເພື່ອນຝູງຂອງລາວ?
  4. ທ່ານໄດ້ເຮັດຄືຄົນເລວີບໍ່?

- <u>ກຸ່ມທີ 3</u> ຊີວິໂຜດຊາຍມືລີບ (3:1-6)
  1. ໃນວັນຊະບາໂຕພຣະເຢຊູໄດ້ເຮັດພິດກົດ ດ້ວຍການປົວຄົນມືລີບ ສຳລັບທ່ານຈະເຮັດພິດກົດແນວໃດ?
  2. ໃນວັນສະບາໂຕກົດແມ່ນສັ່ງໃຫ້ທຸກຄົນເຂົ້ານະມັສການ ທ່ານຄິດວ່າການອອກໄປປະກາດພິດບໍ່?
  3. ຕາມຄວາມເຫັນຂອງທ່ານອັນໃດສົມຄວນເຮັດແລະບໍ່ສົມຄວນເຮັດໃນວັນຊະບາໂຕ?

6. ໃຫ້ເວລາແຕ່ລະກຸ່ມ 10 ນາທີເພື່ອຄົ້ນຄວ້າ ແລະໃຫ້ມາລາຍງານ ກຸ່ມລະ 5 ນາທີ.

7. ຄຣູນຳພານັກຮຽນສລຸບພົນຕາມບົດຮຽນບົດທີ 2.

8. ຖາມນັກຮຽນ ດັ່ງນີ້.
   ກ. ດ້ວຍເຫດໃດຄົນເປ້ຍຈຶ່ງໄປຫາພຣະເຢຊູ? ເມື່ອເຂົ້າໄປບໍ່ໄດ້ເຂົາເຮັດແນວໃດຈຶ່ງເຂົ້າໄປໄດ້?
   ຂ. ວາດພາບຄົນເປ້ຍຍ່າງໄດ້ຄັ້ງແຮກໃນຊີວິດຈະເປັນແນວໃດ?
   ຄ. ຄົນສະບາຍບໍ່ຕ້ອງການໝໍຢາ ແຕ່ຄົນເຈັບຕ້ອງການໝໍ ເຮົາບໍ່ໄດ້ມາເພື່ອຈະເອີ້ນເອົາຄົນສິນທັມ ແຕ່ມາເອີ້ນເອົາຄົນນອກສິນທັມ ທີ່ພຣະເຢຊູກ່າວໝາຍຄວາມວ່າແນວໃດ?
   ງ. ມີສອງພວກຕິດຕາມພຣະເຢຊູນັ້ນ ມີພວກໃດແດ່? ແຕ່ລະພວກທີ່ຕິດຕາມແຕກຕ່າງກັນຢ່າງໃດ?
   ຈ. ເປັນຫຍັງພຣະເຢຊູຈຶ່ງບໍ່ລໍຖ້າຈົນພົ້ນວັນຊະບາໂຕແລ້ວຈຶ່ງເຮັດການອັສຈັນເຫລົ່ານີ້?
   ສ. ເປັນຫຍັງພວກຟາຣີຊາຍຈຶ່ງບໍ່ພໍໃຈແລະປອງຂ້າພຣະອົງເສັຽ?
   ຊ. ມີສອງພວກທີ່ຕິດຕາມພຣະເຢຊູນັ້ນ ທ່ານເດແມ່ນພວກໃດ?
   ຍ. ເຮົາທັງຫລາຍຈະນຳເຣື່ອງນີ້ໄປບອກກັບຍາດພີ່ນ້ອງເຮົານີ້ໃດ?

9. ຄຣູຖາມນັກຮຽນເຣື່ອງການປະກາດຂອງທ່ານມີຄົນເຂົ້າໃຈພິດບໍ່? ຄຣູນຳພາການອ້ອນວອນປິດ. ໃນນັ້ນໃຫ້ອ້ອນວອນເພື່ອຜູ້ປະກາດທຸກຄົນແລະເພື່ອຜູ້ຂັດແຍ່ງໃຫ້ເຂົ້າໃຈກັນ, ຢ່າຂັດແຍ່ງເໝືອນຜູ້ນຳສາສນາຢິວຂັດແຍ່ງພຣະເຢຊູ.

## ຄຳແນະນຳຄຣູສອນ

## ບົດຮຽນທີ 3

## ກຸ່ມຕິດຕາມພຣະເຢຊູ

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ມາຣະໂກ 3: 7-35

ຂໍ້ພຣະຄັມທັງຫມົດສຳລັບບົດຮຽນນີ້: ມາຣະໂກ 3: 7-35

ຈຸດສຳຄັນຂອງບົດຮຽນນີ້: ພຣະເຢຊູຊົງແຕ່ງຕັ້ງທ່ານໃຫ້ເຮັດພາຣະກິດຂອງພຣະບິດາ

ຄຳຖາມເພື່ອການສຳຣວດ ເຮົາຈະຕອບສນອງໃນການແຕ່ງຕັ້ງພຣະອົງແນວໃດ?

ຈຸດປະສົງຂອງບົດຮຽນນີ້: ເພື່ອບອກໃຫ້ຮູ້ວ່າທຸກຄົນທີ່ເຮັດພາຣະກິດຂອງພຣະເຈົ້າແມ່ນຄອບຄົວພຣະເຢຊູ.

ຫນ້າທີ່ສຳຄັນຂອງຄຣິສຕຽນທຸກຄົນ

- ນຳຂ່າວປະເສີດເຣື່ອງພຣະເຢຊູຄຣິດໄປເຖິງທຸກຄົນ.
- ຊ່ອຍເຫລືອເບິ່ງແຍງທຸກຄົນໃນພຣະນາມແຫ່ງພຣະເຢຊູຄຣິດທີ່ຕົກຢູ່ໃນຄວາມຂັດສົນ.
- ຈັດຕຽມໄພ່ພົນຂອງພຣະເຈົ້າໃຫ້ຕຽມພ້ອມໃນການປະກາດໃນໂບດແລະອອກໄປປະກາດທົ່ວໂລກ.
- ປັບປຸງຄອບຄົວຄຣິສຕຽນໃຫ້ເຂັ້ມແຂງ.

### ແຜນສຳລັບການສອນ

1. ໃຫ້ຜູ້ນຶ່ງອ່ານ (**ມາຣະໂກ 3:7-12 ຜູ້ຕິດຕາມພຣະເຢຊູ**) ແລະໃຫ້ທຸກຄົນໃນຫ້ອງສົມມຸດວ່າເປັນປະຊາຊົນແຄມທະເລສາບ.

   ກ. ເມື່ອອ່ານຈົບຄຣູຈະຖາມຄຳຖາມດັ່ງນີ້:

   - ເປັນຫຍັງທ່ານຈຶ່ງຕິດຕາມພຣະເຢຊູ?
   - ທ່ານຮູ້ສຶກແນວໃດເມື່ອພຣະເຢຊູຊົງຫ້າມບໍ່ໃຫ້ຜີປະກາດພຣະນາມຂອງພຣະອົງ?.

   ຂ. ຈາກນັ້ນຄຣູເລີ້ມຕົ້ນສອນຫົວຂໍ້ທີ 1 (ຜູ້ຕິດຕາມພຣະເຢຊູ 3:7-12)

   - ອະທິບາຍກຸ່ມຕິດຕາມພຣະເຢຊູສີ່ກຸ່ມ.
   - ຖາມນັກຮຽນທ່ານຄິດວ່າທ່ານເປັນກຸ່ມໃດ? ເປັນຫຍັງຈຶ່ງຫມັ້ນໃຈວ່າເປັນກຸ່ມທີ 1?.

2. ໃຫ້ຜູ້ນຶ່ງອ່ານ (**ມາຣະໂກ 3:13-19 ຊົງແຕ່ງຕັ້ງສາວົກ**). ເປັນຫົວຂໍ້ທີສອງ.

   ກ. ເມື່ອອ່ານຈົບຄຣູຖາມຄຳຖາມດັ່ງນີ້:

   - ເປັນຫຍັງພຣະເຢຊູຈຶ່ງແຕ່ງຕັ້ງສາວົກສິບສອງຄົນເທົ່ານັ້ນ?

- ພຣະເຢຊູຊົງແຕ່ງຕັ້ງສາວົກທັງສິບສອງຄົນໄວ້ເຮັດຫຍັງແດ່?
- ພວກສິບສອງຄົນມີທ່າທີແນວໃດຕໍ່ການແຕ່ງຕັ້ງຂອງພຣະອົງ?
- ເປັນຫຍັງພຣະເຢຊູເລືອກເອົາທ່ານມາເປັນສາວົກແລະບໍ່ເລືອກເອົາໝູ່ເພື່ອນຂອງທ່ານຜູ້ມີຄວາມຮູ້ແລະສລາດກວ່າທ່ານ?
- ທ່ານຮູ້ສຶກວ່າພຣະເຈົ້າໄດ້ເລືອກເອົາທ່ານມາເປັນຜູ້ເຊື່ອແລະຮັບໃຊ້ພຣະອົງບໍ່?
- ທ່ານໄດ້ຮຽນຫຍັງແດ່ໃນການຮຽກເອີ້ນຂອງພຣະເຢຊູ?

3. ໃຫ້ຜູ້ນຶ່ງອ່ານ (**ມາຣະໂກ 3:31-35 <u>ແມ່ແລະນ້ອງຂອງພຣະເຢຊູ</u>**). (ເປັນຂໍ້ວຂໍ້ທີສາມ).

ກ. ເມື່ອອ່ານຈົບຄຣູຂໍໃຫ້ນັກຮຽນອອກຄໍາເຫັນເຣື່ອງມາຣີອາມາຫາພຣະເຢຊູ.

ຂ. ຖາມນັກຮຽນ.

- ເປັນຫຍັງມາຣີອາແລະພວກນ້ອງຂອງພຣະເຢຊູຈຶ່ງມາຫາພຣະອົງອີງຕາມຍາດມິດຂອງພຣະອົງໃນ (ມາຣະໂກ 3:21).
- ເມື່ອເຂົ້າໄປຫາພຣະອົງບໍ່ໄດ້ເພາະຄົນໜາແໜ້ນມາຣີອາເຮັດແນວໃດ?
- ມາຣີອາເຂົ້າໄປຫາພຣະອົງບໍ່ໄດ້ ຈຶ່ງສັ່ງຄົນໄປຫາພຣະອົງສອນຫຍັງທ່ານແດ່?
- ພຣະເຢຊູຕອບວ່າ "ຜູ້ໃດຕາມນໍ້າພຣະທັຍພຣະເຈົ້າ ຜູ້ນັ້ນແຫລະເປັນນ້ອງຊາຍ, ນ້ອງສາວແລະເປັນມານດາຂອງເຮົາ" ໝາຍຄວາມວ່າແນວໃດ?
- ຄໍາເວົ້າຂອງພຣະເຢຊູສອນຫຍັງເຮົາແດ່?

<u>ໝາຍເຫດ:</u> ຢ່າເຂົ້າໃຈຜິດວ່າພຣະເຢຊູປະຕິເສດແມ່ແລະນ້ອງສາວຂອງພຣະອົງ. ພຣະອົງໃຫ້ກຽດມາຣີອາສເມີ. ແລະພຣະອົງກໍຍົກພຣະກຽດພຣະເຈົ້າໃນຂນະທີ່ປະກາດເຣື່ອຣາຊອານາຈັກສວັນຂອງພຣະເຈົ້າ.

4. ສລຸບບົດຮຽນ: ມີຄົນສີ່ປະເພດຕິດຕາມພຣະເຢຊູ.

1. ຫາກທ່ານເປັນຜູ້ຕິດຕາມແລ້ວ ທ່ານເປັນຜູ້ຕິດຕາມປະເພດໃດໃນຈໍານວນສີ່ພວກທີ່ຕິດຕາມ?
2. ທ່ານເປັນຜູ້ຕິດຕາມພຣະເຢຊູແລ້ວບໍ່?ຫາກຍັງບໍ່ທັນຕິດຕາມພຣະອົງຊົງເລືອກທ່ານໃຫ້ຕິດຕາມແຕ່ດຽວນີ້.
3. ບອກນັກຮຽນວ່າພຣະອົງຊົງຮັກທ່ານຫລາຍ ຂ້າພະເຈົ້າເຊື່ອວ່າພຣະອົງຊົງເລືອກທ່ານໃຫ້ຕິດຕາມພຣະອົງປະເພດທີ 1 ຄືເປັນສາວົກຂອງພຣະອົງ ມີໃຜຢາກຕິດຕາມພຣະອົງບໍ່ ຂໍໃຫ້ຍົກມືຂຶ້ນ.
4. ຄຣູນໍາພາການອ້ອນວອນຖວາຍຕົວ ແລະອ້ອນວອນປິດດ້ວຍການຂອບພຣະຄຸນ.

# <u>ຄຳແນະນຳຄຣູສອນ</u>
# <u>ບົດຮຽນທີ 4</u>
# <u>ຊົງສອນເປັນຄຳອຸປມາ</u>

---

<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u> ມາຣະໂກ 4:1-20
<u>ຂໍ້ພຣະຄັມທັງໝົດສຳລັບບົດຮຽນນີ້:</u> ມາຣະໂກ 4:1-34
<u>ຈຸດສຳຄັນຂອງບົດຮຽນນີ້:</u> ພຣະເຢຊູຊົງສອນເປັນຄຳອຸປະມາເຣື່ອງຊີວິດນິຣັນ.
<u>ຄຳຖາມເພື່ອການສຳຣວດ</u> ເຮົາຮູ້ໄດ້ແນວໃດວ່າພຣະເຢຊູມາຈາກພຣະເຈົ້າ.
<u>ຈຸດປະສົງຂອງບົດຮຽນນີ້:</u> ບອກໃຫ້ຮູ້ວ່າພຣະເຈົ້າມີພຣະປະສົງໃຫ້ທຸກຄົນມີຊີວິດໃນແຜ່ນດິນຂອງພຣະອົງ.

<u>ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນ</u>

- ນຳຂ່າວປະເສີດເຣື່ອງພຣະເຢຊູຄຣິດໄປເຖິງທຸກຄົນ.
- ຈັດຕຽມໄພ່ພົນຂອງພຣະເຈົ້າໃຫ້ຕຽມພ້ອມໃນການປະກາດໃນໂບດແລະອອກໄປປະກາດທົ່ວໂລກ.
- ປັບປຸງຄອບຄົວຄຣິສຕຽນໃຫ້ເຂັ້ມແຂງ.

## <u>ແຜນສຳລັບການສອນ</u>

1. ເມື່ອນັກຮຽນມາເຖິງແລ້ວຄຣູນຳພາການອ້ອນວອນ ແລະໃຫ້ຜູ້ນຶ່ງອ່ານ ມາຣະໂກ 4:1-9. **<u>ພຣະເຢຊູເລົ່າເຣື່ອງ ເປັນຫົວຂໍ້ທີ 1</u>**
2. ຕຽມຈອກພູາສຕິກແນວສ່ອງເຫັນຂ້າງໃນສີ່ຈອກດັ່ງນີ້:
   - ຈອກທີນຶ່ງເອົາເສດຖຸມີນອາດຈະເປັນຢາງດຳປົນກັບຫີນ ຫລືທາງຊີເມັນກໍໄດ້ໃສ່ຈອກນັ້ນ.
   - ຈອກທີສອງເອົາດິນແລະຫີນປົນກັນໃສ່ຈອກນັ້ນ.
   - ຈອກທີສາມເອົາດິນທີ່ມີຫຍ້າປົກຄຸມຫລືຊອກເອົາສິ່ງທີ່ມີໜາມປົກໜ້າດິນໃສ່ຈອກນັ້ນ. .
   - ຈອກທີສີ່ເອົາດິນດີລະອຽດໃສ່ຈອກນັ້ນ. .

2. ບອກນັກຮຽນວ່າ ພຣະເຢຊູໃຊ້ຄຳປຽບທຽບດິນທີ່ຢູ່ໃນຈອກທັງສີ່ນີ້ແມ່ນຈິດໃຈຂອງມະນຸດ.
   - ເອົາໃນຖົ່ວແຫ້ງມາວາງໃສ່ແຕ່ລະຈອກ (ໃນຖົ່ວໝາຍເຖິງພຣະທັມຂອງພຣະເຈົ້າທີ່ເຮົາໄດ້ຍິນທຸກ ວັນອາທິດ).
   - ຖາມນັກຮຽນວ່າ ທ່ານຄິດວ່າໃນຖົ່ວຈອກໃດຈະໃຫຍ່ແລະບໍ່ໃຫຍ່? ເປັນຫຍັງ?
3. ບອກນັກຮຽນວ່າພຣະເຢຊູໃຊ້ວິທີທາງຕ່າງໆເພື່ອໃຫ້ຜູ້ຟັງເຂົ້າໃຈ, ໃຫ້ນັກຮຽນແຕ່ລະຄົນອ່ານ ມາຣະໂກ 4:1-9 ໃນໃຈຈັກ 5 ນາທີ ຢ່າງງຽບໆ.

- ຖາມນັກຮຽນ ໃນຈຳນວນດິນໃນຈອກທັງສີ່ຈອກນີ້ທ່ານຄິດວ່າທ່ານແມ່ນຈອກໃດ?
- ທ່ານແນ່ໃຈໄດ້ແນວໃດວ່າທ່ານເປັນດິນດີນັ້ນ?

4. ຂໍໃຫ້ຜູ້ນຶ່ງອ່ານ ມາຣະໂກ 4: 10-12 **<u>ຈຸດປະສົງຄຳອຸປະມາ ເປັນຫົວຂໍ້ທີ 2</u>**

- ເປັນຫຍັງພວກສາວົກຈຶ່ງບໍ່ເຂົ້າໃຈຄຳອຸປະມາຂອງພຣະເຢຊູ?
- ພຣະເຢຊູບໍ່ໄດ້ເລົ່າຄຳອຸປະມາເພື່ອປິດບັງຜູ້ໃດ, ແຕ່ເລົ່າເພື່ອອະທິບາຍໃຫ້ເຫັນຮູບພາບຈິດໃດຂອງຜູ້ຟັງ.
- ບອກນັກຮຽນ ຂໍ້ຄວາມເລິກລັບເຣື່ອງຣາຊອານາຈັກຂອງພຣະເຈົ້າ ໄດ້ຊົງໂຜດໃຫ້ທ່ານຮູ້ແລ້ວ ແຕ່ຄຳອຸປະມາຂອງພຣະອົງກ່າວໄວ້ສຳລັບຄົນຝ່າຍນອກ (ຜູ້ທີ່ບໍ່ເຊື່ອ) ທີ່ສາວົກບໍ່ເຂົ້າໃຈແມ່ນບໍ່ເຂົ້າໃຈໃນຄຳອຸປະມາເທົ່ານັ້ນ ແຕ່ສ່ວນເຣື່ອງແຜ່ນດິນສວັນນັ້ນສາວົກເຂົ້າໃຈແລ້ວ.
- ສິ່ງທີ່ເຮົາຄວນຮຽນຮູ້ນັ້ນຄື ຈົ່ງຖາມຄືສາວົກຖາມ ຫາກເຮົາບໍ່ເຂົ້າໃຈໃນເຣື່ອງພຣະຄັມພີ ຢ່າຄິດເອົາເອງ ຫລື ເມີນເສີຍຕໍ່ສິ່ງທີ່ບໍ່ເຂົ້າໃຈ.

5. ໃຫ້ຜູ້ນຶ່ງອ່ານ (4:13-20) **<u>ຊົງອະທິບາຍໃຫ້ສາວົກຟັງ.</u>**

ພຣະເຢຊູຊົງກ່າວເປັນຄຳອຸປະມາເຖິງພຣະອົງເອງເປັນຄົນຫວ່ານພືດ (ຄົນເຮັດໄຮ່ເຮັດນາ) ຄືພຣະອົງເທສນາຄ້າຍຄືກັບພໍ່ໄຮ່ພໍ່ນາຫວ່ານເຂົ້າໃນທົ່ງໄຮ່ນາຂອງຕົນ ແຕ່ລະເມັດພືດຕົກລົງດິນໃນບ່ອນແຕກຕ່າງກັນ. ໃນຄຳອຸປະມາແປວ່າດັ່ງນີ້: ເບິ່ງບົດຮຽນໃນຫົວຂໍ້ສຸດທ້າຍ ມີຫົວຂໍ້ວ່າ "**<u>ຊົງອະທິບາຍໃຫ້ສາວົກຟັງ.</u>**"

**<u>ຄຳຖາມ</u>**

1. ພຣະເຢຊູເລົ່າຄຳອຸປະມາເຣື່ອງດິນພຣະອົງຫມາຍເຖິງຫຍັງ?

2. ເປັນຫຍັງພຣະອົງຈຶ່ງເລົ່າຄຳອຸປະມາເຣື່ອງຜູ້ຫວ່ານ?

3. ການເປັນຄຣິສຕຽນເຮົາມີບັນຫາທີ່ຈະເຈົ້າໃຈຄຳອຸປະມາຂອງພຣະເຢຊູບໍ່?

4. ຫາກເຮົາມີບັນຫາບໍ່ເຂົ້າໃຈເຮົາຄວນເຮັດແນວໃດ?

5. ຂໍ້ຄວາມເລິກລັບເຣື່ອງຣາຊອານາຈັກຂອງພຣະເຈົ້າ ໄດ້ຊົງໂຜດໃຫ້ທ່ານຮູ້ແລ້ວ ຫມາຍຄວາມວ່າແນວໃດ?

6. ຄຣູນຳພາການອ້ອນວອນຂອບພຣະຄຸນ ແລະທ້າທາຍນັກຮຽນໄປສຳຣວດຕົນເອງວ່າເປັນດິນຊະນິດໃດ?

# <u>ບົດແນະນຳການສິດສອນ</u>

# <u>ບົດຮຽນທີ 5</u>

# <u>ພະລັງອຳນາດຂອງພຣະເຢຊູ</u>

---

**<u>ຂໍ້ພຣະຄຳພີສຳລັບບົດຮຽນ:</u>** ມາຣະໂກ 4:35-41; 5:21-43

**<u>ຂໍ້ພຣະຄຳພີສຳລັບເບື້ອງຫລັງ:</u>** ມາຣະໂກ 4:35-5:43

**<u>ຈຸດສຳຄັນຂອງບົດຮຽນນີ້:</u>** ພຣະເຢຊູມີພະລັງອຳນາດເໜືອກວ່າພາຍຸ, ພຍາດໂຣຄາ ແລະຄວາມຕາຍຈຶ່ງຢັ້ງຢືນໃຫ້ພວກເຮົາຮູ້ວ່າພຣະອົງສາມາດຊ່ວຍພວກເຮົາໄດ້ໃນຄາວລຳບາກ.

**<u>ຄຳຖາມເພື່ອການສຳຫລວດ:</u>** ພຣະເຢຊູສາມາດຊ່ວຍພວກເຮົາຫຍັງໄດ້ແດ່ໃນຄາວລຳບາກ?

**<u>ຈຸດປະສົງຂອງບົດຮຽນນີ້:</u>** ຈະຊ່ວຍໃຫ້ຂ້າພະເຈົ້າມີປະສົບການກັບຄວາມຮັກແລະເຫັນວ່າພຣະເຢຊູເປັນຫ່ວງຂ້າພະເຈົ້າໃນຄາວລຳບາກ.

## <u>ແຜນການສິດສອນ</u>

## <u>ຊີວິດສະພາບຕົວຈິງ</u>

1. ໃຫ້ນັກຮຽນໃນຫ້ອງອອກຄວາມຄິດເຫັນເປັນຄຳເວົ້າສັ້ນໆ ມີຫຍັງແດ່ທີ່ມີການພົວພັນກັບຄຳວ່າ "ພະລັງອຳນາດ". ຢ່າໄດ້ຕຳໜິຕິຫລືວ່າເຫັນພ້ອມກັບຄວາມຄິດຂອງພວກເຂົາ ແຕ່ຈົ່ງຂຽນຄຳເວົ້າຂອງແຕ່ລະຄົນໃສ່ກະດານ. ເຊັ່ນຕົວຢ່າງ: ສາຍໄຟພະລັງສູງກໍມີພະລັງສູງ , ກະແຈລົມຫລາຍໆຊະນິດກໍມີພະລັງ, ເຄື່ອງດື່ມກໍໃສ່ຊື່ວ່າ "ພາວເວີເຣດ" (Powerade) ທີ່ເສີມສ້າງພະລັງ.

2. ໃຫ້ຕັ້ງຄຳຖາມດັ່ງຕໍ່ໄປນີ້:
   - ຄຳວ່າ ພະລັງອຳນາດທີ່ຂຽນຢູ່ເທິງກະດານນີ້ມີຄວາມໝາຍຢ່າງໃດ? (ໝາຍເຖິງ ພະລັງງານ ເຊັ່ນພະລັງໄຟຟ້າ, ພະລັງຈາກພາຍຸ, ພະລັງການຄວບຄຸມ, ພະລັງອຳນາດ.)
   - ມີພະລັງອຳນາດດີບໍ່ຫລືວ່າບໍ່ດີ? (ຂຶ້ນຢູ່ກັບວ່າຜູ້ໃຊ້ໃນທາງທີ່ຖືກຫລືຜິດ)
   - ທ່ານເຄີຍຂາດພະລັງບໍ່ໃນຊີວິດຂອງທ່ານ? (ໃຫ້ໂອກາດແກ່ນັກຮຽນຕອບ.)ພວກເຂົາມີຄວາມຮູ້ສຶກຢ່າງໃດໃນບົດຮຽນມື້ນີ້?

3. ໃຫ້ນັກຮຽນອ່ານເບິ່ງຫົວຂໍ້ບົດຮຽນແຕ່ລະບົດໃນໜ່ວຍ ຈີຣະ8 ນີ້. ຫົວຂໍ້ບົດນີ້ແມ່ນ "ພະລັງອຳນາດຂອງພຣະເຢຊູ" ເພື່ອຈະຊ່ວຍໃຫ້ນັກຮຽນຮູ້ຫລ່ວງໜ້າວ່າ ພຣະເຢຊູຈະທຳກິຈການອັນໃດແດ່ໃນບົດຮຽນຕໍ່ໆໄປ.

## <u>ສຶກສາບົດຮຽນ</u>

4. ຈົ່ງແຍກຫ້ອງຮຽນອອກໃຫ້ເປັນສາມກຸ່ມ ແລະແຕ່ລະກຸ່ມໃຫ້ເວລາພວກເຂົາສຶກສາຫົວຂໍ້ທີ່ມອບໃຫ້ ເພື່ອພວກເຂົາຈະໄດ້ມາແບ່ງປັນໃຫ້ໝູ່ຟັງ.

   <u>ກຸ່ມທີໜຶ່ງ: ພະລັງອຳນາດເໜືອພັຍທັມມະຊາດ (ມາຣະໂກ 4:35-41)</u>
   ໃຫ້ແຕ່ລະກຸ່ມອ່ານພຣະຄັມພີຕາມທີ່ມອບໝາຍໃຫ້ແລະໃຫ້ຊອກຫາຄຳຕອບໃນຄຳຖາມດັ່ງຕໍ່ໄປນີ້:
   (ກ) ແມ່ນຜູ້ໃດເປັນບຸກຄົນໃນເຣື່ອງນີ້ ແລະເຫດການເກີດຂຶ້ນຢູ່ບ່ອນໃດ?

(ຂ) ມີເຫດການອັນໃດເກີດຂຶ້ນ ແລະພຣະເຢຊູໄດ້ກະທຳຢ່າງໃດໃນເຫດການນັ້ນ?
(ຄ) ພຣະເຢຊູໄດ້ແກ້ໄຂບັນຫາໃນເຫດການນັ້ນຢ່າງໃດ ແລະມີຜົນອັນໃດແດ່ຕາມມາຫລັງຈາກນັ້ນ?

<u>ກຸ່ມທີສອງ: ພະລັງອຳນາດເໜືອພຍາດໂຣຄາ (ມາຣະໂກ 5:21, 25-34)</u>
ໃຫ້ກຸ່ມນີ້ປະຕິບັດເໝືອນກັບກຸ່ມທີນຶ່ງ

<u>ກຸ່ມທີສາມ: ພະລັງອຳນາດເໜືອຄວາມຕາຍ (ມາຣະໂກ 5:21-24, 35-43)</u>
ໃຫ້ກຸ່ມນີ້ປະຕິບັດເໝືອນກັບກຸ່ມທີນຶ່ງ

5. ໃຫ້ຜູ້ນຶ່ງຈາກແຕ່ລະກຸ່ມອອກມາແບ່ງປັນໃຫ້ໝູ່ຟັງ.

**<u>ໝູນໃຊ້ໃນການກະທຳ</u>**

6. ໃຫ້ຕັ້ງຄຳຖາມວ່າ "ເປັນຄວາມຈິງໄດ້ຢ່າງໃດ ພຣະຄຳຂອງພຣະເຈົ້າສາມາດຊ່ອຍເຮົາໄດ້ໃນຂນະທີ່ພວກເຮົາກຳລັງຖືກພາຍຸຊັດໄປຊັດມາໃນຊີວິດຂອງພວກເຮົາ? ເຫດໃດພຣະເຢຊູຈິ່ງນອນຫລັບຢູ່ໃນຂນະທີ່ພາຍຸກຳລັງລົບກວນ ພຣະອົງບໍ່ເປັນຫ່ວງພວກເຮົາບໍ? ພວກເຮົາຈຳເປັນຕ້ອງອາສັຍພະລັງອຳນາດຂອງການອະທິຖານຊຶ່ງເປັນພຣະສັນຍາ ໃນຍາມພາຍຸເກີດຂຶ້ນໃນຊີວິດຂອງພວກເຮົາ.

7. ໃຫ້ຕັ້ງຄຳຖາມຂຶ້ນມາ ໃຊ້ພຣະຄັມພີແລະປະສົບການຊ່ອຍໃນການຕອບຄຳຖາມດັ່ງຕໍ່ໄປນີ້:
- ພຣະເຢຊູເປັນຫຍັງຈຶ່ງເປັນຫ່ວງຍິງຄົນນັ້ນທັ້ງໆທີ່ພຣະອົງຮູ້ວ່າຄວາມໄວ້ວາງໃຈເຊື່ອທີ່ລາວມີຈະຮັກສາລາວໃຫ້ດີຈາກພຍາດໄດ້? (ຄວາມໄວ້ວາງໃຈເຊື່ອຈະນຳໄປສູ່ການປະຕິບັດ. ຖ້າບໍ່ມີການປະຕິບັດ ກໍເໝືອນວ່າບໍ່ມີຄວາມໄວ້ວາງໃຈເຊື່ອນັ້ນເອງ.)
- ທ່ານມີຄວາມເຫັນຢ່າງໃດໃນຕົວພຣະເຢຊູ ເມື່ອພຣະອົງມີພະລັງອຳນາດເໜືອກວ່າສັພທຸກສິ່ງທີ່ໄດ້ຊົງສ້າງຂຶ້ນມາ?
- ມີການອັສຈັນອັນໃດແດ່ທີ່ເກີດຂຶ້ນກັບຊີວິດຂອງທ່ານ?
- ທ່ານຄິດພໍ້ບໍ່ມີຕົວຢ່າງອັນໃດແດ່ທີ່ພຣະເຢຊູໄດ້ຊ່ອຍໃຫ້ຄົນຕາຍເປັນຄືນມາ? (ລູກຊາຍຂອງແມ່ໝ້າຍ, ລູກາ 7:11-16; ເຣື່ອງຂອງລາຊະໂຣເປັນຄືນມາຈາກຕາຍ, ໂຢຮັນ 11:1-45).
- ພຣະເຢຊູໄດ້ສະແດງໃຫ້ເຫັນພະລັງອຳນາດເໜືອຄວາມຕາຍໃນເຫດການຕອນນີ້. ພຣະອົງຍັງມີພະລັງອຳນາດເໜືອຄວາມໂສກເສົ້າສຳລັບຜູ້ທີ່ສູນເສັຽຜູ້ທີ່ເຂົາຮັກ.
ທ່ານມີປະສົບການຢ່າງນີ້ໃນຊີວິດຂອງທ່ານບໍ່?
- ປະສົບການຂອງຢາຣີໂອຊ່ອຍພວກເຮົາໄດ້ຢ່າງໃດກ່ຽວກັບເຣື່ອງການຟື້ນຄືນມາຈາກຕາຍ?
ໃຫ້ກ່າວເຖິງການຄືນພຣະຊົນຂອງພຣະເຢຊູ ເພື່ອໃຫ້ຄວາມໝັ້ນໃຈແກ່ການຄືນມາຈາກຕາຍຂອງຄຣິສຕຽນ (ອ່ານໂຢຮັນ 11:25-26; 1ໂກຣິນໂທ 15:3-20).

8. ໃຫ້ບອກແກ່ນັກຮຽນວ່າ ພຣະເຢຊູບໍ່ພຽງແຕ່ສະແດງໃຫ້ເຫັນພະລັງອຳນາດຂອງພຣະອົງເທົ່ານັ້ນ ແຕ່ພຣະອົງຊົງສະແດງຄວາມເມດຕາແກ່ມະນຸດອີກດ້ວຍ. ໜູນໃຈໃຫ້ນັກຮຽນຄິດເຖິງຜູ້ໃດຜູ້ນຶ່ງທີ່ພວກເຂົາໄດ້ຕິດຕໍ່ພົວພັນໃນອາທິດທີ່ຜ່ານມາວ່າຄົນຜູ້ນັ້ນຕ້ອງການຄວາມເມດຕາແລະການເຫັນໃຈບໍ່? ພວກເຮົາຈະຊ່ອຍເຂົາໄດ້ຢ່າງໃດ?
ປິດຫ້ອງຮຽນດ້ວຍການອະທິຖານ. ໜູນໃຈໃຫ້ນັກຮຽນອະທິຖານເພື່ອຈະໄດ້ຮັບພະລັງອຳນາດທີ່ສາມາດນຳຄວາມຮັກຂອງພຣະເຢຊູອອກໄປເຖິງຜູ້ໃດຜູ້ນຶ່ງ.

# <u>ບົດແນະນຳການສິດສອນ</u>

# <u>ບົດຮຽນທີ 6</u>

# <u>ຄວາມສົງສານຂອງພຣະເຢຊູ</u>

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນ:</u>** ມາຣະໂກ 6:30-52
**<u>ຂໍ້ພຣະຄັມພີສຳລັບເບື້ອງຫລັງ:</u>** ມາຣະໂກ 6:1-52
**<u>ຈຸດສຳຄັນຂອງບົດຮຽນນີ້:</u>** ພຣະເຢຊູຊົງສະແດງຄວາມສົງສານຕໍ່ຜູ້ມີຄວາມຂັດສົນ.
**<u>ຄຳຖາມເພື່ອການສຳຫລວດ:</u>** ພວກເຮົາຈະປະຕິບັດຕໍ່ຜູ້ມີຄວາມຂັດສົນຢ່າງໃດ?
**<u>ຈຸດປະສົງຂອງບົດຮຽນນີ້:</u>** ຈະຊ່ອຍໃຫ້ຂ້າພະເຈົ້າປະຕິບັດຕໍ່ຜູ້ທີ່ມີຄວາມຂັດສົນຕາມແບບຢ່າງຂອງພຣະເຢຊູ.

## <u>ແຜນການສິດສອນ</u>

### <u>ຊີວິດສະພາບຕົວຈິງ</u>

1. ໃຫ້ຖາມນັກຮຽນໃນຫ້ອງວ່າມີຜູ້ໃດແດ່ໄດ້ນຳຄວາມຮັກຂອງພຣະເຢຊູອອກໄປໃຫ້ຜູ້ທີ່ຕ້ອງການ. ມີຜູ້ໃດແດ່ຕ້ອງການຈະແບ່ງປັນໃຫ້ຄົນໃນຫ້ອງຟັງ?
   (ທ່ານອາດຈະໂທຣະສັບຖາມນັກຮຽນຫລາຍໆຄົນລ່ວງຫນ້າກ່ອນ. ຢ່າງຫນ້ອຍໃຫ້ໄດ້ຜູ້ນຶ່ງມາລາຍງານໃຫ້ຫມູ່ຟັງ). ຫລັງຈາກນັ້ນກໍໃຫ້ສຶກສາບົດຮຽນອາທິດນີ້. ພວກເຮົາຈະທຳຢ່າງໃດເພື່ອຈະສະແດງອອກວ່າພວກເຮົາມີຄວາມສົງສານຕໍ່ຄົນອື່ນ.

2. ໃຫ້ໂທຣະສັບຫານັກຮຽນຄົນນຶ່ງລ່ວງຫນ້າກ່ອນວັນອາທິດ ເລົ່າເຣື່ອງໃນບົດຮຽນໃຫ້ລາວຟັງ. ແລ້ວຖາມລາວວ່າຜູ້ທີ່ຫລົງເສັຽບໍ່ຮູ້ຈັກກັບພຣະເຈົ້ານັ້ນ ພວກເຂົາຊອກຫາແລະຕ້ອງການຄວາມສົງສານຈາກຄຣິສຕະຈັກຫລືບໍ່ໃນສມັຍນີ້? ພວກເຮົາຈະໄດ້ສຶກສາຮ່ວມກັນວ່າ "ພຣະເຢຊູຊົງສະແດງຄວາມສົງສານຕໍ່ມະນຸດຢ່າງໃດ?"

### <u>ສຶກສາບົດຮຽນ</u>

3. ກ່ອນທ່ານຈະອ່ານພຣະທັມ ມາຣະໂກ 1:1-6. ໃຫ້ນັກຮຽນໃນຫ້ອງຕັ້ງໃຈຟັງຂໍ້ຄວາມໃນພຣະທັມຕອນນີ້ເຊັ່ນ:

- ພຶດຕິການຂອງປະຊາຊົນຕໍ່ພຣະເຢຊູ (ງຶດປລາດໃຈ, ເບິ່ງຕ່ຳ, ການໂຕ້ຕອບ)
- ພຣະເຢຊູມີພຶດທິການຕໍ່ຄົນໃນບ້ານນັ້ນ (ພຣະອົງປລາດໃຈເພາະຄວາມບໍ່ເຊື່ອແລະບໍ່ຍອມຮັບຮູ້ຂອງພວກເຂົາ)

   ໃຫ້ລູກຫ້ອງລາຍງານຕາມທີ່ພວກເຂົາໄດ້ຟັງມາ. ຫລັງຈາກນັ້ນຖາມເຂົາວ່າ, <u>ຄົນໃນບ້ານນັ້ນມີຄວາມເຫັນໃຈພຣະອົງບໍ່</u>? (ຄຳຕອບກໍຄືວ່າບໍ່ມີ ຊ້ຳຍັງປະຕິເສດແລະປະນາມພຣະອົງອີກ).

4. ເລົ່າເຫດການທີ່ພຣະອົງໄດ້ສົ່ງສາວົກຂອງພຣະອົງອອກໄປປະກາດຂ່າວປະເສີດ ແລະປິ່ນປົວຮັບໃຊ້ປະຊາຊົນ. ໃຫ້ນັກຮຽນຜູ້ນຶ່ງສລຸບເຣື່ອງຣາວ ໃນມາຣະໂກ 6:14-29. ກ່ອນຜູ້ນຶ່ງຈະໄດ້ອ່ານ ມາຣະໂກ 6:14-16, ໃຫ້ບອກນັກຮຽນໃນຫ້ອງຕັ້ງໃຈຟັງການເປັນມາຂອງກະສັດເຮໂຣດດັ່ງຕໍ່ໄປນີ້:

   - ກະສັດເຮໂຣດເຂົ້າໃຈວ່າພຣະເຢຊູແມ່ນໃຜ (ແມ່ນໂຢຮັນບັບຕິສໂຕໄດ້ຄືນມາຈາກຕາຍ)
   - ກະສັດເຮໂຣດ, ນາງເຮໂຣເດັຽ, ແລະລູກສາວຂອງນາງມີພຶດຕິການຢ່າງໃດຕໍ່ໂຢຮັນບັບຕິສໂຕ.

ຫລັງຈາກອ່ານພຣະທັມຕອນນີ້ແລ້ວ. ໃຫ້ນັກຮຽນໃນຫ້ອງສັງເກດ ແລະຖາມວ່າ, ກະສັດເຮໂຣດມີຄວາມສົງສານຕໍ່ໂຢຮັນບັບຕິສໂຕບໍ່?

6. ກ່ອນຈະອ່ານພຣະທັມ ມາຣະໂກ 6:45-52 ໃຫ້ທຸກຄົນຟັງ, ໃຫ້ນັກຮຽນຕັ້ງໃຈຟັງເອົາຂໍ້ຄວາມດັ່ງຕໍ່ໄປນີ້:

- ພວກສາວົກຂອງພຣະອົງມີອາການຢ່າງໃດເມື່ອພວກເຂົາເຫັນພຣະອົງຍ່າງເທິງນໍ້າ (ພວກເຂົາຕົກໃຈ)
- ເມື່ອພຣະອົງຂຶ້ນເທິງເຮືອແລ້ວ ພຣະອົງມີພຶດຕິການຢ່າງໃດຕໍ່ພວກເຂົາ(ພຣະອົງປອບໃຈພວກເຂົາບໍ່ໃຫ້ຢ້ານ)

ຖາມພວກນັກຮຽນວ່າ, ເປັນຫຍັງພວກສາວົກຂອງພຣະອົງຈຶ່ງປລາດອັສຈັນໃຈຫລັງພຣະອົງຂຶ້ນເທິງເຮືອແລ້ວ?

## ຫມູນໃຊ້ໃນການກະທໍາ

7. ເລົ່າເຣື່ອງຕົວຢ່າງໃຫ້ນັກຮຽນຟັງ:

ຫົວຫນ້າຊາວຫນຸ່ມໄດ້ລາອອກ ສະນັ້ນສິດຍາພິບານຈະໄດ້ພາພວກຊາວຫນຸ່ມໄປຟື້ນຟູແທນ. ວັນທີ່ຈະອອກເດີນທາງ. ລາວກໍໄດ້ແລ່ນຫນ້າ ແລ່ນຫລັງສ່ອນສືບຢູ່ເພື່ອໃຫ້ທຸກສິ່ງທຸກຢ່າງຮຽບຮ້ອຍກ່ອນຈະພາຊາວຫນຸ່ມໄປ. ໃນຂນະທີ່ລາວກໍາລັງຍ່າງໄປຫ້ອງການຂອງລາວເພື່ອເບິ່ງຄວາມຮຽບຮ້ອຍ ກ່ອນຈະຂັບຣົດພາຊາວຫນຸ່ມອອກເດີນທາງ ສມຽນຂອງລາວໄດ້ມາລັດລາວແລະກ່າວວ່າ, "ມີຄົນຜູ້ນຶ່ງຢາກຈະພົບທ່ານ ລາວມີບັນຫາ ລາວມີຄວາມຕ້ອງການຢາກຈະລົມກັບທ່ານ."

ສິດຍາພິບານເລີຍຕອບວ່າ, "ໃຫ້ລາວນັດພົບກັບຂ້ອຍມື້ໃຫມ່ສາ ຫລັງຈາກຂ້ອຍພາຊາວຫນຸ່ມກັບມາແຕ່ຟື້ນຟູ. ປະຈຸບັນນີ້ຂ້ອຍກໍາລັງມີພາລະຫລາຍ."

ຫລັງຈາກຣົດໄດ້ແລ່ນອອກໄປຕາມທາງຫລວງແລ້ວ ລາວຈຶ່ງຄຶດສະເດີດຂຶ້ນແລ້ວເວົ້າວ່າ ລາວໄດ້ຫຍຸ້ງກັບວຽກຄຣິສຕະຈັກຫລາຍຈົນບໍ່ໄດ້ເຮັດວຽກຂອງພຣະເຈົ້າ.

8. ໃຫ້ຕັ້ງຄໍາຖາມວ່າ,

- ເປັນໄປໄດ້ບໍ່ທີ່ພວກເຮົາຫຍຸ້ງກັບວຽກຄຣິສຕະຈັກຫລາຍ ຈົນບໍ່ມີເວລາສະແດງອອກເຖິງຄວາມສົງສານຕໍ່ຜູ້ຕ້ອງການຮ້ອງຂໍພວກເຮົາ? ຄໍາເວົ້າສອງຄໍານີ້ໃຫ້ຄໍາຕອບແຕກຕ່າງກັນຢ່າງໃດ, "ໃຫ້ເຂົາໄປຫາຊອກກິນເອົງເສັງ" ແລະ "ຈົ່ງລ້ຽງເຂົາສາ" ໃນລັກສະນະຂອງການເປັນສາວົກຂອງທ່ານ? ຄຣິສຕະຈັກຂອງທ່ານ? ມີອັນໃດແດ່ທີ່ຈະພິສູດໄດ້ວ່າພວກສາວົກມີຄວາມສົງສານຕໍ່ຝູງຊົນທີ່ມານັ້ນ?
- ຄຣິສຕະຈັກຂອງທ່ານເຮັດຫຍັງແດ່ທີ່ມີການຊ່ອຍເຫລືອຄົນອື່ນ?
- ຄຣິສຕະຈັກຂອງທ່ານໃຫ້ໂອກາດເພື່ອມີພາກສ່ວນພົວພັນກັບການຮັບໃຊ້ບໍ່?
- ຈໍາເປັນບໍ່ທີ່ຈະອາສັຍແຕ່ຄຣິສຕະຈັກປະກາດໃຫ້ທ່ານຊາບເຖິງຄວາມຕ້ອງການ?

9. ຫມູນໃຈນັກຮຽນໃນຫ້ອງ ຖ້າຜູ້ໃດບໍ່ມີໂອກາດນໍາຄວາມຮັກຂອງພຣະເຈົ້າອອກໄປເຖິງຜູ້ໃດຜູ້ນຶ່ງໃຫ້ພວກເຂົາອອກໄປ. ຖ້າຜູ້ໃດໄດ້ໄປແລ້ວກໍໃຫ້ໄປຫາຜູ້ໃຫມ່ຕໍ່ອີກ.

10. ນໍາພາອະທິຖານປິດ, ຂໍໃຫ້ພຣະຜູ້ເປັນເຈົ້າຊົງຊ່ອຍໃຫ້ນັກຮຽນໃນຫ້ອງໃຫ້ມີຄວາມສົງສານຄົນອື່ນເຫມືອນດັ່ງພຣະເຢຊູໄດ້ເປັນແບບຢ່າງໃຫ້ແກ່ພວກເຮົາ.

**ບົດແນະນຳການສິດສອນ**

**ບົດຮຽນທີ 7**

**ພຣະເຢຊູຂະຍາຍວົງການຮັບໃຊ້**

---

**ຂໍ້ພຣະຄັມພີສຳລັບບົດຮຽນ:** ມາຣະໂກ 7:1-8, 14-30
**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** ມາຣະໂກ 6:53-8:10
**ຈຸດສຳຄັນຂອງບົດຮຽນນີ້:** ພຣະເຢຊູຊົງຍົກເລີກເຣື່ອງຮີດຄອງ, ເຊື້ອຊາດ, ສັງຄົມ, ແລະວັທນະທັມເພື່ອທຸກຄົນຈະໄດ້ມາສູ່ຄວາມລອດພົ້ນ.
**ຄຳຖາມເພື່ອການສຳຫລວດ:** ຖ້າມີສິ່ງທີ່ກີດກັ້ນບໍ່ໃຫ້ຄົນໄດ້ຮັບຄວາມລອດພົ້ນພວກເຮົາຈະເຮັດຢ່າງໃດ?
**ຈຸດປະສົງຂອງບົດຮຽນນີ້:** ຈະຊ່ອຍໃຫ້ພວກເຮົາເຫັນວ່າມີອັນໃດແດ່ທີ່ກີດກັ້ນບໍ່ໃຫ້ຄົນໄດ້ຮັບຄວາມລອດພົ້ນຈາກພຣະເຈົ້າ.

**ແຜນການສິດສອນ**

**ຊີວິດສະພາບຕົວຈິງ**

1. ໃຫ້ນັກຮຽນມາລາຍງານວ່າພວກເຂົາໄດ້ອອກໄປຢ້ຽມຢາມ ຫລືວ່າຕິດຕໍ່ຜູ້ໃດຜູ້ນຶ່ງບໍ່. ຖາມພວກເຂົາວ່າຄົນທີ່ພວກເຂົາໄປຢ້ຽມຢາມນັ້ນເຂົາມີຄວາມຮູ້ສຶກຢ່າງໃດ? ຕົວເຈົ້າຂອງນັກຮຽນມີຄວາມຮູ້ສຶກຢ່າງໃດ?

2. ໃຫ້ຢາຍຂໍ້ສອບແກ່ນັກຮຽນໃນຫ້ອງ. ບອກພວກເຂົາວ່າເປັນຂໍ້ສອບຂອງບົດຮຽນໃນວັນນີ້ເພື່ອພວກເຂົາຈະໄດ້ຮູ້ວ່າພວກເຂົາຈະໄດ້ຮຽນເຣື່ອງອັນໃດໃນວັນນີ້.

**ສຶກສາບົດຮຽນ**

3. ໃຫ້ຖາມຄຳຖາມຂໍ້ທີ 1 ຕາມໃບຂໍ້ສອບທີ່ຢາຍໃຫ້ນັກຮຽນນັ້ນ. (ຄຳຕອບແມ່ນຂໍ້ ຂ, ຄ, ສ)

4. ໃຫ້ຖາມຄຳຖາມຂໍ້ທີ 2 (ຄຳຕອບແມ່ນວ່າ ຖືກ). ໃຫ້ຮ້ອງຂໍໃຫ້ຄົນໃດຄົນນຶ່ງອ່ານ ມາຣະໂກ 1:38-39; 6:1-2.

5. ໃຫ້ຖາມຄຳຖາມຂໍ້ທີ 3 (ຄຳຕອບແມ່ນວ່າ ຜິດ). ໃຫ້ຮ້ອງຂໍໃຫ້ຄົນໃດຄົນນຶ່ງອ່ານ ມາຣະໂກ 7:1-5. ໃຫ້ຖາມນັກຮຽນວ່າ ເປັນຫຍັງພວກຟາຣີຊາຍແລະນັກທັມຈຶ່ງມາຫາພຣະອົງ?

6. ໃຫ້ຖາມຄຳຖາມຂໍ້ທີ 4 (ຄຳຕອບແມ່ນຂໍ້ ຄ). ຫືວຂໍ້ "ການກີດກັ້ນຈາກຮີດຄອງທີ່ໄຮ້ປໂຍດ"

7. ໃຫ້ຖາມຄຳຖາມຂໍ້ທີ 5 (ຄຳຕອບແມ່ນຂໍ້ ງ). ໃຫ້ສຶກສາ ມາຣະໂກ 7:2. ອະທິບາຍຄວາມຫມາຍຂອງຄຳວ່າ, "ເປັນມົນທິນ" ຫລືວ່າ "ບໍ່ສະອາດ".

8. ໃຫ້ຖາມຄຳຖາມຂໍ້ທີ 6 (ຄຳຕອບແມ່ນຂໍ້ ກ). ໃຫ້ຜູ້ນຶ່ງອ່ານ ມາຣະໂກ 7:6-8. ໃຫ້ອີກຜູ້ນຶ່ງອ່ານ ເອຊາຢາ 29:13-14.

9. ໃຫ້ຖາມຄຳຖາມຂໍ້ທີ 7 (ຄຳຕອບແມ່ນຂໍ້ ກ). ໃຫ້ອະທິບາຍຄຳວ່າ "ໂກຣະບານ" ຕາມຄວາມເຂົ້າໃຈຂອງພວກຟາຣີຊາຍ.

10. ໃຫ້ຜູ້ນຶ່ງອ່ານ ມາຣະໂກ 7:14-23, ແລະໃຫ້ອີກຜູ້ນຶ່ງອ່ານ ລະບຽບພວກເລວີ 11:1-3,9. ໃຫ້ອະທິບາຍ ຄຳສອນຂອງພຣະເຢຊູເປັນພຣະຄຳພີກປົ້ນປະວັດສາດໃນພຣະສັນຍາໃໝ່ ແລະເປັນຄຳສອນທີ່ພວກສາວົກບໍ່ສາມາດເຂົ້າໃຈໄດ້ງ່າຍ. ໃຫ້ຖາມຄຳຖາມຂໍ້ທີ 8 (ຄຳຕອບແມ່ນ "ເປໂຕ"), ແລະໃຫ້ຜູ້ນຶ່ງອ່ານກິຈການ 10:13-15.

11. ໃຫ້ຖາມຄຳຖາມຂໍ້ທີ 9 (ຄຳຕອບແມ່ນຂໍ້ ກ, ຂ, ແລະ ງ). ໃຫ້ຜູ້ນຶ່ງອ່ານ ມາຣະໂກ 7:24-30. ໃຫ້ສລຸບສິ່ງຈຳເປັນທີ່ຈະເອົາຊະນະການກີດກັ້ນເພື່ອຈະນຳພຣະເຢຊູເຂົ້າເຖິງຄົນໃຫ້ໄດ້.

**<u>ໜູນໃຊ້ໃນການກະທຳ</u>**

12. ໃຫ້ຖາມຄຳຖາມຂໍ້ທີ 10. ໃຫ້ນັກຮຽນໃນຫ້ອງຕຶກຕອງຄັກແນ່ສັ່ງຊາເບິ່ງໃນຄຣິສຕະຈັກຂອງຕົນມີອັນໃດແດ່ເປັນອຸປສັກກີດກັ້ນເຊັ່ນ: ເຣື່ອງຮີດຄອງປະເພນີ, ເຣື່ອງໜ້າຊື່ໃຈຄົດ, ການເຫັນວ່າຕົນດີກວ່າຄົນອື່ນ.

13. ໃຫ້ຄົນນຶ່ງອະທິຖານປິດໃຫ້ພຣະຜູ້ເປັນເຈົ້າຊ່ອຍແຕ່ລະຄົນຢ່າໃຫ້ເປັນຜູ້ສ້າງຄວາມກີດກັ້ນໃຫ້ຄົນອື່ນໄດ້ມາສູ່ຄວາມລອດພົ້ນຈາກອົງພຣະຜູ້ເປັນເຈົ້າ.

## ຂໍ້ສອບໃນຫົວເຣື່ອງ "ພຣະເຢຊູຂຍາຍວົງການການຮັບໃຊ້"

1. ໃນບົດຮຽນໄດ້ກ່າວເຖິງສາມຢ່າງທີ່ກີດກັ້ນບໍ່ໃຫ້ຄົນອື່ນມາສູ່ຄວາມລອດພົ້ນມີດັ່ງຕໍ່ໄປນີ້:
   ກ. ຈິດໃຈເຕັມໄປດ້ວຍຄວາມກຽດຊັງຄົນອື່ນ
   ຂ. ເຫັນວ່າຕົນດີກວ່າຄົນອື່ນ
   ຄ. ເປັນຄົນໜ້າຊື່ໃຈຄົດ
   ງ. ການບໍ່ເຊື່ອຟັງຢ່າງລີ້ລັບ
   ຈ. ການຜິດຊາຍຍິງ
   ສ. ຮີດຄອງປະເພນີ
   ຊ. ການຂ້າຄົນ

2. ຖືກ - ຜິດ ໂຮງທັມມະເທສນາໃນແຂວງຄາລິເລຕ້ອນຮັບພຣະເຢຊູເປັນປະຈຳ.

3. ຖືກ - ຜິດ ພວກຟາຣີຊາຍແລະນັກທັມມາຈາກກຸງເຢຣູຊາເລມບອກພຣະເຢຊູວ່າພວກເຂົາບໍ່ຕ້ອນຮັບພຣະອົງ.

4. ຫລັງຈາກນັ້ນ ກໍມີຄຳສອນທີ່ຕົກທອດມາຈາກເຖົ້າເກົ່າບູຮານຊຶ່ງກາຍມາເປັນພິທີຕາມຮີດຄອງ. ຫລັງຈາກສັຕວັດທີສາມກໍໄດ້ຂຽນຂຶ້ນມາເປັນລາຍລັກອັກສອນຢ່າງຄັກແນ່ເພື່ອໃຫ້ຊາວຢິວປະຕິບັດຕາມທີ່ເອີ້ນກັນວ່າ:
   ກ. ໂທຣາ 7+ໍ້າ +ນພັ້8 ພຣະບັນຍັດ
   ຂ. ເພັນທາທັສ 7+ໍ້າ ຽາີະະີ້ແ8 ພຣະທັມຫ້າເຫລັ້ມທຳອິດໃນພຣະສັນຍາເດີມທີ່ຊາວຢິວເອີ້ນກັນວ່າ ພຣະບັນຍັດ
   ຄ. ມິສນາ 7ງຣທົ້8 ກົດບັນຍັດຈາກເຖົ້າເກົ່າບູຮານ
5. ຜູ້ນຳຂອງຊາວຢິວຖາມວ່າເປັນຫຍັງສາວົກຂອງພຣະເຢຊູຈຶ່ງ...

ກ. ຮັກສາຄົນເຈັບ
ຂ. ສອນຢູ່ໃນໂຮງທັມມະເທສນາ
ຄ. ກິນອາຫານທີ່ເປັນມົນທິນ (ບໍ່ສະອາດ)
ງ. ກິນອາຫານດ້ວຍມືທີ່ເປັນມົນທິນ (ບໍ່ສະອາດ)

6. ເມື່ອພຣະເຢຊູເອີ້ນພວກຟາຣີຊາຍວ່າ "ເປັນຄົນໜ້າຊື່ໃຈຄົດ" ພຣະອົງໃຊ້ພຣະທັມຂອງຜູ້ປະກາດພຣະທັມຄົນໃດ?
ກ. ເອຊາຢາ
ຂ. ເຢເຣມີຢາ
ຄ. ເອເຊກຽນ
ງ. ດານີເອນ

7. ຄໍາວ່າ "ໂກຣະບານ" ມີຄວາມໝາຍວ່າ:
ກ. ເປັນຂອງຖວາຍໄວ້ແລ້ວ
ຂ. ເປັນທີ່ທໍາໃຫ້ເສື່ອມເສັຽ
ຄ. ເປັນທີ່ຕ້ອງຫ້າມ
ງ. ເປັນທີ່ຈໍາກັດ

8. ຄໍາສອນຂອງພຣະເຢຊູກ່ຽວກັບເຣື່ອງອາຫານທີ່ເປັນມົນທິນ (ບໍ່ສະອາດ) ໄດ້ບອກເຫດການລ່ວງໜ້າເຖິງນິມິດທີ່ອັຄສາວົກຜູ້ນື່ງຈະໄດ້ເຫັນຢູ່ຫລັງຄາຕຶກໃນຂນະທີ່ລາວລືມຄິງໄປ.
ກ. ບາຣະນາບາ
ຂ. ໂປໂລ
ຄ. ເປໂຕ
ງ. ຕີໂມທຽວ

9. ຖ້າຫາກວ່າພຣະເຢຊູຖືກົດບັນຍັດ, ມີເຫດຜົນອັນໃດແດ່ທີ່ພຣະອົງບໍ່ສົມຄວນເວົ້າກັບຍິງຄົນນື່ງທີ່ເມືອງຕີໂຣ
ກ. ນາງເປັນຜູ້ຍິງ
ຂ. ນາງເປັນຄົນຕ່າງຊາດ
ຄ. ນາງຕິຕຽນພຣະອົງ
ງ. ນາງຖືສາສນາກຣີກ

10. ມີຮີດຄອງປະເພນີອັນໃດແດ່ໃນຄຣິສຕະຈັກຂອງພວກເຮົາທີ່ເປັນເຫດກໍ່ໃຫ້ເກີດມີຄວາມກີດກັ້ນຂ່າວປະເສີດ?
ກ. ພິທີສິນມະຫາສນິດ (ຜູ້ໃດ? ເປັນດ້ວຍເຫດໃດ? )
ຂ. ພິທີບັບຕິສມາ (ຜູ້ໃດ? ເປັນດ້ວຍເຫດໃດ? ເວລາໃດ?)
ຄ. ຕອນເຊື້ອເຊີນຫລັງຈາກການນະມັສການ
ງ. ສເນີສະມາຊິກໃໝ່
ຈ. ດົນຕຣີປະເພດໃດໃຊ້ໃນຍາມນະມັສການ
ສ. ບໍ່ມີຈັກຂໍ້ດັ່ງທີ່ກ່າວມານີ້
ຊ. ແລະອື່ນໆ_______________

# ບົດແນະນຳການສິດສອນ

# ບົດຮຽນທີ 8

# ພຣະເຢຊູຮຽກຮ້ອງໃຫ້ຕັດສິນໃຈ

---

**ຂໍ້ພຣະຄັມພີສຳລັບບົດຮຽນ:** ມາຣະໂກ 8:27-38

**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** ມາຣະໂກ 8:11-38

**ຈຸດສຳຄັນຂອງບົດຮຽນນີ້:** ພຣະເຢຊູຊົງຮຽກຮ້ອງໃຫ້ທຸກຄົນມອບກາຍຖວາຍໃຈໃຫ້ກັບພຣະອົງ.

**ຄຳຖາມເພື່ອການສຳຫລວດ:** ພຣະເຢຊູແມ່ນໃຜ?

**ຈຸດປະສົງຂອງບົດຮຽນນີ້:** ຈະຊ່ອຍໃຫ້ພວກເຮົາມອບກາຍຖວາຍໃຈໃຫ້ກັບພຣະເຢຊູ.

## ແຜນການສິດສອນ

### ຊີວິດສະພາບຕົວຈິງ

1. ໃຫ້ບອກນັກຮຽນຜູ້ນຶ່ງລ່ວງໜ້າໄວ້ກ່ອນ. ໃຫ້ລາວຕຽມຄຳສລຸບເຣື່ອງຄຣິສຕຽນໃນປະເທດຈີນ. ຖ້ານັກຮຽນຄົນອື່ນຢາກຈະແບ່ງປັນກໍຂໍໃຫ້ເຂົາມີພາກສ່ວນ. ສຳລັບຄຣິສຕຽນທີ່ຖືກຂົ່ມເຫງໃນປະເທດອື່ນໆອີກເຊັ່ນຄຣິສຕຽນໃນປະເທດລາວ. (ໃຫ້ຊອກອ່ານໃນວາຣະສານ (The Voice of the Martyrs), ໜັງສືພິມ ຫລືວ່າ ໃນ Internet ເຊັ່ນ: www.persecution.com www.laohumright.org ) ບາງຄັ້ງ ສະຖານີ ເອເຊັຽເສຣີ ກໍອອກຂ່າວເຊັ່ນກັນ.

2. ແນະນຳຫົວຂໍ້ຂອງບົດຮຽນນີ້ນີ້ "ພຣະເຢຊູຮຽກຮ້ອງໃຫ້ຕັດສິນໃຈ." ໃຫ້ນັກຮຽນສຶກສາມາຣະໂກ ບົດທີ8 ໃຫ້ພວກເຂົາເຫັນວ່າບໍ່ພຽງແຕ່ເປໂຕຕ້ອງຕັດສິນໃຈເທົ່ານັ້ນ ພວກເຂົາກໍຕ້ອງຕັດສິນໃຈເຊັ່ນດຽວກັນ.

3. ໃຫ້ແຕ່ລະຄົນໃຊ້ "ໃບຕັດສິນໃຈຂອງຂ້າພະເຈົ້າ" ດັ່ງກ່າວ. ໃຫ້ນັກຮຽນຕື່ມຄຳຕອບແລະການຕັດສິນໃຈຂອງເຂົາໃສ່ຕາລາງທີສອງແລະທີສາມໃນຂນະທີ່ສຶກສາພຣະຄັມພີຫົວຂໍ້ຕໍ່ລົງໄປນີ້.

### ໃບຕັດສິນໃຈຂອງຂ້າພະເຈົ້າ

| ຄຳຖາມ | ຄຳຕອບ | ການຕັດສິນໃຈຂອງຂ້າພະເຈົ້າ |
|---|---|---|
| 1. ພຣະເຢຊູແມ່ນໃຜ? | | |
| 2. ອະນາຄົດຂອງພຣະເຢຊູຈະເປັນຢ່າງໃດ? | | |
| 3. ແມ່ນຫຍັງຄືການມອບກາຍຖວາຍໃຈ? | | |
| 4. ມີອັນໃດແດ່ທີ່ຈະຕ້ອງເສັຽ? | | |
| 5. ແມ່ນຫຍັງຄືການທ້າທາຍພຣະເຢຊູ? | | |

4. ໃຫ້ສຶກສາພຣະຄັມພີຕາມຫົວຂໍ້ດັ່ງຕໍ່ໄປນີ້:

ກ) ການເປີດເຜີຍເຖິງພຣະຄຣິດ (8:27-30)

ຂ) ການເປີດເຜີຍເຖິງໄມ້ກາງແຂນ (8:31-33)

ຄ) ການເປີດເຜີຍເຖິງການມອບກາຍຖວາຍໃຈ (8:34)

ງ) ການເປີດເຜີຍເຖິງຄວາມເສັຽສລະ (8:35-37),

ຈ) ຄຳທ້າທາຍຂອງພຣະອົງ (8:38)

## <u>ສຶກສາບົດຮຽນ</u>

5. ໃຫ້ໃຊ້ເວລາສັ້ນໆທົບທວນບົດຮຽນຂອງອາທິດທີ່ຜ່ານມາໂດຍຖາມຄຳຖາມດັ່ງຕໍ່ໄປນີ້:

- ເປັນຫຍັງພຣະເຢຊູຈຶ່ງຮັບໃຊ້ຄົນຕ່າງຊາດ?
- ເປັນຫຍັງພຣະເຢຊູຈຶ່ງບໍ່ສະແດງຫມາຍສຳຄັນໃຫ້ພວກຟາຣີຊາຍເບິ່ງ?
- ພຣະເຢຊູປົວຄົນຕາບອດ. ພຣະອົງໄດ້ຈູງຄົນຕາບອດໄປໃສ? (ຈູງລາວອອກໄປນອກເມືອງ.)
- ນັກເທດປົວພຍາດສມັຍນີ້ພວກເຂົາສະແດງການອັສຈັນຢູ່ບ່ອນໃດ? (ໃນບ່ອນທີ່ມີຊຸມຊົນຫລາຍໆ.)

6. ຫົວຂໍ້ ກ ໃຫ້ອ່ານ ມາຣະໂກ 8:27-30 ໃຫ້ທຸກຄົນໄດ້ຍິນ. ແລ້ວຖາມວ່າ:

- ມີໃຜແດ່ມີພຣະຄັມພີສະບັບອື່ນໃຫ້ອ່ານຂໍ້29 ດັງໆ?
  ໃຫ້ນັກຮຽນຂຽນຄຳຕອບລົງໄປໃນຊ່ອງຫວ່າງ "ຄຳຕອບ" ຂອງຄຳຖາມຂໍ້ທີນຶ່ງ. ຄຳຕອບນັ້ນແມ່ນ (ພຣະຄຣິດ ຫລື ພຣະເມຊີອາ).
- ເປັນຫຍັງພຣະເຢຊູຈຶ່ງບໍ່ໃຫ້ພວກສາວົກບອກຄົນອື່ນກ່ຽວກັບພຣະອົງ? (ພຣະອົງຮູ້ວ່າພວກເຂົາຕ້ອງການ ການແນະນຳຫລາຍຢ່າງກ່ຽວກັບເຣື່ອງສິ້ນພຣະຊົນຂອງພຣະອົງແລະການຄືນມາຈາກຕາຍ.)
- ບອກໃຫ້ນັກຮຽນວ່າ, "<u>ກ່ຽວກັບເຣື່ອງພຣະເຢຊູແມ່ນໃຜ ນັ້ນທ່ານຈະຕ້ອງຕັດສິນໃຈດ້ວຍຕົວທ່ານເອງ ທ່ານຈະໄປເອົາຄວາມຄິດເຫັນຂອງຄົນອື່ນບໍ່ໄດ້.</u> ບອກໃຫ້ນັກຮຽນຂຽນລົງໄປໃນຊ່ອງຫວ່າງ "ການຕັດສິນໃຈຂອງຂ້າພະເຈົ້າ" ຂອງຄຳຖາມຂໍ້ທີນຶ່ງ. ນີ້ເປັນການຕັດສິນໃຈທີ່ສຳຄັນທີ່ສຸດ.

7. ຫົວຂໍ້ ຂ ໃຫ້ອ່ານ ມາຣະໂກ 8:31-33 ໃຫ້ທຸກຄົນໄດ້ຍິນ. ແລ້ວຖາມວ່າ:

- ພຣະເຢຊູເວົ້າຫຍັງແດ່ກ່ຽວກັບເຫດການທີ່ຈະເກີດຂຶ້ນກັບພຣະອົງ? (ພຣະອົງຈະຕ້ອງຖືກຂ້າ ແລະພຣະອົງຈະຄືນຂຶ້ນມາ). ບອກໃຫ້ນັກຮຽນຂຽນຄຳຕອບລົງໄປໃນຊ່ອງຫວ່າງ "ຄຳຕອບ" ຂອງຄຳຖາມຂໍ້ທີສອງ.
- ເປັນຫຍັງເປໂຕຈຶ່ງທູນຫ້າມພຣະອົງ? (ເປໂຕບໍ່ໄດ້ຄາດຫມາຍເອົາພຣະເມຊີອາປະເພດທີ່ພຣະອົງໄດ້ບັນລະຍາຍ).
- ທ່ານເຊື່ອວ່າພຣະເຢຊູເປັນພຣະເມຊີອາປະເພດໃດ? ບອກໃຫ້ນັກຮຽນຂຽນລົງໄປໃນຊ່ອງຫວ່າງ "ການຕັດສິນໃຈຂອງຂ້າພະເຈົ້າ" ຂອງຄຳຖາມຂໍ້ທີສອງ.

8. ຫົວຂໍ້ ຄ ໃຫ້ອ່ານ ມາຣະໂກ 8:34 ໃຫ້ທຸກຄົນໄດ້ຍິນ. ແລ້ວຖາມວ່າ:

- ພຣະເຢຊູຮຽກຮ້ອງການມອບກາຍຖວາຍໃຈຢ່າງໃດ? (ຕັດສິດຂອງຕົນ, ຮັບແບກໄມ້ກາງແຂນຂອງຕົນ, ຕິດຕາມພຣະອົງໄປ). ບອກໃຫ້ນັກຮຽນຂຽນຄຳຕອບລົງໄປໃນຊ່ອງຫວ່າງ "ຄຳຕອບ" ຂອງຄຳຖາມຂໍ້ທີສາມ.
- ພຣະອົງບໍ່ໄດ້ຮຽກຮ້ອງໃຫ້ພວກສາວົກປົກປ້ອງພຣະອົງ, ແຕ່ວ່າພຣະອົງພຽງບອກໃຫ້ພວກເຂົາຕິດຕາມພຣະອົງ.
- ບອກໃຫ້ນັກຮຽນຂຽນຄຳຕັດສິນໃຈຂອງພວກເຂົາລົງໄປໃນຊ່ອງຫວ່າງ "ການຕັດສິນໃຈຂອງຂ້າພະເຈົ້າ" ຂອງຄຳຖາມຂໍ້ທີສາມ. ໃຫ້ຖາມພວກເຂົາວ່າ, <u>ການຕັດສິນໃຈຂອງພວກເຂົານັ້ນໄດ້ຕັດສິນໃຈແບກໄມ້ກາງ</u>

ແຂນຂອງເຂົາເອງໄປຕາມພຣະອົງບໍ່?

9. ຫົວຂໍ້ ງ ໃຫ້ອ່ານ ມາຣະໂກ 8:35-37 ໃຫ້ທຸກຄົນໄດ້ຍິນ. ແລ້ວຖາມວ່າ:
- ແມ່ນຫຍັງຄືຄວາມສລະ? (ສິ່ງທີ່ເສັຽໄປ, ຫລື ສລະໃຫ້, ສລະຊີວິດ). ບອກໃຫ້ນັກຮຽນຂຽນຄຳຕອບລົງໄປໃນຊ່ອງຫວ່າງ "ຄຳຕອບ" ຂອງຄຳຖາມຂໍ້ທີສີ່.
- ກ່ອນຈະຂຽນລົງໄປໃນຊ່ອງຫວ່າງ "ການຕັດສິນໃຈຂອງຂ້າພະເຈົ້າ". ຂອງຄຳຖາມຂໍ້ທີສີ່. ໃຫ້ຖາມພວກເຂົາວ່າ, ເມື່ອຕິດຕາມພຣະຄຣິດທ່ານຈະຕ້ອງສລະຫຍັງແດ່? ທ່ານຈະຍອມໃຫ້ພຣະຄຣິດນຳພາຊີວິດຂອງທ່ານບໍ່ແທນທີ່ທ່ານຈະນຳເອງ? ທ່ານຈະຍອມສລະຄວາມເຫັນແກ່ຕົວຂອງທ່ານອອກໄປບໍ່? ໃຫ້ພວກເຂົາ ມີເວລາພຽງພໍທີ່ຈະຕອບ.

10. ຫົວຂໍ້ ຈ ໃຫ້ອ່ານ ມາຣະໂກ 8:38 ໃຫ້ທຸກຄົນໄດ້ຍິນ. ແລ້ວຖາມວ່າ:
- ຄຳທ້າທາຍຂອງພຣະອົງແມ່ນຫຍັງ? (ຢ່າໄດ້ປະຕິເສດພຣະອົງ ຫລື ມີຄວາມອາຍເພາະພຣະອົງ). ບອກໃຫ້ນັກຮຽນຂຽນຄຳຕອບລົງໄປໃນຊ່ອງຫວ່າງ "ຄຳຕອບ" ຂອງຄຳຖາມຂໍ້ທີຫ້າ. ໃຫ້ບັນລະຍາຍເຣື່ອງອຳນາດຂອງຄວາມອາຍຢູ່ໃນບົດຮຽນ. ໃຫ້ນັກຮຽນຜູ້ນຶ່ງອ່ານ ໂຣມ 1:16 ໃຫ້ໝູ່ໃນຫ້ອງຟັງ. ຖາມພວກເຂົາວ່າ, ພວກເຂົາເຄີຍມີຄວາມອາຍເພາະພຣະຄຣິດບໍ່? ບອກໃຫ້ນັກຮຽນຂຽນຄຳຕັດສິນໃຈຂອງພວກເຂົາລົງໄປໃນຊ່ອງຫວ່າງ "ການຕັດສິນໃຈຂອງຂ້າພະເຈົ້າ" ຂອງຄຳຖາມຂໍ້ທີຫ້າ.

**ໝູນໃຊ້ໃນການກະທຳ**

11. ໃຫ້ທົບທວນຄຳຕອບຕ່າງໆໃນຊ່ອງຫວ່າງ "ຄຳຕອບ". ແລ້ວກ່າວວ່າ, ນີ້ແມ່ນການຄາດໝາຍທີ່ພຣະອົງມີຕໍ່ພວກເຮົາ.

12. ໃຫ້ທົບທວນຄຳຕອບຕ່າງໆໃນຊ່ອງຫວ່າງ "ການຕັດສິນໃຈຂອງຂ້າພະເຈົ້າ". ບອກພວກເຂົາວ່າ, ຖ້າພວກເຂົາຍັງບໍ່ທັນໄດ້ຕອບຄຳຖາມໃນຊ່ອງຫວ່າງນີ້ ໃຫ້ຖືກັບເມືອເຮືອນ ແລ້ວໃຫ້ໃຊ້ເວລາຕຶກຕອງຄັກແນ່ແລະໃຫ້ພຣະວິນຍານບໍຣິສຸດນຳພາໃນຄຳຕອບທີ່ຈະຂຽນລົງໄປ.

13. ອະທິຖານປິດ, ຂໍໃຫ້ພຣະຜູ້ເປັນເຈົ້າຊົງຊ່ອຍໃຫ້ນັກຮຽນໃນຫ້ອງໃຫ້ມອບກາຍຖວາຍໃຈໃຫ້ແກ່ພຣະຄຣິດໂດຍບໍ່ຄຳນຶງເຖິງການສູນເສັຽໃດໆທັງສິ້ນ.

# <u>ຄຳແນະນຳສຳລັບຄຣູສອນ</u>
# <u>ບົດຮຽນທີ 9</u>
# <u>ພຣະເຢຊູຊົງສອນເຣື່ອງການຮັບໃຊ້</u>

---

<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u> ມາຣະໂກ 9:30-37; 10:35-45
<u>ຂໍ້ພຣະຄັມພີສຳລັບເບື້ອງຫຼັງ:</u> ມາຣະໂກ 9:1--10:52
<u>ຈຸດສຳຄັນຂອງບົດຮຽນນີ້:</u> ພຣະເຢຊູຊົງສອນສາວົກຂອງພຣະອົງວ່າ ຄວາມຍິ່ງໃຫຍ່ເກີດມາຈາກການຮັບໃຊ້ແບບຖ່ອມຕົວຊຶ່ງພຣະອົງໄດ້ຊົງເປັນຕົວຢ່າງ.
<u>ຄຳຖາມເພື່ອການສຳຣວດ:</u> ແມ່ນຫຍັງເຮັດໃຫ້ຄົນກາຍເປັນຜູ້ຍິ່ງໃຫຍ່ຢ່າງແທ້ຈິງ?
<u>ຈຸດປະສົງຂອງບົດຮຽນນີ້:</u> ເພື່ອສຳຣວດເບິ່ງຊີວິດຂອງທ່ານເອງ ແລະມາຕການທີ່ພຣະເຢຊູຊົງຕັ້ງໄວ້.

## <u>ແຜນສຳລັບການສອນ</u>

<u>ນຳເຣື່ອງເຂົ້າສູ່ຊີວິດຈິງ</u> (ໃຊ້ເວລາ 5 ນາທີ)

1. ເຊີນນັກຮຽນບາງຄົນໃຫ້ສະແດງຄວາມຄິດເຫັນກ່ຽວກັບຄຸນນະພາບຂອງຜູ້ຮັບໃຊ້ຕາມຄວາມເຂົ້າໃຈຂອງເຂົາເຈົ້າແຕ່ລະຄົນ. ຫລັງຈາກນັ້ນໃຫ້ຂຽນຫົວເຣື່ອງຂອງບົດຮຽນໃສ່ກະດານ.

### ພຣະເຢຊູຊົງສອນເຣື່ອງການຮັບໃຊ້

ກ. ການເດີນທາງໄປສູ່ ກາເປນາອູມ (ມາຣະໂກ 9:30-37)
  ພຣະເຢຊູຊົງຮັກຄົນບາບ (9:30-37)
  ພຣະເຢຊູຊົງສອນພວກສາວົກ (9:33-37)
ຂ. ການເດີນທາງໄປກຸງຢາຣູຊາເຣັມ (ມາຣະໂກ 10:30-45)
  ພຣະເຢຊູຊົງກ່າວລ່ວງໜ້າວ່າຈະຖືກຂ້າ (10:30-34)
  ຄຳທູນຂໍຂອງ ຢາໂກໂບ ແລະ ໂຢຮັນ (10:35-37)

<u>ນຳພາການສຶກສາພຣະທັມ</u> (ໃຊ້ເວລາ 30 ນາທີ)

2. ຫລັງຈາກການອະທິບາຍບົດຮຽນໂດຍຫຍໍ້ແລ້ວ ຊວນນັກຮຽນໃຫ້ເບິ່ງຂໍ້ຄວາມຕ່າງໆດັ່ງຕໍ່ໄປນີ້ທີ່ເຫັນວ່າຖືກຕ້ອງທີ່ສຸດ. ທ່ານອາດຈະພິມບົດຮຽນພາກນີ້ໃຫ້ນັກຮຽນແຕ່ລະຄົນ.
  ກ. ພຣະເຢຊູຊົງທຳນວາຍການຕາຍຂອງພຣະອົງ (9:30-32)
    ______(1). ມາຣະໂກ ຕື່ມຄຳທຳນວາຍນີ້ພາຍຫລັງເພື່ອໃຫ້ທຸກຄົນຄິດວ່າ ພຣະເຢຊູໄດ້ຊົງບອກເຖິງເຫດການນີ້ໄວ້ລ່ວງໜ້າ.
    ______(2). ພຣະເຢຊູອ່ານເບິ່ງສະຖານະການແລ້ວຄິດວ່າສິ່ງເຫລົ່ານັ້ນຈະຕ້ອງເກີດຂຶ້ນ.
    ______(3). ພຣະເຢຊູຊົງໃຊ້ຣິດອຳນາດຂອງພຣະອົງແລະສາມາດຮູ້ເຫດການຕ່າງໆກ່ອນທີ່ສິ່ງ

ເຫລົ່ານັ້ນຈະເກີດຂຶ້ນ.

ພວກສາວົກບໍ່ເຂົ້າໃຈຄຳທຳນວາຍຂອງພຣະເຢຊູກ່ຽວກັບການທໍຣະມານແລະການຕາຍທີ່ຈະມາເຖິງພຣະອົງ. ເປັນຫຍັງພວກສາວົກບໍ່ຖາມພຣະເຢຊູ ຫລືຂໍໃຫ້ພຣະອົງອະທິບາຍໃຫ້ແຈ່ມແຈ້ງ?

ຂ. ພຣະເຢຊູຊີ້ງປະນາມຄວາມເຫັນແກ່ຕົວຂອງພວກເຂົາ (9:33-34)

_____(1). ພຣະເຢຊູຊົງຮູ້ເຣື່ອງທີ່ພວກສາວົກຖຽງກັນນັ້ນລ່ວງໜ້າແລ້ວ.

_____(2). ພຣະເຢຊູຕ້ອງການຄຳຕອບຈາກພວກສາວົກເພື່ອພຣະອົງຈະໄດ້ຮູ້ວ່າພວກເຂົາຖຽງກັນເຣື່ອງຫຍັງແທ້.

ຄ. ພຣະເຢຊູຊົງຊ່ວຍພວກສາວົກໃຫ້ເຂົ້າໃຈເຖິງຄວາມຍິ່ງໃຫຍ່ທີ່ແທ້ (9:35-37)

_____(1). ພຣະເຢຊູຊົງໃຊ້ເດັກນ້ອຍເພື່ອອະທິບາຍເຣື່ອງຄວາມຍິ່ງໃຫຍ່ທີ່ແທ້ເພາະເດັກນ້ອຍເປັນຜູ້ບໍຣິສຸດແທ້.

_____(2). ພຣະເຢຊູຊົງໃຊ້ເດັກນ້ອຍເພື່ອອະທິບາຍເຣື່ອງຄວາມຍິ່ງໃຫຍ່ທີ່ແທ້ເພາະຄົນໃນສມັຍນັ້ນບໍ່ໄດ້ຖືວ່າເດັກນ້ອຍສຳຄັນ ແລະໄດ້ຖືວ່າເດັກນ້ອຍເປັນຜູ້ຮັບໃຊ້ຄົນອື່ນໆດ້ວຍ.

ມີຫຍັງແດ່ໃນຊີວິດຂອງທ່ານ ທີ່ສະແດງໃຫ້ເຫັນວ່າທ່ານເປັນຄົນຖ່ອມຕົວແລະເປັນຜູ້ຮັບໃຊ້?

ງ. ຄຳທຳນວາຍອັນອັສຈັນອີກເທື່ອນຶ່ງ (10:32-34)

_____(1). ພວກສາວົກບໍ່ເຊື່ອຄຳທຳນວາຍເຣື່ອງການຕາຍຂອງພຣະຄຣິດ.

_____(2). ພວກສາວົກບໍ່ເຂົ້າໃຈຄຳທຳນວາຍ.

_____(3). ພວກສາວົກບໍ່ສາມາດເຫັນຄຳທຳນວາຍກ່ຽວກັບການຕາຍຂອງພຣະຄຣິດເພາະພວກເຂົາເມົາມົວຢູ່ແຕ່ໃນຄວາມຕ້ອງການຂອງພວກເຂົາເອງ.

ຈ. ການທູນຂໍແບບເຫັນແກ່ຕົວ (10:35-37)

_____(1). ຢາໂກໂບ ແລະ ໂຢຮັນຄິດວ່າພຣະເຢຊູຈະໄດ້ຊັຍຊະນະແລະຈະເປັນກະສັດຄອງໂລກນີ້.

_____(2). ຢາໂກໂບ ແລະໂຢຮັນບໍ່ຄິດວ່າພຣະເຢຊູຈະຖືກປະຫານຊີວິດ.

ທ່ານຄິດວ່າການທູນຂໍຂອງຢາໂກໂບແລະໂຢຮັນແມ່ນການຂໍທີ່ເຕັມໄປດ້ວຍຄວາມຈອງຫອງແລະຄວາມຮັກຫລືບໍ່?

ສ. ບົດຮຽນກ່ຽວກັບຄວາມຍິ່ງໃຫຍ່ທີ່ແທ້ຈິງ (10:38-45)

_____(1). ພຣະເຢຊູຊົງສອນວ່າຄວາມຍິ່ງໃຫຍ່ທີ່ແທ້ແມ່ນເກີດມາຈາກການເປັນຜູ້ນຳທີ່ເຂັ້ມແຂງ.

_____(2). ພຣະເຢຊູຊົງສອນວ່າຄວາມຍິ່ງໃຫຍ່ທີ່ແທ້ແມ່ນເກີດມາຈາກການເປັນຂ້ອຍໃຊ້, ການເປັນຂ້າທາດ, ແລະການເປັນຜູ້ເສັຽສລະ.

3. ໃຫ້ນັກຮຽນຜູ້ທີ່ອ່ານເກ່ງອ່ານພຣະທັມແຕ່ລະພາກຂອງຫົວຂໍ້ໃຫຍ່ໆ. ຊັກຊວນໃຫ້ນັກຮຽນແຕ່ລະຄົນມີສ່ວນຮ່ວມໃນການຕອບຂໍ້ຄວາມຕ່າງໆທີ່ຜ່ານມາ. ໃຊ້ຄຳອະທິບາຍສຳລັບບົດຮຽນນີ້ເພື່ອຊ່ວຍໃນການບັລຍາຍ. ອ່ານຫົວຂໍ້ໃຫຍ່, ອະທິບາຍ, ຕອບຄຳຖາມ.

<u>ນຳບົດຮຽນໄປໃຊ້ໃນຊີວິດ</u> (ໃຊ້ເວລາ 15 ນາທີ)

4. ແບ່ງກະດານອອກເປັນສອງພາກ; ພາກນຶ່ງຂຽນ "ທັສນະຝ່າຍໂລກ" ແລະພາກທີສອງຂຽນ "ທັສນະຂອງພຣະຄຣິດ." ຂຽນຄວາມເຫັນເຣື່ອງ "ຄວາມຍິ່ງໃຫຍ່" ຕາມຄວາມຄິດຂອງໂລກລົງໃສ່ຝ່າຍໂລກ ແລະຕາມຄວາມຄິດຂອງຄຣິສຕຽນລົງໃສ່ຝ່າຍພຣະຄຣິດ. ຊັກຊວນນັກຮຽນໃຫ້ນຳຄວາມຄິດເຫັນບາງຢ່າງເຣື່ອງຄວາມຍິ່ງໃຫຍ່ທີ່ແທ້ໃນຝ່າຍພຣະຄຣິດໄປປະຕິບັດໃນຊີວິດ. ອະທິຖານປິດ.

# <u>ຄຳແນະນຳສຳລັບຄຣູສອນ</u>

# <u>ບົດຮຽນທີ 10</u>

# <u>ພຣະເຢຊູຊົງໃຊ້ສິດອຳນາດ</u>

---

<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u> ມາຣະໂກ 11:15-18, 27--12:12
<u>ຂໍ້ພຣະຄັມພີສຳລັບເບື້ອງຫຼັງ:</u> ມາຣະໂກ 11:1--12:44
<u>ຈຸດສຳຄັນຂອງບົດຮຽນນີ້:</u> ການກະທຳແລະຄຳສັ່ງສອນຂອງພຣະເຢຊູໄດ້ສະແດງເຖິງສິດອຳນາດຂອງພຣະອົງໃນຖານະພຣະບຸດຂອງພຣະເຈົ້າ.
<u>ຄຳຖາມເພື່ອການສຳຣວດ:</u> ໃຜເປັນຄົນຮັບຜິດຊອບໃນຂົງເຂດນີ້?
<u>ຈຸດປະສົງຂອງບົດຮຽນນີ້:</u> ເພື່ອຈະຮູ້ຄວາມໝາຍຕ່າງໆຈາກຊີວິດຂອງພຣະເຢຊູທີ່ໄດ້ຊົງສະແດງໃຫ້ເຫັນຜ່ານການກະທຳແລະຄຳສັ່ງສອນຂອງພຣະອົງ.

## <u>ແຜນສຳລັບການສອນ</u>

<u>ນຳເຣື່ອງເຂົ້າສູ່ຊີວິດຈິງ</u> (ໃຊ້ເວລາ 5 ນາທີ)

1. ບົດຮຽນນີ້ນີ້ຈະເວົ້າເຖິງເຣື່ອງສິດອຳນາດ. ຊັກຊວນນັກຮຽນບາງຄົນໃຫ້ເລົ່າເຣື່ອງປະສົບການກ່ຽວກັບການໃຊ້ສິດອຳນາດຫລືການຖືກຄົນອື່ນໃຊ້ສິດເດັດຂາດກັບພວກເຂົາເຈົ້າ. ບອກນັກຮຽນໃຫ້ຮູ້ວ່າພຣະເຢຊູມີສິດອຳນາດເໜືອທຸກຢ່າງເພາະພຣະອົງເປັນພຣະເຈົ້າ; ໃນບົດຮຽນນີ້ ພຣະອົງບໍ່ແມ່ນຜູ້ຖືກເຄາະຮ້າຍ ແຕ່ພຣະອົງເປັນຜູ້ຊັຍຊະນະ. ຊັຍຊະນະອັນຍິ່ງໃຫຍ່ຂອງພຣະອົງຄືການຕາຍແທນມະນຸດແລະການຖືກເຮັດໃຫ້ຄືນມາຈາກຄວາມຕາຍ.

<u>ນຳພາການສຶກສາພຣະທັມ</u> (ໃຊ້ເວລາ 30 ນາທີ)

2. ຂຽນຫົວຂໍ້ໃຫຍ່ໃສ່ກະດານ

   ພຣະເຢຊູຊົງໃຊ້ສິດອຳນາດ

   ພຣະເຢຊູຊົງປ້ອຍຕົ້ນເດື່ອເທດ (ມາຣະໂກ 11:12-14, 20-26)
   ພຣະເຢຊູຊົງຊຳຣະພຣະວິຫານ (ມາຣະໂກ 11:11, 15-19)
   ການທ້າທາຍເຣື່ອງສິດອຳນາດ (ມາຣະໂກ 11:27-33)
   ຄວາມເຫັນແກ່ຕົວຂອງພວກນັກທັມ (ມາຣະໂກ 12:1-12)

3. ເລົ່າເຣື່ອງການສະເດັດເຂົ້າກຸງເຢຣູຊາເລັມຢ່າງມີຊັຍຂອງອົງພຣະເຢຊູໃນ ມາຣະໂກ 11:1-10 ໃຫ້ນັກຮຽນຟັງແບບສັ້ນ. ພຣະເຢຊູເຄີຍໄດ້ສັ່ງພວກສາວົກບໍ່ໃຫ້ເວົ້າວ່າພຣະອົງຄືກະສັດ; ແຕ່ໃນເວລານີ້ເປັນເວລາທີ່ທຸກຢ່າງຈະໄດ້ຖືກເປີດເຜີຍ. ພຣະອົງຈະເປີດເຜີຍຈຸດປະສົງຕ່າງໆຂອງພຣະອົງພ້ອມທັງຈະເຮັດໃຫ້ທຸກຢ່າງໄດ້ສຳເຣັດລົງ.

ທຸກຢ່າງຈະຕ້ອງເປັນໄປຕາມແຜນແລະຕາມຈຸດປະສົງທີ່ພຣະອົງໄດ້ຊົງລົງມາໃນໂລກນີ້. ຄຣິສຕຽນຈະຕ້ອງເຮັດທຸກຢ່າງຕາມພຣະປະສົງຂອງພຣະເຈົ້າໃນຊີວິດຂອງພວກເຂົາເຖິງຈະມີບັນຫາຫລືພັຍອັນຕະລາຍກໍຕາມ.

4. ພານັກຮຽນໃຫ້ເບິ່ງພຣະທັມມາຣະໂກ 11:12-22. ໃຊ້ຄໍາອະທິບາຍສໍາລັບບົດຮຽນນີ້ໃນການບັລຍາຍ. ອະທິບາຍຄໍາສອນທີ່ຊ້ອນຢູ່ເບື້ອງຫລັງຂອງການປ້ອຍຕົ້ນເດື່ອເທດ; ໂດຍສເພາະແລ້ວໃຫ້ອ້າງເຖິງສະພາບການໃນລະບົບສາສນາຂອງຄົນຢິວໃນສມັຍນັ້ນ ແລະການຕໍ່ຕ້ານນັກສາສນາຂອງພຣະເຢຊູຄຣິດ. ຄໍາສອນສໍາລັບຄຣິສຕຽນຄືໃຫ້ພວກເຮົາຕິດສນິດຢູ່ກັບພຣະຄຣິດ ແລະໃຫ້ຊີວິດຂອງພວກເຮົາເປັນຊີວິດທີ່ເກີດຜົນແທນທີ່ຈະເຕັມໄປດ້ວຍພິທີການຕ່າງໆແຕ່ບໍ່ມີຜົນຫຍັງເລີຍ.

5. ອ່ານ ມາຣະໂກ 11:15-18 ໃຫ້ທຸກຄົນໄດ້ຍິນ. ອະທິບາຍປະວັດເຣື່ອງພຣະວິຫານທີ່ກຸງເຢຣູຊາເລັມ ຈົນເຖິງເຣື່ອງການກໍ່ສ້າງວິຫານຂອງກະສັດເຮໂຣດ. ອະທິບາຍວ່າເປັນຫຍັງຈຶ່ງໄດ້ມີການແລກປ່ຽນເງິນແລະການຂາຍສັດຕ່າງໆໃນເຂດພຣະວິຫານ. ອະທິບາຍເຫດຜົນຂອງພຣະເຢຊູ ແລະການຊໍາຣະພຣະວິຫານ. ແນະນໍາຄວາມໝາຍຈາກເຣື່ອງນີ້ສໍາລັບຊີວິດຄຣິສຕຽນ.

6. ອ່ານມາຣະໂກ 11:27-12:12) ໃຫ້ທຸກຄົນໄດ້ຍິນ. ເລົ່າເຣື່ອງການຕອບຄໍາທ້າທາຍເຣື່ອງສິດອໍານາດຂອງພຣະເຢຊູໃຫ້ນັກຮຽນຟັງແບບສັ້ນໆ. ເນັ້ນຄໍາອະທິບາຍຂອງພຣະເຢຊູເຣື່ອງ ອິສຣາເອັນບໍ່ໄດ້ເຮັດຕາມຄໍາສັ່ງຂອງພຣະເຈົ້າ, ອິສຣາເອັນໄດ້ປະຕິເສດຜູ້ປະກາດພຣະທັມ, ແລະອິສຣາເອັນກໍາລັງຈະປະຫານພຣະບຸດຂອງພຣະເຈົ້າ. ອະທິບາຍພຣະທັມມາຣະໂກ 12 ໃຫ້ຈົບ ແລະຊີ້ໃຫ້ທຸກຄົນໄດ້ເຫັນການປ້ອງກັນສິດອໍານາດ ແລະການຫລີກຈາກບ້ວງມານຂອງພຣະເຢຊູຄຣິດ.

<u>ນໍາບົດຮຽນໄປໃຊ້ໃນຊີວິດ</u> (ໃຊ້ເວລາ 15 ນາທີ)

7. ຊັກຊວນນັກຮຽນໃຫ້ຈົດຈໍາຄວາມໝາຍສໍາຄັນສໍາລັບຊີວິດຈາກບົດຮຽນນີ້; ຊັກຊວນນັກຮຽນໃຫ້ອະທິຖານເພື່ອການປ່ຽນແປງບາງຢ່າງທີ່ເຂົາເຈົ້າຕ້ອງເຮັດໃນຊີວິດ.

# <u>ຄໍາແນະນໍາສໍາລັບຄຣູສອນ</u>
# <u>ບົດຮຽນທີ 11</u>
# <u>ພຣະເຢຊູຖວາຍຊີວິດຂອງພຣະອົງເອງ</u>

---

**<u>ຂໍ້ພຣະຄັມພີສໍາລັບບົດຮຽນນີ້:</u>** ມາຣະໂກ 14: 12-26; 32-42

**<u>ຂໍ້ພຣະຄັມພີສໍາລັບເບື້ອງຫລັງ:</u>** ມາຣະໂກ 14:1-42

**<u>ຈຸດສໍາຄັນຂອງບົດຮຽນນີ້:</u>** ພຣະເຢຊູສມັກໃຈທີ່ຈະຖວາຍຊີວິດຂອງຕົນດ້ວຍຄວາມເຊື່ອ ໃນພຣະເຈົ້າພຣະບິດາ ຜູ້ຊົງສົ່ງພຣະອົງລົງມາ.

**<u>ຄໍາຖາມເພື່ອສໍາຣວດ:</u>** ແມ່ນຫຍັງທີ່ມີຄຸນຄ່າຫລາຍກວ່າຫມູ່ໃນຊີວິດຂອງຄົນໆນຶ່ງ?

**<u>ຈຸດປະສົງຂອງບົດຮຽນ:</u>** ເພື່ອຊ່ວຍໃຫ້ນັກຮຽນ ເຂົ້າໃຈໃນການຮູ້ບຸນຄຸນທີ່ພຣະເຢຊູໄດ້ສະລະຊີວິດ ຫລືການຖວາຍຕົວ ຂອງພຣະອົງ.

## <u>ແຜນການສິດສອນ</u>

## <u>ນໍາເຣື່ອງເຂົ້າສູ່ຊີວິດຈິງ</u>

1. ກ່ອນເຂົ້າຫ້ອງຮຽນ ໃຫ້ຄຣູສອນ ຕຽມອັດເອກສານນີ້ໄວ້ລ່ວງຫນ້າ ເພື່ອໃຫ້ພຽງພໍກັບນັກຮຽນຂອງຕົນ.

<u>ຊີວິດຂອງຂ້ອຍມີຄຸນຄ່າຫລາຍປານໃດ?</u>

ໃນນີ້ບໍ່ແມ່ນການບັງຄັບ, ແຕ່ໃຫ້ພິຈາຣະນາໃນການສັ່ງຊາຂ້າງລຸ່ມນີ້. ໃຫ້ຂີດເສັ້ນຕັດກັບເສັ້ນຂນານເທິງຊື່ຜູ້ທີ່ທ່ານອາດຈະຍອມຕາຍເພື່ອຜູ້ນັ້ນໄດ້.

<u>ບໍ່ຍອມຕາຍເພື່ອ</u> <u>ຍອມຕາຍເພື່ອ</u>

---

ສັດຕຣູ ການມີໂທດ ຄົນແປກຫນ້າ ເພື່ອນບ້ານໃກ້ຄຽງ ມິດສະຫາຍ ພີ່ນ້ອງ ຄູ່ຄອງ ລູກ

ຫລັງຈາກທຸກຄົນຫມາຍລົງແລ້ວ, ຂໍຄວາມເຫັນແຕ່ລະຄົນ. ແລ້ວໃຫ້ກ້າວເຂົ້າມາຫາບົດຮຽນ ວ່າພຣະເຢຊູພໍໃຈທີ່ຈະຕາຍເພື່ອຄົນບາບເທິງໄມ້ກາງແຂນ.

## <u>ນໍາພາສຶກສາພຣະທັມ</u>

2. ໃຫ້ທວນຄືນບົດຮຽນທີ 10 ແດ່ເລັກນ້ອຍ. ໃຫ້ນັກຮຽນຄົນນຶ່ງອ່ານພຣະຄັມພີ ມາຣະໂກ 14 : 12-26 ແລ້ວໃຫ້ອອກຄໍາຄິດເຫັນກ່ຽວກັບການທີ່ພຣະເຢຊູ ຊົງມີແຜນການນີ້. (ເຂົ້າໃນແຜນການຂອງພຣະບິດາ)

**ເຣື່ອງເປັນຫນ້າຢາກຫົວຫລັງຈາກທີ່ຂ້ອຍກັບຈາກນໍ້າສ້າງ.**

ມີເຣື່ອງນຶ່ງເກີດຂຶ້ນກັບຂ້ອຍມື້ນີ້. ນາຍຂອງຂ້ອຍສົ່ງຂ້ອຍໄປຕັກນໍາ. ຕາມທັມມະດາແລ້ວ ງານນີ້ເປັນງານຂອງຜູ້ຍິງ ແຕ່ວ່າພວກເຂົາຄາວຽກກັນຫມົດທຸກຄົນ. ມື້ນີ້ເປັນມື້ພິເສດໃນກຸງເຢຣູຊາເລັມ ຜູ້ຄົນກໍເຕັມທົ່ວໄປ. ອາກາດ

ກໍອືບອວນໄປດ້ວຍກິ່ນ ທີ່ເຜົາເຄື່ອງບູຊາ ແລະ ການທຳອາຫານຂອງແຕ່ລະເຮືອນ. ພວກເຮົາລື້ງເຄີຍກັບສຽງອຶກກະທຶກ ແບບນີ້ທຸກໆປີ.

ຢ່າງໃດກໍຕາມ, ຂ້ອຍຖືໝໍ້ນ້ຳຍ່າງໄປ ຊາຍສອງຄົນກໍເຂົ້າມາຫາຂ້ອຍ. ພວກເຂົາເວົ້າວ່າ ພວກເຂົາຢາກຕາມໄປເບິ່ງເຮືອນຂ້ອຍ. ຂ້ອຍບໍ່ຮູ້ວ່າພວກນີ້ເຂົາຕ້ອງການຫຍັງ, ແຕ່ພວກເຂົາກໍບໍ່ຄືຄົນຂີ້ລັກຂີ້ສົກຫຍັງດອກ. ພວກເຂົາເປັນຄົນທັມມະດາໆ ດັ່ງນັ້ນຂ້ອຍຈຶ່ງອະນຸຍາດໃຫ້ເຂົານຳຂ້ອຍໄປ. ເມື່ອມາເຖິງເຮືອນ, ນາຍຂອງຂ້ອຍກໍມາພົບທີ່ໜ້າປະຕູ, ເບິ່ງຄືວ່ານາຍຂອງຂ້ອຍຮູ້ມາກ່ອນແລ້ວວ່າຈະມີຄົນຕາມຂ້ອຍມາ. ເພິ່ນເຊີນພວກເຂົາເຂົ້າມາໃນເຮືອນ, ເຊີນໄປເບິ່ງຫ້ອງຊັ້ນເທິງ ແລະກ່າວກັບເຂົາວ່າ ເຊີນຕາມສະບາຍໂລດ. ຂ້ອຍກໍໄປເຮັດວຽກຂອງຂ້ອຍຕາມເຄີຍ.

ນາຍຂອງຂ້ອຍ ບອກຂ້ອຍໃຫ້ຊ່ວຍສອງຄົນນີ້ໃນການຈັດຕຽມ. ຂ້ອຍຮູ້ດີໃນການຈັດຕຽມນີ້ ຈະເປັນການຕຽມແກະ, ເຂົ້າຈີ່ບໍ່ມີເຊື້ອແປ້ງ, ຫລືເຫລົ້າອະງຸ່ນ ຂ້ອຍຮູ້ຈັກວ່າຈະປະສົມຢ່າງໃດ. ພວກເຮົາຈັດຕຽມທຸກຢ່າງ ແລ້ວກໍນຳຂຶ້ນໄປທີ່ຫ້ອງຊັ້ນເທິງ ລໍຖ້າເວລາຈະມາເຖິງ.

ຕໍ່ມາ ຜູ້ທີ່ຊື່ວ່າ ເຢຊູ ແລະສາວົກກໍມາເຖິງເຮືອນ. ຫລາຍຄົນໃນກຸງເຢຣູຊາເລັມ ຮູ້ຈັກພຣະເຢຊູດີ ແລະກໍເຄີຍໄດ້ຟັງຄຳສອນຂອງລາວ. ສຳຫລັບຕົວຂ້ອຍ, ຂ້ອຍບໍ່ເຄີຍໄດ້ຍິນອີ່ຫລີ ແຕ່ນາຍຂອງຂ້ອຍກໍໄດ້ຟັງລາວເໝືອນກັນ.

ຢູ່ໃນພາເຂົ້າອາຫານແລງວັນນັ້ນ ຂ້ອຍໄດ້ສັງເກດເບິ່ງຢູ່ທາງນອກປະຕູ ວ່າທຸກສິ່ງເປັນໄປດ້ວຍດີຫລືບໍ່. ສາວົກຂອງລາວມີຄວາມເສັຽໃຈ ເພາະລາວກ່າວວ່າຈະມີຄົນນຶ່ງຈະທໍຣະຍົດຕໍ່ລາວ. ໝົດທຸກຄົນກໍປະຕິເສດຕໍ່ຄຳເວົ້ານັ້ນ. ເມື່ອຮັປທານອາຫານເປັນທີ່ຮຽບຮ້ອຍແລ້ວ ພຣະເຢຊູກໍຫັກເຂົ້າຈີ່ ແລະກິນນ້ຳອະງຸ່ນກັນທຸກຄົນແລ້ວກໍພາກັນຈາກໄປ. ຂ້ອຍກໍໄປມ້ຽນພາເຂົ້າຕາມໜ້າທີ່ຂອງຂ້ອຍ. ຂ້ອຍບໍ່ຮູ້ວ່າຈະອະທິບາຍຢ່າງໃດ, ຂ້ອຍຍັງຮູ້ສຶກວ່າຍັງມີພຣະວິນຍານບໍຣິສຸດຢູ່. ໜ້າແປກປລາດ!!!!!!!!!

3. ໃຫ້ນັກຮຽນຄົນນຶ່ງອ່ານ ພຣະຄັມພີ ມາຣະໂກ 14:12-26 ຄຣູຈະອະທິບາຍ ສັ້ນໆ ໂດຍໃຫ້ນັກຮຽນປະກອບສ່ວນອອກຄຳເຫັນດ້ວຍ. ຕໍ່ໄປກໍອ່ານ ຂໍ້ 32-42 ແລະຕໍ່ໄປ ກໍ ເນັ້ນໜັກ ຂໍ້ 36.

## **<u>ນຳມາໃຊ້ໃນຊີວິດປະຈຳວັນ</u>**

4. ໜູນໃຈໃຫ້ນັກຮຽນອ່ານເພງສັຣເສີນບົດທີ 113 ຫາ ບົດທີ 118 ເວລາກັບບ້ານ. ເພາະຂໍ້ພຣະທັມເຫລົ່ານີ້ຈະເວົ້າກ່ຽວກັບ ເທສການປັສຄາ ຂອງຄົນອິສຣາເອນຕອນອອກຈາກອີຢິບ. ໜູນໃຈ ໃຫ້ນັກຮຽນຮູ້ບຸນຄຸນທີ່ພຣະເຢຊູຊົງຕັ້ງວັນນີ້ເພື່ອພວກເຮົາ.
ອະທິຖານຂອບຄຸນພຣະເຈົ້າ , ໃຫ້ທຸກຄົນພ້ອມໃຈນະມັສການພຣະເຈົ້າຮ່ວມກັນ.

**ຄຳແນະນຳສຳລັບຄຣູສອນ**

**ບົດຮຽນທີ 12**

**ພຣະເຢຊູຖືກຕັດສິນລົງໂທດ**

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ມາຣະໂກ 14: 53 -- 15:20

**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** ມາຣະໂກ 14:43--15:20

**ຈຸດສຳຄັນຂອງບົດຮຽນນີ້:** ຫລາຍຄົນມີສ່ວນຮ່ວມ ໃນການສອບສວນ, ພຣະເຢຊູໂຕ້ຕອບດ້ວຍການມິດງຽບ ແລະ ວາງເສີຍ.

**ຄຳຖາມເພື່ອສຳຣວດ:** ທ່ານຈະເຮັດຢ່າງໃດ ໃນເມື່ອຖືກທ້າທາຍໃນຄວາມເຊື່ອ?

**ຈຸດປະສົງຂອງບົດຮຽນ:** ໃນການທົດລອງນີ້ ພຣະເຢຊູຊົງ ໂຕ້ຕອບຜູ້ທີ່ມາສອບສວນພຣະອົງຢ່າງໃດ?

## ແຜນການສິດສອນ

## ນຳເຣື່ອງເຂົ້າສູ່ຊີວິດຈິງ

1. ໃນເວລາທ່ານມີຄວາມຢ້ານ ແລະມີຄວາມຫວຸ້ນວາຍ ທ່ານເຮັດຢ່າງໃດ? ທ່ານມີຄວາມຮັບຜິດຊອບຢ່າງໃດ ເມື່ອເຫດການຍຸດຕິລົງ? ໃຫ້ສອງຄົນອອກຄຳຄິດເຫັນຕາມຄວາມສມັກໃຈ. ຄຣູຈະພະຍາຍາມດຶງຄວາມຄິດເຂົ້າມາຫາພຣະເຢຊູວ່າພຣະອົງກະທຳຢ່າງໃດ ເມື່ອມີບັນຫາເກີດຂຶ້ນ.

## ນຳພາສຶກສາພຣະທັມ

2. ມອບຫນ້າທີ່ໃຫ້ແຕ່ລະຄົນ ຖ້າຫາກມີຫລາຍກວ່າຫົກຄົນໃຫ້ຣວມກັນເຂົ້າ (ບໍ່ໃຫ້ກາຍ ຫົກຫມວດ) ແຕ່ລະຫມວດໃຫ້ສຶກສາຂໍ້ພຣະຄັມທີ່ໃຫ້ໄວ້ໃນແຕ່ລະຫມວດ.

3. ແຕ່ລະຫມວດໃຫ້ ລາຍງານຕອບຕາມຄຳຖາມນີ້:

ຫມວດທີ ນຶ່ງ ຢູດາອິສກາຣີອົດ (ສຶກສາມາຣະໂກ 14:43-52)

1. ເປັນຫຍັງເຈົ້າຈຶ່ງຂາຍພຣະເຢຊູ? 2. ແມ່ນຫຍັງຄືຄວາມຫມາຍຂອງການຈູບ? 3. ເຈົ້າມີຫນ້າທີ່ຮັບຫຍັງເວລາເຈົ້າຈູບພຣະເຢຊູ? 4. ເຈົ້າຮູ້ສຶກຢ່າງໃດເວລາທະຫານຈັບພຣະເຢຊູໄປແລ້ວ?

ຫມວດທີ ສອງ ພວກນັກທັມ (ສຶກສາ ມາຣະໂກ 14:53-64)

1. ເປັນຫຍັງພຣະເຢຊູຈຶ່ງຖືກນຳມາຫາສະພາ ແຊນຮິດຣິນ? 2. ມີສິ່ງໃດທີ່ທ່ານຈະຮຽນຈາກພຣະເຢຊູ ສິ່ງທີ່ທ່ານຍັງບໍ່ທັນຮູ້? 3. ແມ່ນຫຍັງທີ່ພວກທ່ານເຮັດຜິດຕໍ່ພຣະເຢຊູ? 4. ທ່ານມີຄວາມຮູ້ສຶກຢ່າງໃດ ເມື່ອພຣະເຢຊູກ່າວວ່າທ່ານເປັນພຣະຄຣິດ? 5. ພຣະເຢຊູເປັນຢ່າງໃດໃນເວລາພຣະອົງຖືກນຳມາພິຈາຣະນາຄະດີ?

3. ຫມວດທີ ສາມ ຊີໂມນ ເປໂຕ (ສຶກສາ ມາຣະໂກ 14:54,66-72)

1. ທ່ານຢ້ານເຂົາຈັບທ່ານບໍ່ ເວລາທ່ານຕິດຕາມຈອບເບິ່ງພຣະເຢຊູ? 2. ທ່ານຮູ້ສຶກຢ່າງໃດ ເມື່ອຍິງຄົນໃຊ້ທ້ວງທ່ານວ່າ ທ່ານເຄີຍຢູ່ກັບພຣະເຢຊູ? 3. ເປັນຫຍັງເຈົ້າຈຶ່ງປະຕິເສດວ່າບໍ່ຮູ້ຈັກລາວ? 4. ທ່ານຮູ້ສຶກຢ່າງໃດ ເມື່ອທ່ານໄດ້ຍິນໄກ່ຂັນເຖິງສາມຄັ້ງ? 5. ທ່ານສັງເກດເຫັນຫຍັງແດ່ (ການກະທຳແລະການປະພຶດ)ໃນພຣະເຢຊູເມື່ອເວລາພິຈາຣະນາຄະດີ?

4. ຫມວດທີ ສີ່ ສະມາຊິກສະພາ ແຊນຮີດຣິນ (ສຶກສາ ມາຣະໂກ 14:53-65)
   1. ທ່ານວາງອຸບາຍຢ່າງໃດ ເພື່ອຈະຈັບພຣະເຢຊູ? 2. ເປັນຫຍັງສະພາແຊນຮີດຣິນຈຶ່ງບໍ່ຮັບພຣະເຢຊູ ເມື່ອພຣະອົງກ່າວວ່າພຣະອົງເປັນພຣະເມຊີອາ? 3. ເປັນຫຍັງພວກທ່ານຈຶ່ງປມາດແລະຖົ່ມນ້ຳລາຍໃສ່ພຣະອົງ?
   4. ທ່ານບອກໄດ້ບໍ່ວ່າ ພຣະອົງວາງຕົວຢ່າງໃດໃນເວລາພິຈາຣະນາຄະດີ?

5. ຫມວດທີ ຫ້າ ປີລາດ (ສຶກສາ ມາຣະໂກ 15:1-15)
   1. ເຈົ້າຄິດຢ່າງໃດ ເມື່ອເຂົານຳພຣະເຢຊູມາຫາເຈົ້າ? 2. ເຈົ້າຄິດຢ່າງໃດເມື່ອຝູງຊົນຮ້ອງບອກໃຫ້ເຈົ້າປ່ອຍບາຣະບາ?
   3. ເຈົ້າເຊື່ອວ່າພຣະເຢຊູມີຄວາມຜິດແທ້ບໍ່? 4. ເປັນຫຍັງເຈົ້າຈຶ່ງຟັງຄວາມພວກເຈົ້ານາຍແລະຝູງຊົນ?
   5. ໃນເວລາເຈົ້າສອບສວນພຣະເຢຊູເຈົ້າເຫັນຜິດຕິກັນຫຍັງແດ່ຈາກພຣະອົງ?

6. ຫມວດທີ ຫົກ ທະຫານໂຣມັນ (ສຶກສາ ມາຣະໂກ 15:16-20)
   1. ມີທະຫານປະມານຫລາຍປານໃດທີ່ມາດູຖູກພຣະເຢຊູນຳເຈົ້າ? 2. ເຈົ້າຮູ້ສຶກຢ່າງໃດເມື່ອເຈົ້າໄດ້ທໍຣະມານພຣະເຢຊູແລ້ວ? 3. ເປັນຫຍັງເຈົ້າຈຶ່ງເອົາຜ້າສີມ່ວງມາຄຸມແລະເອົາຫມວກຫນາມມາໃສ່ຫົວໃຫ້ພຣະເຢຊູ?
   4. ເມື່ອພຣະເຢຊູຖືກທໍຣະມານ ພຣະອົງມີອາການຢ່າງໃດ?

## <u>ນຳມາໃຊ້ໃນຊີວິດປະຈຳວັນ</u>

4. ຫນູນໃຈໃຫ້ນັກຮຽນ ເຮັດຕາມຕົວຢ່າງທີ່ພຣະເຢຊູໄດ້ສະແດງອອກ ບໍ່ວ່າຈະເປັນການກະທຳ ແລະນິສັຍ. ໃນຊີວິດປະຈຳວັນພວກເຮົາກໍອາດຈະພົບເຫມືອນພຣະອົງ ເຖິງແມ່ນຈະບໍ່ຫນັກເຫມືອນພຣະເຢຊູ ແຕ່ພວກເຮົາກໍຕ້ອງມີຄວາມອົດທົນ.

## ຄຳແນະນຳສຳລັບຄຣູສອນ
## ບົດຮຽນທີ 13
## ພຣະເຢຊູຊົງສິ້ນພຣະຊົນແລະເປັນຄືນມາອີກ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ມາຣະໂກ 15:21--41; 16:1-8

**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** ມາຣະໂກ 15:21--16:8

**ຈຸດສຳຄັນຂອງບົດຮຽນນີ້:** ການສິ້ນພຣະຊົນແລະການເປັນຄືນມາ ສະແດງວ່າພຣະເຢຊູຊົງເປັນພຣະບຸດຂອງພຣະເຈົ້າແທ້.

**ຄຳຖາມເພື່ອສຳຣວດ:** ແມ່ນຫຍັງທີ່ເຮັດໃຫ້ທ່ານເຊື່ອພຣະເຢຊູ ການດຳເນີນຊີວິດ,ການສິ້ນພຣະຊົນຫລືການຄືນພຣະຊົນ?

**ຈຸດປະສົງຂອງບົດຮຽນ:** ເພື່ອໃຫ້ເຫັນຈຸດເດັ່ນ ໃນການປ່າວປະກາດ, ໃນການຖວາຍຕົວ, ໃນການຄືນພຣະຊົນ ວ່າພຣະເຢຊູຊົງເປັນພຣະບຸດຂອງພຣະເຈົ້າແທ້ ຜູ້ທີ່ເຮົາມອບຊີວິດໃຫ້.

## ແຜນການສິດສອນ

### ນຳເຣື່ອງເຂົ້າສູ່ຊີວິດຈິງ

ເບື້ອງຊ້າຍຂອງກະດານ ໃຫ້ຂຽນຊື່ ນັກຟຸດບອນ, ນັກບັສແກັດບອນ ທີ່ທ່ານຮູ້.
ເບື້ອງຂວາຂອງກະດານ ໃຫ້ຂຽນ ວ່າ ເປັນຫຍັງເຂົາເຈົ້າຈຶ່ງສຳເຣັດ. (ເຂົາຕ້ອງຟັງຄວາມຂອງຜູ້ຝຶກ)
ຄຣູຕ້ອງອະທິບາຍເຖິງພຣະເຢຊູວ່າເປັນຍັງພຣະອົງຈຶ່ງສຳເຣັດເປົ້າໝາຍໄດ້. ພຣະເຢຊູສຳເຣັດຢ່າງໃດໃນແຜ່ນດິນໂລກ.

### ນຳພາສຶກສາພຣະທັມ

2. ໃຫ້ຊອກຫາເຣື່ອງການສິ້ນພຣະຊົນຂອງພຣະເຢຊູ ວ່າ ໃນຕອນໃດທີ່ຢັ້ງຢືນວ່າພຣະເຢຊູເປັນບຸດຂອງພຣະເຈົ້າແທ້.
   1. ຊີໂມນຄົນກີເຣເນ ແບກກາງແຂນແທນພຣະອົງ (15:21)
   2. ທະຫານນຳນັກໂທດອອກໄປປະຫານ (15:22-27)
   3. ຝູງຊົນໝິ່ນປມາດພຣະອົງ (15:29-32)
   4. ພຣະເຢຊູແບກຄວາມບາບຂອງໂລກ (15:33-39)
   5. ພວກຜູ້ຍິງຕິດຕາມພຣະອົງດ້ວຍຄວາມເຊື່ອ (15:40-41)

   ພຣະເຢຊູ ຊົງຟື້ນຄືນພຣະຊົນ (ມາຣະໂກ 15:42--16:8)
   1. ພຣະເຢຊູຊົງສິ້ນພຣະຊົນແລະ ຖືກຝັງໄວ້ (15: 42-47)
   2. ພຣະເຢຊູ ຟື້ນຂຶ້ນມາໃໝ່ ແລະຍັງມີຊີວິດຢູ່ອີກ (16:1-8)

3. ແບ່ງຫ້ອງອອກເປັນສອງຝ່າຍໆນຶ່ງໃຫ້ອ່ານ ມາຣະໂກ 15:22-27 ແລະອີກເຄິ່ງຫ້ອງ ໃຫ້ອ່ານ ມາຣະໂກ 15:29-32 ແລະໃຫ້ ຊອກຫາວ່າສິ່ງໃດທີ່ຢັ້ງຢືນວ່າ ພຣະເຢຊູເປັນພຣະບຸດຂອງພຣະເຈົ້າ. ຫລັງຈາກນັ້ນ ກໍໃຫ້ຜູ້ຕາງຫນ້າຫມູ່ ອະທິບາຍ.

4. ໂດຍອີງໃສ່ເຈັ້ຽບົດຮຽນ ໃຫ້ຄຣູອະທິບາຍ 15:33-39. (ຢ່າລືມ: ພຣະເຈົ້າຊົງຢູ່ໃນພຣະເຢຊູ, ພຣະອົງເຫນືອມະນຸດ, ການຕາຍ, ການເສັຽສລະ, ການສມັກໃຈ, ການຈີກຂາດຂອງຜ້າກັ້ງ, ຄຳເວົ້າຂອງທະຫານໂຣມັນ.

5. ໃຫ້ນັກຮຽນຄົນນຶ່ງອ່ານ ມາຣະໂກ 15:40-41 ໃຫ້ສັງເກດເຖິງຄວາມເຊື່ອ ວ່າຜູ້ຍິງພວກນີ້ຕິດຕາມພຣະເຈົ້າຢ່າງແທ້ຈິງ, ເຖິງແມ່ນຈະມີບັນຫາກໍຕາມ.

6. ໃຫ້ຣວບຣວມ 15:42-47 ອະທິບາຍວ່າ ການຕາຍນັ້ນແມ່ນການຕາຍຢ່າງແທ້ຈິງ.

7. ອ່ານມາຣະໂກ 16:1-8 ແລະເປັນຫຍັງ ຂໍ້ 9 ແລະ ຂໍ້ 20 ຈຶ່ງບໍ່ຖືກນັບເຂົ້າໃນບົດຮຽນນີ້. ການຄືນພຣະຊົນຂອງພຣະເຢຊູຄຣິດກໍແມ່ນການຢັ້ງຢືນຢ່າງແນ່ນອນແລ້ວວ່າ ພຣະເຢຊູຊົງເປັນພຣະບຸດຂອງພຣະເຈົ້າຢ່າງບໍ່ມີຂໍ້ສົງສັຍ. ຜູ້ໃດຫາກເຊື່ອໃນພຣະເຢຊູ ຜູ້ນັ້ນກໍເປັນຜູ້ທີ່ເຊື່ອໃນພຣະເຈົ້າຢ່າງແທ້ຈິງ.

## <u>ນຳມາໃຊ້ໃນຊີວິດປະຈຳວັນ</u>

8. ຖ້າມີຄົນມາຖາມທ່ານໃນເວລາທ່ານທຳງານຫລື ຢູ່ບ້ານ ຫລືໄປງານລ້ຽງ ວ່າ ແມ່ນຫຍັງຄືສິ່ງສຳຄັນທີ່ສຸດທີ່ຢັ້ງຢືນວ່າ ພຣະເຢຊູຊົງເປັນພຣະເຈົ້ານັ້ນ ທ່ານຈະອະທິບາຍຫຍັ້ງ ໃຫ້ເຂົາເຂົ້າໃຈຢ່າງໃດ?

9. ຫນູນໃຈນັກຮຽນໃຫ້ຖວາຍຕົວ ໃຫ້ພຣະເຢຊູ, ພຣະບຸດຂອງພຣະເຈົ້າ. ທ່ານສາມາດເວົ້າໄດ້ບໍ່ວ່າ " ພຣະເຢຊູເປັນຂອງຂານ້ອຍ, ຂານ້ອຍຮັກພຣະອົງຫລາຍກວ່າສິ່ງໃດທັງຫມົດ "

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນເພີ້ມເຕີມ
# ພຣະເຢຊູຊົງສອນເຣື່ອງອະນາຄົດ

---

<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u> ມາຣະໂກ 13:1-37
<u>ຂໍ້ພຣະຄັມພີສຳລັບເບື້ອງຫຼັງ:</u> ມາຣະໂກ 13:1-37
<u>ຈຸດສຳຄັນຂອງບົດຮຽນນີ້:</u> ພຣະເຢຊູຊົງສອນສາວົກຂອງພຣະອົງໃຫ້ຄອຍຣະວັງແລະໃຫ້ຕັ້ງໝັ້ນຢູ່ໃນພຣະອົງ ແລະ ໃຫ້ຣະວັງການຈະຫລອກໃຫ້ຫລົງທາງຂອງຜູ້ຄົນທີ່ອ້າງຕົວເອງວ່າພວກເຂົາຮູ້ທຸກຢ່າງທີ່ຈະເກີດຂຶ້ນ.

<u>ຄຳຖາມເພື່ອການສຳຣວດ:</u> ພວກເຮົາຄວນຈະດຳເນີນຊີວິດແນວໃດໃນສະພາບການທີ່ບໍ່ແນ່ນອນ?
<u>ຈຸດປະສົງຂອງບົດຮຽນນີ້:</u> ເພື່ອສລຸບຄຳສອນຂອງພຣະເຢຊູຄຣິດໃນ ມາຣະໂກ 13 ແລະຫາວິທີທີ່ຖືກຕ້ອງເພື່ອການຕຽມພ້ອມສຳລັບການກັບມາຄັ້ງທີສອງຂອງພຣະອົງ.

## <u>ແຜນສຳລັບການສອນ</u>

<u>ນຳເຣື່ອງເຂົ້າສູ່ຊີວິດຈິງ</u> (ໃຊ້ເວລາ 5 ນາທີ)

1. ຖາມນັກຮຽນວ່າມີໃຜເຄີຍອ່ານປຶ້ມຫລືໜັງສືພິມ ເຣື່ອງວັນສຸດທ້າຍ ແລະການກັບມາຄັ້ງທີສອງຂອງພຣະເຢຊູຄຣິດ ບໍ່? ຖ້າມີ, ກໍຂໍໃຫ້ນັກຮຽນຄົນນັ້ນແບ່ງປັນເຣື່ອງນີ້ແບບສັ້ນໆເພື່ອຄົນອື່ນໆຈະໄດ້ຮຽນຮູ້. ເຕືອນນັກຮຽນວ່າ ມາຣະໂກບົດທີ 13 ຈະເວົ້າເຣື່ອງຄຳທຳນວາຍກ່ຽວກັບການທຳລາຍພຣະວິຫານແລະການກັບມາຄັ້ງທີສອງ.

<u>ນຳພາການສຶກສາພຣະທັມ</u> (ໃຊ້ເວລາ 30 ນາທີ)

2. ກ່ອນນີ້ຈະສອນບົດຮຽນນີ້, ໃຫ້ຕຽມເຈັ້ຽ ຖາມດັ່ງຕໍ່ໄປນີ້ໄວ້ເພື່ອຈະໄດ້ແຈກຢາຍໃຫ້ພວກນັກຮຽນ

### ພຣະເຢຊູຊົງສອນເຣື່ອງອະນາຄົດ
(ໃຫ້ເລືອກແລະໝາຍຄຳຕອບທີ່ຖືກທີ່ສຸດ)

ກ. ຄຳເຕືອນກ່ຽວກັບການທຳລາຍພຣະວິຫານ (ມາຣະໂກ 13:1-23)

(1). ໃນມາຣະໂກ 13:1, ພວກສາວົກພາກັນຕົກຕະລຶງເມື່ອໄດ້ເຫັນຄວາມໃຫຍ່ຂອງກ້ອນຫີນທີ່ໃຊ້ໃນການສ້າງວິຫານໂດຍ:

(ກ). ___ໂຊໂລໂມນ (ຂ). ___ຊາຣູບາເບັນ (ຄ). ___ເຮໂຣດ

(2). ພຣະເຢຊູຄຣິດທຳນວາຍເຣື່ອງການທຳລາຍວິຫານຊຶ່ງເກີດຂຶ້ນໃນປີ:

(ກ). ___ຄ.ສ 40 (ຂ). ___ຄ.ສ 70 (ຄ). ___ຄ.ສ 330

(3). ໃນມາຣະໂກ 13:5-6, ພຣະເຢຊູຊົງເຕືອນພວກສາວົກໃຫ້ຄອຍລະວັງ:

(ກ). ___ຄຣູປອມ (ຂ). ___ຜູ້ນຳໂຣມ (ຄ). ___ຄຣິສຕຽນ

(4). ສົງຄາມແລະພັຍຕ່າງໆແມ່ນ:

(ກ). ___ໝາຍຂອງວັນສຸດທ້າຍ (ຂ). ___ສິ່ງເກີດຂຶ້ນໃນທຸກໆສມັຍ

(5). ພຣະເຢຊູທຳນວາຍວ່າພວກສາວົກຂອງພຣະອົງຈະ:

(ກ). ___ບໍ່ມີບັນຫາ (ຂ). ___ຖືກຂົ່ມເຫງ (ຄ). ___ມີຄົນຮັກແພງ

(6). ໃນ ຂໍ້ 14-20, ພຣະເຢຊູຊົງສັ່ງໃຫ້ໜີໂດຍໄວເພາະ:

(ກ). ___ການທຳລາຍພຣະວິຫານ (ຂ). ___ວັນສຸດທ້າຍ

ຂ. ຄຳເຕືອນກ່ຽວກັບການກັບມາຄັ້ງທີສອງແລະວັນສຸດທ້າຍ (ມາຣະໂກ 13:24-27)

(7). ພຣະເຢຊູຊົງບອກພວກສາວົກວ່າ:

(ກ). ___ວັນສຸດທ້າຍໄດ້ມາເຖິງແລ້ວ

(ຂ). ___ພວກເຂົາຈະຮູ້ເວລາວັນສຸດທ້າຍມາເຖິງ

(8). ພຣະເຢຊູຊົງທຳນວາຍວ່າຄົນທັງຫລາຍຈະໄດ້ເຫັນ "ບຸດມະນຸດ" ມາ:

(ກ). ___ໃນເມກ (ຂ). ___ໃນຮູບຂອງກະສັດໂລກທີ່ເຂັ້ມແຂງ

(9). ພຣະເຢຊູຊົງບອກວ່າພວກເທວະດາຈະ:

(ກ). ___ເຮັດໃຫ້ຄຣິສຕະຈັກແຕກຢາຍອອກໄປ (ຂ). ___ຮວບຮວມຜູ້ທີ່ໄດ້ຊົງເລືອກໄວ້

ຄ. ຄຳເຕືອນກ່ຽວກັບການຄອຍລະວັງ (ມາຣະໂກ 13:28-37)

(10). ຄຳອຸປມາເຣື່ອງຕົ້ນເດື່ອເທດເວົ້າເຖິງ:

(ກ). ___ການທຳລາຍພຣະວິຫານ (ຂ).___ການກັບມາຄັ້ງທີສອງ

(11). ຄຳອຸປມາເຣື່ອງເຈົ້ານາຍກັບຈາກການເດີນທາງເວົ້າເຖິງ:

(ກ). ___ການທຳລາຍພຣະວິຫານ (ຂ).___ການກັບມາຄັ້ງທີສອງ

(12). ພຣະເຢຊູຊົງເຕືອນພວກສາວົກໃຫ້:

(ກ). ___ນອນ (ຂ). ___ບໍ່ຕ້ອງເຮັດຫຍັງ (ຄ). ___ຄອຍລະວັງ

ໃຫ້ເວລານັກຮຽນເພື່ອການຕອບຄຳຖາມຂ້າງເທິງນີ້; ອ່ານ 13:1-4 ສຳລັບຄຳຖາມ (1) ແລະ (2). ອະທິຍາຍເຣື່ອງການສ້າງພຣະວິຫານທັງສາມຄັ້ງ ແລະ ການທຳລາຍເຢຣູຊາເລັມຂອງພວກໂຣມ. ກວດເບິ່ງຄຳຕອບ; ຄຳຕອບທີ່ຖືກຕ້ອງສຳລັບຂໍ້ (1) ແມ່ນ (ຄ) ແລະ ຂໍ້ (2) ແມ່ນ (ຂ).

3. ອ່ານ ແລະອະທິບາຍ ມາຣະໂກ 13: 5-23 ສຳລັບຄຳຖາມ (3) ເຖິງ (6), 13:24-27 ສຳລັບຄຳຖາມ (7) ເຖິງ

(9), 13: 28-37 ສຳລັບຄຳຖາມ (10) ເຖິງ (12). ຄຳຕອບທີ່ຖືກຕ້ອງສຳລັບຂໍ້ (3) ແມ່ນ (ກ), (4) ແມ່ນ (ຂ), (5) ແມ່ນ (ຂ), (6) ແມ່ນ (ກ), (7) ແມ່ນ (ກ), (8) ແມ່ນ (ກ), (9) ແມ່ນ (ຂ), (10) ແມ່ນ (ກ), (11) ແມ່ນ (ຂ), (12) ແມ່ນ (ຄ).

<u>ນຳບົດຮຽນໄປໃຊ້ໃນຊີວິດ</u> (ໃຊ້ເວລາ 15 ນາທີ

4. ຊັກຊວນນັກຮຽນແຕ່ລະຄົນໃຫ້ສແວງຫາໂອກາດເພື່ອການເຮັດດີ ແທນທີ່ຈະເສັຽເວລາສຶກສາເພື່ອຈະໄດ້ຮູ້ວ່າ ພຣະເຢຊູຄຣິດຈະກັບມາປີໃດ, ເດືອນໃດ, ຫລືວັນເວລາໃດ. ອະທິຖານປິດ.

---

## <u>ການສ້າງພຣະວິຫານທັງສາມຄັ້ງ</u>

1. ກະສັດໂຊໂລໂມນເປັນຄົນສ້າງພຣະວິຫານຫລັງທີນຶ່ງແລະສຳເຣັດໃນປີ 950 ກ່ອນຄຣິສຕະສັກຣາຊ. ພວກບາບີໂລນ ໄດ້ທຳລາຍພຣະວິຫານຫລັງນີ້ໃນປີ 587 ກ່ອນຄຣິສຕະສັກຣາດ.

2. ເຊຣູບາເບນໄດ້ສ້າງພຣະວິຫານຫລັງທີສອງຂຶ້ນແທນບ່ອນທີ່ໂຊໂລໂມນໄດ້ສ້າງມາກ່ອນ. ການສ້າງພຣະວິຫານ ຄັ້ງນີ້ໄດ້ສຳເຣັດໃນປີ 515 ກ່ອນຄຣິສຕະສັກຣາດ. ພຣະວິຫານນີ້ມີຂນາດນ້ອຍກວ່າຫລັງທີ່ຖືກທຳລາຍໄປ. ພວກ ຢິວໄດ້ໃຊ້ພຣະວິຫານນີ້ເປັນເວລາຫລາຍກວ່າ 500 ປີ.

3. ກະສັດເຮໂຣດໄດ້ເລີ້ມສ້າງພຣະວິຫານຫລັງທີ່ສາມຂຶ້ນໃນພື້ນທີ່ດຽວກັນໃນປີ 19 ກ່ອນຄຣິສຕະສັກຣາດ; ວິຫານຫລັງນີ້ໄດ້ເຕັມໄປດ້ວຍຄວາມສວຍງາມເກີນກວ່າສິ່ງອື່ນໃດທີ່ໄດ້ຖືກສ້າງຂຶ້ນທີ່ກຸງເຢຣູຊາເລັມ. ບໍຣິເວນພຣະວິຫານໃຊ້ພື້ນທີ່ທັງໝົດປະມານ 1/6 ຂອງກຸງເຢຣູຊາເລັມ. ການສ້າງພຣະວິຫານຫລັງນີ້ຍັງບໍ່ທັນສຳເຣັດ ໃນເວລາທີ່ພວກສາວົກທູນພຣະເຢຊູວ່າ "ເບິ່ງດູ, ອາຈານເອີຍ ກ້ອນຫີນແລະຕຶກເຫລົ່ານີ້ເກີນວ່າງົດງາມ" (ມາຣະໂກ 13: 1). ພວກໂຣມໄດ້ທຳລາຍພຣະວິຫານຫລັງທີສາມນີ້ໃນປີ ຄຣິສຕະສັກຣາດ 70 ໃນຂນະທີ່ການສ້າງສາຍັງບໍ່ທັນໄດ້ສຳເຣັດເລີຍ.

# <u>ຄຳແນະນຳຄຣູສອນ</u>

# <u>ບົດຮຽນ 1</u>

# <u>ການປະກາດຂອງພຣະເຢຊູ</u>

---

<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u> ມາຣະໂກ 1:9-15, 29-39

<u>ຂໍ້ພຣະຄັມທັງໝົດສຳລັບບົດຮຽນນີ້:</u> ມາຣະໂກ 1:1-45

<u>ຈຸດສຳຄັນຂອງບົດຮຽນນີ້:</u> ບອກໃຫ້ເຮົາຮູ້ວ່າພຣະເຢຊູໄດ້ສະແດງຊີວິດການຢູ່ກິນເພື່ອພິສູດໃນການປະກາດເຣື່ອງແຜ່ນດິນສວັນມາໃກ້ແລ້ວນັ້ນມີຄວາມຈິງ.

<u>ຄຳຖາມເພື່ອການສຳຣວດ</u> ການສະເດັດມາຂອງພຣະເຢຊູຄຣິດມີຄວາມໝາຍຢ່າງໃດ?

<u>ຈຸດປະສົງຂອງບົດຮຽນນີ້:</u> ບອກໃຫ້ຮູ້ວ່າພຣະເຢຊູແມ່ນໃຜແລະພຣະອົງມີຄວາມສຳຄັນຫລາຍປານໃດ.

<u>ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນ</u>

- ນຳຂ່າວປະເສີດເຣື່ອງພຣະເຢຊູຄຣິດໄປເຖິງທຸກຄົນ.
- ຊ່ອຍເຫລືອເບິ່ງແຍງທຸກຄົນໃນພຣະນາມແຫ່ງພຣະເຢຊູຄຣິດທີ່ຕົກຢູ່ໃນຄວາມຂັດສົນ.
- ຈັດຕຽມໄພ່ພົນຂອງພຣະເຈົ້າໃຫ້ຕຽມພ້ອມໃນການປະກາດໃນໂບດແລະອອກໄປປະກາດທົ່ວໂລກ.
- ເສີມສ້າງຄອບຄົວຄຣິສຕຽນໃຫ້ເຂັ້ມແຂງ ແລະສ້າງຕັ້ງໂບດເລື້ອຍໄປ.

## <u>ແຜນການສອນ</u>

1. <u>ແບ່ງນັກຮຽນເປັນສີ່ກຸ່ມດັ່ງນີ້:</u>

ກ. <u>ກຸ່ມທີ່ນຶ່ງ</u> ເປັນໂຢຮັນ ໃຫ້ອ່ານມາຣະໂກ 1:9-13. ແລະຂຽນຄຳຖາມໃຫ້ດັ່ງຕໍ່ໄປນີ້:

- ທ່ານມີທ່າທີແນວໃດໃນເມື່ອພຣະເຢຊູປາກົດຕໍ່ທ່ານໃນຂນະທີ່ກຳລັງໃຫ້ບັບຕິສະມາປະຊາຊົນຢູ່?
- ຫລັງຈາກໃຫ້ບັບຕິສະມາພຣະເຢຊູແລ້ວທ່ານຮູ້ສຶກແນວໃດ?
- ທ່ານຄິດວ່າເປັນຫຍັງພຣະເຢຊູຈິ່ງບັບຕິສະມາ?
- ຫລັງຈາກພຣະເຢຊູຮັບບັບຕິສະມາແລ້ວເປັນຫຍັງພຣະອົງຈິ່ງເຂົ້າໄປໃນປ່າ? ໃນປ່ານັ້ນມີຫຍັງເກີດຂຶ້ນ?

ຂ. <u>ກຸ່ມທີ່ສອງ</u> ເປັນປະຊາຊົນ ໃຫ້ອ່ານ ມາຣະໂກ1:14-15 ແລະຂຽນຄຳຖາມໃຫ້ດັ່ງນີ້:

- ທ່ານໄດ້ຍິນພຣະເຢຊູປະກາດເຣື່ອງອັນໃດ?
- ເມື່ອທ່ານໄດ້ຍິນຄຳປະກາດຂອງພຣະເຢຊູແລ້ວພວກເຂົາມີຄວາມຮູ້ສຶກແນວໃດ?

ຄ. <u>ກຸ່ມທີ່ສາມ</u> ເປັນບຸກຄົນບໍ່ເຊື່ອ ໃຫ້ອ່ານ ມາຣະໂກ 1:29-34 ແລະຂຽນຄຳຖາມໃຫ້ດັ່ງນີ້:

- ເມື່ອໄດ້ຍິນຄຳເທສນາຂອງພຣະເຢຊູແລ້ວທ່ານຮູ້ສຶກແນວໃດ?

- ທ່ານຄິດແນວໃດເມື່ອເຫັນພຣະເຢຊູປົວແມ່ເມັຽຂອງຊີໂມນ?
- ບັນດາຄົນປ່ວຍແລະຄົນທີ່ຜີສິງມາຫາພຣະເຢຊູທ່ານມີຄວາມຮູ້ສຶກຢ່າງໃດ?
- ກ່ອນຮຸ່ງເຊົ້າຍັງມືດຢູ່ພຣະເຢຊູອອກໄປແລ້ວເປັນຫຍັງເພິ່ນຈຶ່ງບໍ່ກັບຄືນມາປົວຄົນປ່ວຍທີ່ມາຕາມພາຍຫລັງ?

ງ. <u>ກຸ່ມທີສີ່</u> ເປັນຊີໂມນ ໃຫ້ອ່ານ ມາຣະໂກ 1:35-39 ແລະຂຽນຄຳຖາມໃຫ້ດັ່ງນີ້:

- ເປັນຫຍັງທ່ານຈຶ່ງອອກໄປເອີ້ນພຣະເຢຊູ ເມື່ອທ່ານຮູ້ວ່າພຣະອົງກຳລັງອ້ອນວອນຢູ່?
- ເມື່ອໄປເອີ້ນເພິ່ນແລ້ວ ເພິ່ນຕອບທ່ານແນວໃດ?
- ທ່ານຄິດແນວໃດກັບຄຳຕອບຂອງເພິ່ນ?

**2. <u>ໃຫ້ເວລານັກຮຽນປະມານ 5 ນາທີ</u>** ຈາກນັ້ນໃຫ້ແຕ່ລະກຸ່ມມາລາຍງານໂດຍໃຫ້ຄົນໃນກຸ່ມຜູ້ນຶ່ງເປັນຜູ້ອ່ານຄຳຖາມແລະໃຫ້ຫົວໜ້າກຸ່ມເປັນຄົນຕອບຕໍ່ໜ້ານັກຮຽນທັງຫມົດ.

3. <u>ວັກທີ 1 ພຣະເຢຊູຕຽມຕົວປະກາດ</u> (1:9-13)
ກ. ຖາມນັກຮຽນເປັນຫຍັງພຣະເຢຊູຈຶ່ງຮັບບັບຕິສະມາ? ແລະຂຽນຄຳຕອບນັກຮຽນລົງກະດານ.
ຂ. "ທ່ານເປັນບຸດທີ່ຮັກຂອງເຮົາເຮົາຊອບໃຈໃນທ່ານຫລາຍ" ທີ່ພຣະເຈົ້າກ່າວ ທ່ານເຂົ້າໃຈແນວໃດ?

4. <u>ວັກທີ 2 ການປະກາດຂອງພຣະເຢຊູ</u> (1:14-15)
ກ. ພຣະເຢຊູເລີ້ມຕົ້ນການປະກາດແນວໃດ?
ຂ. ຄຳວ່າຖິ້ມໃຈເກົ່າເອົາໃຈໃຫມ່ມີຄວາມຫມາຍວ່າຢ່າງໃດ?

5. <u>ວັກທີ 3 ຣິດອຳນາດພຣະເຢຊູ</u> (1:29-34)
ກ. ນອກຈາກປະກາດເຣື່ອງແຜ່ນດິນສວັນມາໃກ້ແລ້ວພຣະເຢຊູເຮັດຫຍັງແດ່?
ຂ. ໃນແລງວັນນັ້ນຄົນທັງຫລາຍມາອັ່ງອໍທີ່ປະຕູເຮືອນທີ່ພຣະເຢຊູພັກເຊົາເຮັດຫຍັງ?

6. <u>ວັກທີ 4 ຈຸດປະສົງຂອງການປະກາດ</u> (1:35-39)
ກ. ເມື່ອຕອນເຊົ້າມືດພຣະເຢຊູອອກໄປເຮັດຫຍັງ?
ຂ. ສາວົກອອກໄປນຳຫາພຣະອົງເຮັດຫຍັງ? ແລະພຣະອົງຊົງຕອບສາວົກແນວໃດ?
<u>ສລຸບ:</u> ການປະກາດເຣື່ອງແຜ່ນດິນສວັນຂອງພຣະເຈົ້າແມ່ນພຣະປະສົງອັນສຳຄັນອັນແຣກຂອງພຣະເຢຊູ. ດັ່ງນັ້ນພຣະອົງຈຶ່ງສັ່ງໃຫ້ເຮົາທັງຫລາຍປະກາດ.

# <u>ຄຳແນະນຳຄູສອນ</u>
# <u>ບົດຮຽນທີ 2</u>
# <u>ຜູ້ນຳສາສນາຊາດຢິວປອງຮ້າຍພຣະເຢຊູ</u>

---

<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u> ມາຣະໂກ 2:1-17; 3:1-6
<u>ຂໍ້ພຣະຄັມທັງໝົດສຳລັບບົດຮຽນນີ້:</u> ມາຣະໂກ 2:1--3:6
<u>ຈຸດສຳຄັນຂອງບົດຮຽນນີ້:</u> ພຣະເຢຊູຊົງເຕືອນຜູ້ນຳສາສນາຊາດຢິວຢ່າຄິດຊົ່ວໃນໃຈ.
<u>ຄຳຖາມເພື່ອການສຳຣວດ</u> ພຣະເຢຊູຊົງແກ້ໄຂບັນຫາແນວໃດ?
<u>ຈຸດປະສົງຂອງບົດຮຽນນີ້:</u> ບອກໃຫ້ຮູ້ວ່າພຣະເຢຊູມີບັນຫາກ່ອນພວກເຮົາແລ້ວຢ່າສູ້ຢ້ານ.

<u>ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນ</u>

- ນຳຂ່າວປະເສີດເຣື່ອງພຣະເຢຊູຄຣິດໄປເຖິງທຸກຄົນ.
- ຊ່ອຍເຫລືອເບິ່ງແຍງທຸກຄົນໃນພຣະນາມແຫ່ງພຣະເຢຊູຄຣິດທີ່ຕົກຢູ່ໃນຄວາມຂັດສົນ.
- ຈັດຕຽມໄພ່ພົນຂອງພຣະເຈົ້າໃຫ້ຕຽມພ້ອມໃນການປະກາດໃນໂບດແລະອອກໄປປະກາດທົ່ວໂລກ.

1. ຖາມນັກຮຽນ ແມ່ນຫຍັງເປັນຕົ້ນເຫດຂອງການທະເລາະວິວາດກັນ. ໃນບ້ານເຮືອນຕລອດເຖິງໃນໂບດ?

2. ແບ່ງນັກຮຽນອອກເປັນກຸ່ມລະສອງຫລືສາມຄົນ. ໃຫ້ກຸ່ມສົນທະນາກັນກັບຄຳທີ່ຂຽນໃນກະດານດັ່ງນີ້:
   - ໂບດຂອງເຮົາແຕ່ກ່ອນນີ້ເຄີຍເຮັດຫຍັງແດ່?
   - ນັບແຕ່ມີອາຈານໃໝ່ມານີ້ໂບດເຮົາປ່ຽນເປັນຮູບໄປແນວໃດ?
   - ການປ່ຽນນີ້ດີຫລືບໍ່ດີ?

3. ຫລັງຈາກໃຫ້ເວລານັກຮຽນ 5 ນາທີເພື່ອສົນທະນາກັນແລ້ວ ໃຫ້ມາລາຍງານຈັກສອງຫລືສາມຄົນ.

4. ບອກນັກຮຽນຮູ້ວ່າເມື່ອບໍ່ມີພຣະເຢຊູມາກໍບໍ່ມີຫຍັງປ່ຽນແປງ ແຕ່ເມື່ອພຣະອົງມາຫລາຍຢ່າງກໍປ່ຽນ ເປັນຕົ້ນເຫດໃຫ້ມີການຂັດແຍ່ງກັນກັບຫົວໜ້າສາສນາທ້ອງຖິ່ນ ຄືພວກຟາຣີຊາຍບໍ່ມັກການກະທຳຂອງພຣະເຢຊູ.

5. ແບ່ງນັກຮຽນເປັນສາມກຸ່ມ ແລະໃຫ້ຫົວຂໍ້ດັ່ງນີ້:
   - <u>ກຸ່ມທີ 1</u> ຊົງໂຜດຄົນເປ້ຽໃຫ້ຄືນດີ (2:1-12)
     1. ສົມມຸດວ່າເຮົາຢູ່ໃນຖ້າມກາງຄົນຫລວງຫລາຍແນວນີ້ເຮົາຄິດວ່າເຮົາເປັນໃຜ?
     2. ເຣື່ອງຄົນເປ້ຽຄົນນີ້ສອນຫຍັງທ່ານແດ່?

- <u>ກຸ່ມທີ 2</u> ຊີງເອີ້ນເລວີ (2:13-17)
  1. ຂະນະທີ່ພຣະເຢຊູເອີ້ນຄົນເລວີໃຫ້ຕິດຕາມພຣະອົງນັ້ນຄົນເລວີກຳລັງເຮັດຫຍັງຢູ່?
  2. ທ່ານເດກຳລັງເຮັດຫຍັງເວລາພຣະເຢຊູຮ້ອງທ່ານ?
  3. ເມື່ອພຣະເຢຊູຮ້ອງຄົນເວລີແລ້ວລາວເຮັດແນວໃດກັບເພື່ອນຝູງຂອງລາວ?
  4. ທ່ານໄດ້ເຮັດຄືຄົນເລວີບໍ່?

- <u>ກຸ່ມທີ 3</u> ຊີງໂຜດຊາຍມືລີບ (3:1-6)
  1. ໃນວັນຊະບາໂຕພຣະເຢຊູໄດ້ເຮັດພິດກົດ ດ້ວຍການປົວຄົນມືລີບ ສຳລັບທ່ານຈະເຮັດພິດກົດແນວໃດ?
  2. ໃນວັນສະບາໂຕກົດແມ່ນສັ່ງໃຫ້ທຸກຄົນເຂົ້ານະມັສການ ທ່ານຄິດວ່າການອອກໄປປະກາດພິດບໍ່?
  3. ຕາມຄວາມເຫັນຂອງທ່ານອັນໃດສົມຄວນເຮັດແລະບໍ່ສົມຄວນເຮັດໃນວັນຊະບາໂຕ?

6. ໃຫ້ເວລາແຕ່ລະກຸ່ມ 10 ນາທີເພື່ອຄົ້ນຄວ້າ ແລະໃຫ້ມາລາຍງານ ກຸ່ມລະ 5 ນາທີ.

7. ຄຣູນຳພານັກຮຽນສລຸບພົນຕາມບົດຮຽນບົດທີ 2.

8. ຖາມນັກຮຽນ ດັ່ງນີ້.
   ກ. ດ້ວຍເຫດໃດຄົນເປັ້ຽຈຶ່ງໄປຫາພຣະເຢຊູ? ເມື່ອເຂົ້າໄປບໍ່ໄດ້ເຂົາເຮັດແນວໃດຈຶ່ງເຂົ້າໄປໄດ້?
   ຂ. ວາດພາບຄົນເປັ້ຽຍ່າງໄດ້ຄັ້ງແຮກໃນຊີວິດຈະເປັນແນວໃດ?
   ຄ. ຄົນສະບາຍບໍ່ຕ້ອງການໝໍຢາ ແຕ່ຄົນເຈັບຕ້ອງການໝໍ ເຮົາບໍ່ໄດ້ມາເພື່ອຈະເອີ້ນເອົາຄົນສິນທັມ ແຕ່ມາເອີ້ນເອົາຄົນນອກສິນທັມ ທີ່ພຣະເຢຊູກ່າວໝາຍຄວາມວ່າແນວໃດ?
   ງ. ມີສອງພວກຕິດຕາມພຣະເຢຊູນັ້ນ ມີພວກໃດແດ່? ແຕ່ລະພວກທີ່ຕິດຕາມແຕກຕ່າງກັນຢ່າງໃດ?
   ຈ. ເປັນຫຍັງພຣະເຢຊູຈຶ່ງບໍ່ລໍຖ້າຈົນພົ້ນວັນຊະບາໂຕແລ້ວຈຶ່ງເຮັດການອັສຈັນເຫລົ່ານີ້?
   ສ. ເປັນຫຍັງພວກຟາຣີຊາຍຈຶ່ງບໍ່ພໍໃຈແລະປອງຂ້າພຣະອົງເສັຽ?
   ຊ. ມີສອງພວກທີ່ຕິດຕາມພຣະເຢຊູນັ້ນ ທ່ານເດແມ່ນພວກໃດ?
   ຍ. ເຮົາທັງຫລາຍຈະນຳເຣື່ອງນີ້ໄປບອກກັບຍາດພີ່ນ້ອງເຮົານີ້ໃດ?

9. ຄຣູຖາມນັກຮຽນເຣື່ອງການປະກາດຂອງທ່ານມີຄົນເຂົ້າໃຈພິດບໍ່? ຄຣູນຳພາການອ້ອນວອນປິດ. ໃນນັ້ນໃຫ້ອ້ອນວອນເພື່ອຜູ້ປະກາດທຸກຄົນແລະເພື່ອຜູ້ຂັດແຍ່ງໃຫ້ເຂົ້າໃຈກັນ, ຢ່າຂັດແຍ່ງເຫມືອນຜູ້ນຳສາສນາຢິວຂັດແຍ່ງພຣະເຢຊູ.

# <u>ຄຳແນະນຳຄຣູສອນ</u>
# <u>ບົດຮຽນທີ 3</u>
# <u>ກຸ່ມຕິດຕາມພຣະເຢຊູ</u>

---

<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u> ມາຣະໂກ 3: 7-35
<u>ຂໍ້ພຣະຄັມທັງໝົດສຳລັບບົດຮຽນນີ້:</u> ມາຣະໂກ 3: 7-35
<u>ຈຸດສຳຄັນຂອງບົດຮຽນນີ້:</u> ພຣະເຢຊູຊົງແຕ່ງຕັ້ງທ່ານໃຫ້ເຮັດພາຣະກິດຂອງພຣະບິດາ
<u>ຄຳຖາມເພື່ອການສຳຣວດ</u> ເຮົາຈະຕອບສນອງໃນການແຕ່ງຕັ້ງພຣະອົງແນວໃດ?
<u>ຈຸດປະສົງຂອງບົດຮຽນນີ້:</u> ເພື່ອບອກໃຫ້ຮູ້ວ່າທຸກຄົນທີ່ເຮັດພາຣະກິດຂອງພຣະເຈົ້າແມ່ນຄອບຄົວພຣະເຢຊູ.

<u>ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນ</u>

- ນຳຂ່າວປະເສີດເຣື່ອງພຣະເຢຊູຄຣິດໄປເຖິງທຸກຄົນ.
- ຊ່ອຍເຫລືອເບິ່ງແຍງທຸກຄົນໃນພຣະນາມແຫ່ງພຣະເຢຊູຄຣິດທີ່ຕົກຢູ່ໃນຄວາມຂັດສົນ.
- ຈັດຕຽມໄພ່ພົນຂອງພຣະເຈົ້າໃຫ້ຕຽມພ້ອມໃນການປະກາດໃນໂບດແລະອອກໄປປະກາດທົ່ວໂລກ.
- ປັບປຸງຄອບຄົວຄຣິສຕຽນໃຫ້ເຂັ້ມແຂງ.

## <u>ແຜນສຳລັບການສອນ</u>

1. ໃຫ້ຜູ້ນຶ່ງອ່ານ (**ມາຣະໂກ 3:7-12** **<u>ຜູ້ຕິດຕາມພຣະເຢຊູ</u>**) ແລະໃຫ້ທຸກຄົນໃນຫ້ອງສົມມຸດວ່າເປັນປະຊາຊົນແຄມທະເລສາບ.

    ກ. ເມື່ອອ່ານຈົບຄຣູຈະຖາມຄຳຖາມດັ່ງນີ້:

    - ເປັນຫຍັງທ່ານຈຶ່ງຕິດຕາມພຣະເຢຊູ?
    - ທ່ານຮູ້ສຶກແນວໃດເມື່ອພຣະເຢຊູຊົງຫ້າມບໍ່ໃຫ້ຜີປະກາດພຣະນາມຂອງພຣະອົງ?.

    ຂ. ຈາກນັ້ນຄຣູເລີ້ມຕົ້ນສອນຫົວຂໍ້ທີ 1 (ຜູ້ຕິດຕາມພຣະເຢຊູ 3:7-12)

    - ອະທິບາຍກຸ່ມຕິດຕາມພຣະເຢຊູສີ່ກຸ່ມ.
    - ຖາມນັກຮຽນທ່ານຄິດວ່າທ່ານເປັນກຸ່ມໃດ? ເປັນຫຍັງຈຶ່ງໝັ້ນໃຈວ່າເປັນກຸ່ມທີ 1?.

2. ໃຫ້ຜູ້ນຶ່ງອ່ານ (**ມາຣະໂກ 3:13-19** **<u>ຊົງແຕ່ງຕັ້ງສາວົກ</u>**). ເປັນຫົວຂໍ້ທີສອງ.

    ກ. ເມື່ອອ່ານຈົບຄຣູຖາມຄຳຖາມດັ່ງນີ້:

    - ເປັນຫຍັງພຣະເຢຊູຈຶ່ງແຕ່ງຕັ້ງສາວົກສິບສອງຄົນເທົ່ານັ້ນ?

- ພຣະເຢຊູຊົງແຕ່ງຕັ້ງສາວົກທັງສິບສອງຄົນໄວ້ເຮັດຫຍັງແດ່?
- ພວກສິບສອງຄົນມີທ່າທີແນວໃດຕໍ່ການແຕ່ງຕັ້ງຂອງພຣະອົງ?
- ເປັນຫຍັງພຣະເຢຊູເລືອກເອົາທ່ານມາເປັນສາວົກແລະບໍ່ເລືອກເອົາໝູ່ເພື່ອນຂອງທ່ານຜູ້ມີຄວາມຮູ້ແລະສລາດກວ່າທ່ານ?
- ທ່ານຮູ້ສຶກວ່າພຣະເຈົ້າໄດ້ເລືອກເອົາທ່ານມາເປັນຜູ້ເຊື່ອແລະຮັບໃຊ້ພຣະອົງບໍ່?
- ທ່ານໄດ້ຮຽນຫຍັງແດ່ໃນການຮຽກເອີ້ນຂອງພຣະເຢຊູ?

3. ໃຫ້ຜູ້ນຶ່ງອ່ານ (**ມາຣະໂກ 3:31-35  <u>ແມ່ແລະນ້ອງຂອງພຣະເຢຊູ</u>**). (ເປັນຂໍ້ວຂໍ້ທີສາມ).

ກ. ເມື່ອອ່ານຈົບຄຣູຂໍໃຫ້ນັກຮຽນອອກຄຳເຫັນເຣື່ອງມາຣີອາມາຫາພຣະເຢຊູ.

ຂ. ຖາມນັກຮຽນ.

- ເປັນຫຍັງມາຣີອາແລະພວກນ້ອງຂອງພຣະເຢຊູຈຶ່ງມາຫາພຣະອົງອີງຕາມຍາດມິດຂອງພຣະອົງໃນ (ມາຣະໂກ 3:21).
- ເມື່ອເຂົ້າໄປຫາພຣະອົງບໍ່ໄດ້ເພາະຄົນໜາແໜ້ນມາຣີອາເຮັດແນວໃດ?
- ມາຣີອາເຂົ້າໄປຫາພຣະອົງບໍ່ໄດ້ ຈຶ່ງສັ່ງຄົນໄປຫາພຣະອົງສອນຫຍັງທ່ານແດ່?
- ພຣະເຢຊູຕອບວ່າ "ຜູ້ໃດຕາມນ້ຳພຣະທັຍພຣະເຈົ້າ ຜູ້ນັ້ນແຫລະເປັນນ້ອງຊາຍ, ນ້ອງສາວແລະເປັນມານດາຂອງເຮົາ" ໝາຍຄວາມວ່າແນວໃດ?
- ຄຳເວົ້າຂອງພຣະເຢຊູສອນຫຍັງເຮົາແດ່?

<u>ໝາຍເຫດ:</u> ຢ່າເຂົ້າໃຈຜິດວ່າພຣະເຢຊູປະຕິເສດແມ່ແລະນ້ອງສາວຂອງພຣະອົງ. ພຣະອົງໃຫ້ກຽດມາຣີອາສເມີ. ແລະພຣະອົງກໍຍົກພຣະກຽດພຣະເຈົ້າໃນຂນະທີ່ປະກາດເຣື່ອຣາຊອານາຈັກສວັນຂອງພຣະເຈົ້າ.

4. ສລຸບບົດຮຽນ: ມີຄົນສີ່ປະເພດຕິດຕາມພຣະເຢຊູ.

1. ຫາກທ່ານເປັນຜູ້ຕິດຕາມແລ້ວ ທ່ານເປັນຜູ້ຕິດຕາມປະເພດໃດໃນຈຳນວນສີ່ພວກທີ່ຕິດຕາມ?
2. ທ່ານເປັນຜູ້ຕິດຕາມພຣະເຢຊູແລ້ວບໍ່?ຫາກຍັງບໍ່ທັນຕິດຕາມພຣະອົງຊົງເລືອກທ່ານໃຫ້ຕິດຕາມແຕ່ດຽວນີ້.
3. ບອກນັກຮຽນວ່າພຣະອົງຊົງຮັກທ່ານຫລາຍ ຂ້າພະເຈົ້າເຊື່ອວ່າພຣະອົງຊົງເລືອກທ່ານໃຫ້ຕິດຕາມພຣະອົງປະເພດທີ 1 ຄືເປັນສາວົກຂອງພຣະອົງ ມີໃຜຢາກຕິດຕາມພຣະອົງບໍ່ ຂໍໃຫ້ຍົກມືຂຶ້ນ.
4. ຄຣູນຳພາການອ້ອນວອນຖວາຍຕົວ ແລະອ້ອນວອນປິດດ້ວຍການຂອບພຣະຄຸນ.

# <u>ຄຳແນະນຳຄູສອນ</u>
# <u>ບົດຮຽນທີ 4</u>
# <u>ຊົງສອນເປັນຄຳອຸປມາ</u>

---

<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u> ມາຣະໂກ 4:1-20
<u>ຂໍ້ພຣະຄັມທັງໝົດສຳລັບບົດຮຽນນີ້:</u> ມາຣະໂກ 4:1-34
<u>ຈຸດສຳຄັນຂອງບົດຮຽນນີ້:</u> ພຣະເຢຊູຊົງສອນເປັນຄຳອຸປະມາເຣື່ອງຊີວິດນິຣັນ.
<u>ຄຳຖາມເພື່ອການສຳຣວດ</u> ເຮົາຮູ້ໄດ້ແນວໃດວ່າພຣະເຢຊູມາຈາກພຣະເຈົ້າ.
<u>ຈຸດປະສົງຂອງບົດຮຽນນີ້:</u> ບອກໃຫ້ຮູ້ວ່າພຣະເຈົ້າມີພຣະປະສົງໃຫ້ທຸກຄົນມີຊີວິດໃນແຜ່ນດິນຂອງພຣະອົງ.

<u>ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນ</u>

- ນຳຂ່າວປະເສີດເຣື່ອງພຣະເຢຊູຄຣິດໄປເຖິງທຸກຄົນ.
- ຈັດຕຽມໄພ່ພົນຂອງພຣະເຈົ້າໃຫ້ຕຽມພ້ອມໃນການປະກາດໃນໂບດແລະອອກໄປປະກາດທົ່ວໂລກ.
- ປັບປຸງຄອບຄົວຄຣິສຕຽນໃຫ້ເຂັ້ມແຂງ.

## <u>ແຜນສຳລັບການສອນ</u>

1. ເມື່ອນັກຮຽນມາເຖິງແລ້ວຄູນຳພາການອ້ອນວອນ ແລະໃຫ້ຜູ້ນຶ່ງອ່ານ ມາຣະໂກ 4:1-9. **<u>ພຣະເຢຊູເລົ່າເຣື່ອງ ເປັນຫົວຂໍ້ທີ 1</u>**
2. ຕຽມຈອກພູາສຕິກແນວສ່ອງເຫັນຂ້າງໃນສີ່ຈອກດັ່ງນີ້:
    - ຈອກທີນຶ່ງເອົາເສດຖມົນອາດຈະເປັນຢາງດຳປົນກັບຫີນ ຫລືທາງຊີເມັນກໍໄດ້ໃສ່ຈອກນັ້ນ.
    - ຈອກທີສອງເອົາດິນແລະຫີນປົນກັນໃສ່ຈອກນັ້ນ.
    - ຈອກທີສາມເອົາດິນທີ່ມີຫຍ້າປົກຄຸມຫລືຊອກເອົາສິ່ງທີ່ມີໜາມປົກໜ້າດິນໃສ່ຈອກນັ້ນ. .
    - ຈອກທີສີ່ເອົາດິນດີລະອຽດໃສ່ຈອກນັ້ນ. .

2. ບອກນັກຮຽນວ່າ ພຣະເຢຊູໃຫ້ຄຳປຽບທຽບດິນທີ່ຢູ່ໃນຈອກທັງສີ່ນີ້ແມ່ນຈິດໃຈຂອງມະນຸດ.
    - ເອົາໃນຖົ່ວແຫ້ງມາວາງໃສ່ແຕ່ລະຈອກ (ໃນຖົ່ວໝາຍເຖິງພຣະທັມຂອງພຣະເຈົ້າທີ່ເຮົາໄດ້ຍິນທຸກວັນອາທິດ).
    - ຖາມນັກຮຽນວ່າ ທ່ານຄິດວ່າໃນຖົ່ວຈອກໃດຈະໃຫຍ່ແລະບໍ່ໃຫຍ່? ເປັນຫຍັງ?
3. ບອກນັກຮຽນວ່າພຣະເຢຊູໃຊ້ວິທີທາງຕ່າງໆເພື່ອໃຫ້ຜູ້ຟັງເຂົ້າໃຈ, ໃຫ້ນັກຮຽນແຕ່ລະຄົນອ່ານ ມາຣະໂກ 4:1-9 ໃນໃຈຈັກ 5 ນາທີ ຢ່າງງຽບໆ.

- ຖາມນັກຮຽນ ໃນຈຳນວນດິນໃນຈອກທັງສີ່ຈອກນີ້ທ່ານຄິດວ່າທ່ານແມ່ນຈອກໃດ?
- ທ່ານແນ່ໃຈໄດ້ແນວໃດວ່າທ່ານເປັນດິນດີນັ້ນ?

4. ຂໍໃຫ້ຜູ້ນຶ່ງອ່ານ ມາຣະໂກ 4: 10-12 **<u>ຈຸດປະສົງຄຳອຸປະມາ ເປັນຫົວຂໍ້ທີ 2</u>**

- ເປັນຫຍັງພວກສາວົກຈຶ່ງບໍ່ເຂົ້າໃຈຄຳອຸປະມາຂອງພຣະເຢຊູ?
- ພຣະເຢຊູບໍ່ໄດ້ເລົ່າຄຳອຸປະມາເພື່ອປິດບັງຜູ້ໃດ, ແຕ່ເລົ່າເພື່ອອະທິບາຍໃຫ້ເຫັນຮູບພາບຈິດໃຈຂອງຜູ້ຟັງ.
- ບອກນັກຮຽນ ຂໍ້ຄວາມເລິກລັບເຣື່ອງຣາຊອານາຈັກຂອງພຣະເຈົ້າ ໄດ້ຊົງໂຜດໃຫ້ທ່ານຮູ້ແລ້ວ ແຕ່ຄຳອຸປະມາຂອງພຣະອົງກ່າວໄວ້ສຳລັບຄົນຝ່າຍນອກ (ຜູ້ທີ່ບໍ່ເຊື່ອ) ທີ່ສາວົກບໍ່ເຂົ້າໃຈແມ່ນບໍ່ເຂົ້າໃຈໃນຄຳອຸປະມາເທົ່ານັ້ນ ແຕ່ສ່ວນເຣື່ອງແຜ່ນດິນສວັນນັ້ນສາວົກເຂົ້າໃຈແລ້ວ.
- ສິ່ງທີ່ເຮົາຄວນຮຽນຮູ້ນັ້ນຄື ຈົ່ງຖາມຄືສາວົກຖາມ ຫາກເຮົາບໍ່ເຂົ້າໃຈໃນເຣື່ອງພຣະຄັມພີ ຢ່າຄິດເອົາເອງ ຫລື ເມີນເສີຍຕໍ່ສິ່ງທີ່ບໍ່ເຂົ້າໃຈ.

5. ໃຫ້ຜູ້ນຶ່ງອ່ານ (4:13-20) **<u>ຊົງອະທິບາຍໃຫ້ສາວົກຟັງ.</u>**

ພຣະເຢຊູຊົງກ່າວເປັນຄຳອຸປະມາເຖິງພຣະອົງເອງເປັນຄົນຫວ່ານພືດ (ຄົນເຮັດໄຮ່ເຮັດນາ) ຄືພຣະອົງເທສນາຄ້າຍຄືກັບພໍ່ໄຮ່ພໍ່ນາຫວ່ານເຂົ້າໃນທົ່ງໄຮ່ນາຂອງຕົນ ແຕ່ລະເມັດພືດຕົກລົງດິນໃນບ່ອນແຕກຕ່າງກັນ. ໃນຄຳອຸປະມາແປວ່າດັ່ງນີ້: ເບິ່ງບົດຮຽນໃນຫົວຂໍ້ສຸດທ້າຍ ມີຫົວຂໍ້ວ່າ "**<u>ຊົງອະທິບາຍໃຫ້ສາວົກຟັງ.</u>**"

**<u>ຄຳຖາມ</u>**

1. ພຣະເຢຊູເລົ່າຄຳອຸປະມາເຣື່ອງດິນພຣະອົງຫມາຍເຖິງຫຍັງ?

2. ເປັນຫຍັງພຣະອົງຈຶ່ງເລົ່າຄຳອຸປະມາເຣື່ອງຜູ້ຫວ່ານ?

3. ການເປັນຄຣິສຕຽນເຮົາມີບັນຫາທີ່ຈະເຈົ້າໃຈຄຳອຸປະມາຂອງພຣະເຢຊູບໍ່?

4. ຫາກເຮົາມີບັນຫາບໍ່ເຂົ້າໃຈເຮົາຄວນເຮັດແນວໃດ?

5. ຂໍ້ຄວາມເລິກລັບເຣື່ອງຣາຊອານາຈັກຂອງພຣະເຈົ້າ ໄດ້ຊົງໂຜດໃຫ້ທ່ານຮູ້ແລ້ວ ຫມາຍຄວາມວ່າແນວໃດ?

6. ຄຣູນຳພາການອ້ອນວອນຂອບພຣະຄຸນ ແລະທ້າທາຍນັກຮຽນໄປສຳຣວດຕົນເອງວ່າເປັນດິນຊະນິດໃດ?

# ບົດແນະນຳການສິດສອນ
# ບົດຮຽນທີ 5
# ພະລັງອຳນາດຂອງພຣະເຢຊູ

---

**ຂໍ້ພຣະຄຳພີສຳລັບບົດຮຽນ:** ມາຣະໂກ 4:35-41; 5:21-43

**ຂໍ້ພຣະຄຳພີສຳລັບເບື້ອງຫລັງ:** ມາຣະໂກ 4:35-5:43

**ຈຸດສຳຄັນຂອງບົດຮຽນນີ້:** ພຣະເຢຊູມີພະລັງອຳນາດເໜືອກວ່າພາຍຸ, ພຍາດໂຣຄາ ແລະຄວາມຕາຍຈຶ່ງຢັ້ງຢືນໃຫ້ພວກເຮົາຮູ້ວ່າພຣະອົງສາມາດຊ່ອຍພວກເຮົາໄດ້ໃນຄາວລຳບາກ.

**ຄຳຖາມເພື່ອການສຳຫລວດ:** ພຣະເຢຊູສາມາດຊ່ອຍພວກເຮົາຫຍັງໄດ້ແດ່ໃນຄາວລຳບາກ?

**ຈຸດປະສົງຂອງບົດຮຽນນີ້:** ຈະຊ່ອຍໃຫ້ຂ້າພະເຈົ້າມີປະສົບການກັບຄວາມຮັກແລະເຫັນວ່າພຣະເຢຊູເປັນຫ່ວງຂ້າພະເຈົ້າໃນຄາວລຳບາກ.

## ແຜນການສິດສອນ

## ຊີວິດສະພາບຕົວຈິງ

1. ໃຫ້ນັກຮຽນໃນຫ້ອງອອກຄວາມຄິດເຫັນເປັນຄຳເວົ້າສັ້ນໆ ມີຫຍັງແດ່ທີ່ມີການພົວພັນກັບຄຳວ່າ "ພະລັງອຳນາດ". ຢ່າໄດ້ຕຳໜິຫລືວ່າເຫັນພ້ອມກັບຄວາມຄິດຂອງພວກເຂົາ ແຕ່ຈົ່ງຂຽນຄຳເວົ້າຂອງແຕ່ລະຄົນໃສ່ກະດານ. ເຊັ່ນຕົວຢ່າງ: ສາຍໄຟພະລັງສູງກໍມີພະລັງສູງ , ກະແຈລົມຫລາຍໆຊະນິດກໍມີພະລັງ, ເຄື່ອງດື່ມກໍໃສ່ຊື່ວ່າ "ພາວເວີເຣດ" (Powerade) ທີ່ເສີມສ້າງພະລັງ.

2. ໃຫ້ຕັ້ງຄຳຖາມດັ່ງຕໍ່ໄປນີ້:
   - ຄຳວ່າ ພະລັງອຳນາດທີ່ຂຽນຢູ່ເທິງກະດານນີ້ມີຄວາມໝາຍຢ່າງໃດ? (ໝາຍເຖິງ ພະລັງງານ ເຊັ່ນພະລັງໄຟຟ້າ, ພະລັງຈາກພາຍຸ, ພະລັງການຄວບຄຸມ, ພະລັງອຳນາດ.)
   - ມີພະລັງອຳນາດດີບໍ່ຫລືວ່າບໍ່ດີ? (ຂຶ້ນຢູ່ກັບວ່າຜູ້ໃຊ້ໃນທາງທີ່ຖືກຫລືຜິດ)
   - ທ່ານເຄີຍຂາດພະລັງບໍ່ໃນຊີວິດຂອງທ່ານ? (ໃຫ້ໂອກາດແກ່ນັກຮຽນຕອບ.)ພວກເຂົາມີຄວາມຮູ້ສຶກຢ່າງໃດໃນບົດຮຽນມື້ນີ້?

3. ໃຫ້ນັກຮຽນອ່ານເບິ່ງຫົວຂໍ້ບົດຮຽນແຕ່ລະບົດໃນໜ່ວຍ ໜຶ່ງ ນີ້. ຫົວຂໍ້ບົດນີ້ແມ່ນ "ພະລັງອຳນາດຂອງພຣະເຢຊູ" ເພື່ອຈະຊ່ອຍໃຫ້ນັກຮຽນຮູ້ຫລ່ວງໜ້າວ່າ ພຣະເຢຊູຈະທຳກິຈການອັນໃດແດ່ໃນບົດຮຽນຕໍ່ໆໄປ.

## ສຶກສາບົດຮຽນ

4. ຈົ່ງແຍກຫ້ອງຮຽນອອກໃຫ້ເປັນສາມກຸ່ມ ແລະແຕ່ລະກຸ່ມໃຫ້ເວລາພວກເຂົາສຶກສາຫົວຂໍ້ທີ່ມອບໃຫ້ ເພື່ອພວກເຂົາຈະໄດ້ມາແບ່ງປັນໃຫ້ໝູ່ຟັງ.

<u>ກຸ່ມທີນຶ່ງ: ພະລັງອຳນາດເໜືອພັຍທັມມະຊາດ (ມາຣະໂກ 4:35-41)</u>

ໃຫ້ແຕ່ລະກຸ່ມອ່ານພຣະຄັມພີຕາມທີ່ມອບໝາຍໃຫ້ແລະໃຫ້ຊອກຫາຄຳຕອບໃນຄຳຖາມດັ່ງຕໍ່ໄປນີ້:

(ກ) ແມ່ນຜູ້ໃດເປັນບຸກຄົນໃນເຣື່ອງນີ້ ແລະເຫດການເກີດຂຶ້ນຢູ່ບ່ອນໃດ?

(ຂ) ມີເຫດການອັນໃດເກີດຂຶ້ນ ແລະພຣະເຢຊູໄດ້ກະທຳຢ່າງໃດໃນເຫດການນັ້ນ?
(ຄ) ພຣະເຢຊູໄດ້ແກ້ໄຂບັນຫາໃນເຫດການນັ້ນຢ່າງໃດ ແລະມີຜົນອັນໃດແດ່ຕາມມາຫລັງຈາກນັ້ນ?

<u>ກຸ່ມທີສອງ: ພະລັງອຳນາດເໜືອພຍາດໂຣຄາ (ມາຣະໂກ 5:21, 25-34)</u>
ໃຫ້ກຸ່ມນີ້ປະຕິບັດເໝືອນກັບກຸ່ມທີນຶ່ງ

<u>ກຸ່ມທີສາມ: ພະລັງອຳນາດເໜືອຄວາມຕາຍ (ມາຣະໂກ 5:21-24, 35-43)</u>
ໃຫ້ກຸ່ມນີ້ປະຕິບັດເໝືອນກັບກຸ່ມທີນຶ່ງ

5. ໃຫ້ຜູ້ນຶ່ງຈາກແຕ່ລະກຸ່ມອອກມາແບ່ງປັນໃຫ້ໝູ່ຟັງ.

**<u>ໜູນໃຊ້ໃນການກະທຳ</u>**

6. ໃຫ້ຕັ້ງຄຳຖາມວ່າ "ເປັນຄວາມຈິງໄດ້ຢ່າງໃດ ພຣະຄຳຂອງພຣະເຈົ້າສາມາດຊ່ອຍເຮົາໄດ້ໃນຂນະທີ່ພວກເຮົາກຳລັງຖືກພາຍຸຊັດໄປຊັດມາໃນຊີວິດຂອງພວກເຮົາ? ເຫດໃດພຣະເຢຊູຈຶ່ງນອນຫລັບຢູ່ໃນຂນະທີ່ພາຍຸກຳລັງລົບກວນພຣະອົງບໍ່ເປັນຫ່ວງພວກເຮົາບໍ? ພວກເຮົາຈຳເປັນຕ້ອງອາສັຍພະລັງອຳນາດຂອງການອະທິຖານຊຶ່ງເປັນພຣະສັນຍາ ໃນຍາມພາຍຸເກີດຂຶ້ນໃນຊີວິດຂອງພວກເຮົາ.

7. ໃຫ້ຕັ້ງຄຳຖາມຂຶ້ນມາ ໃຊ້ພຣະຄັມພີແລະປະສົບການຊ່ອຍໃນການຕອບຄຳຖາມດັ່ງຕໍ່ໄປນີ້:

- ພຣະເຢຊູເປັນຫຍັງຈຶ່ງເປັນຫ່ວງຍິງຄົນນັ້ນທັ້ງໆທີ່ພຣະອົງຮູ້ວ່າຄວາມໄວ້ວາງໃຈເຊື່ອທີ່ລາວມີຈະຮັກສາລາວໃຫ້ດີຈາກພຍາດໄດ້? (ຄວາມໄວ້ວາງໃຈເຊື່ອຈະນຳໄປສູ່ການປະຕິບັດ. ຖ້າບໍ່ມີການປະຕິບັດ ກໍເໝືອນວ່າບໍ່ມີຄວາມໄວ້ວາງໃຈເຊື່ອນັ້ນເອງ.)
- ທ່ານມີຄວາມເຫັນຢ່າງໃດໃນຕົວພຣະເຢຊູ ເມື່ອພຣະອົງມີພະລັງອຳນາດເໜືອກວ່າສັພທຸກສິ່ງທີ່ໄດ້ຊົງສ້າງຂຶ້ນມາ?
- ມີການອັສຈັນອັນໃດແດ່ທີ່ເກີດຂຶ້ນກັບຊີວິດຂອງທ່ານ?
- ທ່ານຄິດພໍ້ບໍ່ມີຕົວຢ່າງອັນໃດແດ່ທີ່ພຣະເຢຊູໄດ້ຊ່ອຍໃຫ້ຄົນຕາຍເປັນຄືນມາ? (ລູກຊາຍຂອງແມ່ໝ້າຍ, ລູກາ 7:11-16; ເຣື່ອງຂອງລາຊະໂຣເປັນຄືນມາຈາກຕາຍ, ໂຢຮັນ 11:1-45).
- ພຣະເຢຊູໄດ້ສະແດງໃຫ້ເຫັນພະລັງອຳນາດເໜືອຄວາມຕາຍໃນເຫດການຕອນນີ້. ພຣະອົງຍັງມີພະລັງອຳນາດເໜືອຄວາມໂສກເສົ້າສຳລັບຜູ້ທີ່ສູນເສັຽຜູ້ທີ່ເຂົາຮັກ.
  ທ່ານມີປະສົບການຢ່າງນີ້ໃນຊີວິດຂອງທ່ານບໍ່?
- ປະສົບການຂອງຢາຣີໂອຊ່ອຍພວກເຮົາໄດ້ຢ່າງໃດກ່ຽວກັບເຣື່ອງການຟື້ນຄືນມາຈາກຕາຍ?
  ໃຫ້ກ່າວເຖິງການຄືນພຣະຊົນຂອງພຣະເຢຊູ ເພື່ອໃຫ້ຄວາມໝັ້ນໃຈແກ່ການຄືນມາຈາກຕາຍຂອງຄຣິສຕຽນ (ອ່ານໂຢຮັນ 11:25-26; 1ໂກຣິນໂທ 15:3-20).

8. ໃຫ້ບອກແກ່ນັກຮຽນວ່າ ພຣະເຢຊູບໍ່ພຽງແຕ່ສະແດງໃຫ້ເຫັນພະລັງອຳນາດຂອງພຣະອົງເທົ່ານັ້ນ ແຕ່ພຣະອົງຊົງສະແດງຄວາມເມດຕາແກ່ມະນຸດອີກດ້ວຍ. ໜູນໃຈໃຫ້ນັກຮຽນຄິດເຖິງຜູ້ໃດຜູ້ນຶ່ງທີ່ພວກເຂົາໄດ້ຕິດຕໍ່ພົວພັນໃນອາທິດທີ່ຜ່ານມາວ່າຄົນຜູ້ນັ້ນຕ້ອງການຄວາມເມດຕາແລະການເຫັນໃຈບໍ່? ພວກເຮົາຈະຊ່ອຍເຂົາໄດ້ຢ່າງໃດ? ປິດຫ້ອງຮຽນດ້ວຍການອະທິຖານ. ໜູນໃຈໃຫ້ນັກຮຽນອະທິຖານເພື່ອຈະໄດ້ຮັບພະລັງອຳນາດທີ່ສາມາດນຳຄວາມຮັກຂອງພຣະເຢຊູອອກໄປເຖິງຜູ້ໃດຜູ້ນຶ່ງ.

# <u>ບົດແນະນຳການສິດສອນ</u>

# <u>ບົດຮຽນທີ 6</u>

# <u>ຄວາມສົງສານຂອງພຣະເຢຊູ</u>

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນ:</u>** ມາຣະໂກ 6:30-52
**<u>ຂໍ້ພຣະຄັມພີສຳລັບເບື້ອງຫລັງ:</u>** ມາຣະໂກ 6:1-52
**<u>ຈຸດສຳຄັນຂອງບົດຮຽນນີ້:</u>** ພຣະເຢຊູຊົງສະແດງຄວາມສົງສານຕໍ່ຜູ້ມີຄວາມຂັດສົນ.
**<u>ຄຳຖາມເພື່ອການສຳຫລວດ:</u>** ພວກເຮົາຈະປະຕິບັດຕໍ່ຜູ້ມີຄວາມຂັດສົນຢ່າງໃດ?
**<u>ຈຸດປະສົງຂອງບົດຮຽນນີ້:</u>** ຈະຊ່ອຍໃຫ້ຂ້າພະເຈົ້າປະຕິບັດຕໍ່ຜູ້ທີ່ມີຄວາມຂັດສົນຕາມແບບຢ່າງຂອງພຣະເຢຊູ.

## <u>ແຜນການສິດສອນ</u>

### <u>ຊີວິດສະພາບຕົວຈິງ</u>

1. ໃຫ້ຖາມນັກຮຽນໃນຫ້ອງວ່າມີຜູ້ໃດແດ່ໄດ້ນຳຄວາມຮັກຂອງພຣະເຢຊູອອກໄປໃຫ້ຜູ້ທີ່ຕ້ອງການ. ມີຜູ້ໃດແດ່ຕ້ອງການຈະແບ່ງປັນໃຫ້ຄົນໃນຫ້ອງຟັງ?
(ທ່ານອາດຈະໂທຣະສັບຖາມນັກຮຽນຫລາຍໆຄົນລ່ວງຫນ້າກ່ອນ. ຢ່າງຫນ້ອຍໃຫ້ໄດ້ຜູ້ນຶ່ງມາລາຍງານໃຫ້ຫມູ່ຟັງ). ຫລັງຈາກນັ້ນກໍໃຫ້ສຶກສາບົດຮຽນອາທິດນີ້. ພວກເຮົາຈະທຳຢ່າງໃດເພື່ອຈະສະແດງອອກວ່າພວກເຮົາມີຄວາມສົງສານຕໍ່ຄົນອື່ນ.

2. ໃຫ້ໂທຣະສັບຫານັກຮຽນຄົນນຶ່ງລ່ວງຫນ້າກ່ອນວັນອາທິດ ເລົ່າເຣື່ອງໃນບົດຮຽນໃຫ້ລາວຟັງ. ແລ້ວຖາມລາວວ່າຜູ້ທີ່ຫລົງເສັຽບໍ່ຮູ້ຈັກກັບພຣະເຈົ້ານັ້ນ ພວກເຂົາຊອກຫາແລະຕ້ອງການຄວາມສົງສານຈາກຄຣິສຕະຈັກຫລືບໍ່ໃນສມັຍນີ້? ພວກເຮົາຈະໄດ້ສຶກສາຮ່ວມກັນວ່າ "ພຣະເຢຊູຊົງສະແດງຄວາມສົງສານຕໍ່ມະນຸດຢ່າງໃດ?"

### <u>ສຶກສາບົດຮຽນ</u>

3. ກ່ອນທ່ານຈະອ່ານພຣະທັມ ມາຣະໂກ 1:1-6. ໃຫ້ນັກຮຽນໃນຫ້ອງຕັ້ງໃຈຟັງຂໍ້ຄວາມໃນພຣະທັມຕອນນີ້ເຊັ່ນ:

- ພຶດຕິການຂອງປະຊາຊົນຕໍ່ພຣະເຢຊູ (ງຶດປລາດໃຈ, ເບິ່ງຕ່ຳ, ການໂຕ້ຕອບ)
- ພຣະເຢຊູມີພຶດທິການຕໍ່ຄົນໃນບ້ານນັ້ນ (ພຣະອົງປລາດໃຈເພາະຄວາມບໍ່ເຊື່ອແລະບໍ່ຍອມຮັບຮູ້ຂອງພວກເຂົາ)

ໃຫ້ລູກຫ້ອງລາຍງານຕາມທີ່ພວກເຂົາໄດ້ຟັງມາ. ຫລັງຈາກນັ້ນຖາມເຂົາວ່າ, <u>ຄົນໃນບ້ານນັ້ນມີຄວາມເຫັນໃຈພຣະອົງບໍ່</u>? (ຄຳຕອບກໍຄືວ່າບໍ່ມີ ຊ້ຳຍັງປະຕິເສດແລະປະນາມພຣະອົງອີກ).

4. ເລົ່າເຫດການທີ່ພຣະອົງໄດ້ສົ່ງສາວົກຂອງພຣະອົງອອກໄປປະກາດຂ່າວປະເສີດ ແລະປິ່ນປົວຮັບໃຊ້ປະຊາຊົນ. ໃຫ້ນັກຮຽນຜູ້ນຶ່ງສລຸບເຣື່ອງຣາວ ໃນມາຣະໂກ 6:14-29. ກ່ອນຜູ້ນຶ່ງຈະໄດ້ອ່ານ ມາຣະໂກ 6:14-16, ໃຫ້ບອກນັກຮຽນໃນຫ້ອງຕັ້ງໃຈຟັງການເປັນມາຂອງກະສັດເຮໂຣດດັ່ງຕໍ່ໄປນີ້:

- ກະສັດເຮໂຣດເຂົ້າໃຈວ່າພຣະເຢຊູແມ່ນໃຜ (ແມ່ນໂຢຮັນບັບຕິສໂຕໄດ້ຄືນມາຈາກຕາຍ)
- ກະສັດເຮໂຣດ, ນາງເຮໂຣເດັຽ, ແລະລູກສາວຂອງນາງມີພຶດຕິການຢ່າງໃດຕໍ່ໂຢຮັນບັບຕິສໂຕ.

ຫລັງຈາກອ່ານພຣະທັມຕອນນີ້ແລ້ວ. ໃຫ້ນັກຮຽນໃນຫ້ອງສັງເກດ ແລະຖາມວ່າ, <u>ກະສັດເຮໂຣດມີຄວາມສົງສານຕໍ່ໂຢຮັນບັບຕິສໂຕບໍ່?</u>

6. ກ່ອນຈະອ່ານພຣະທັມ ມາຣະໂກ 6:45-52 ໃຫ້ທຸກຄົນຟັງ, ໃຫ້ນັກຮຽນຕັ້ງໃຈຟັງເອົາຂໍ້ຄວາມດັ່ງຕໍ່ໄປນີ້:

- ພວກສາວົກຂອງພຣະອົງມີອາການຢ່າງໃດເມື່ອພວກເຂົາເຫັນພຣະອົງຍ່າງເທິງນໍ້າ (ພວກເຂົາຕົກໃຈ)
- ເມື່ອພຣະອົງຂຶ້ນເທິງເຮືອແລ້ວ ພຣະອົງມີພຶດຕິການຢ່າງໃດຕໍ່ພວກເຂົາ(ພຣະອົງປອບໃຈພວກເຂົາບໍ່ໃຫ້ຢ້ານ)

ຖາມພວກນັກຮຽນວ່າ, <u>ເປັນຫຍັງພວກສາວົກຂອງພຣະອົງຈຶ່ງປລາດອັສຈັນໃຈຫລັງພຣະອົງຂຶ້ນເທິງເຮືອແລ້ວ?</u>

## <u>ຫນູນໃຊ້ໃນການກະທຳ</u>

7. ເລົ່າເຣື່ອງຕົວຢ່າງໃຫ້ນັກຮຽນຟັງ:

ຫົວຫນ້າຊາວຫນຸ່ມໄດ້ລາອອກ ສະນັ້ນສິດຍາພິບານຈະໄດ້ພາພວກຊາວຫນຸ່ມໄປຟື້ນຟູແທນ. ວັນທີ່ຈະອອກເດີນທາງ. ລາວກໍໄດ້ແລ່ນຫນ້າ ແລ່ນຫລັງສ່ອນສືນຢູ່ເພື່ອໃຫ້ທຸກສິ່ງທຸກຢ່າງຮຽບຮ້ອຍກ່ອນຈະພາຊາວຫນຸ່ມໄປ. ໃນຂນະທີ່ລາວກຳລັງຍ່າງໄປຫ້ອງການຂອງລາວເພື່ອເບິ່ງຄວາມຮຽບຮ້ອຍ ກ່ອນຈະຂັບຣົດພາຊາວຫນຸ່ມອອກເດີນທາງ ສມຽນຂອງລາວໄດ້ມາລັດລາວແລະກ່າວວ່າ, "ມີຄົນຜູ້ນຶ່ງຢາກຈະພົບທ່ານ ລາວມີບັນຫາ ລາວມີຄວາມຕ້ອງການຢາກຈະລົມກັບທ່ານ."

ສິດຍາພິບານເລີຍຕອບວ່າ, "ໃຫ້ລາວນັດພົບກັບຂ້ອຍມື້ໃຫມ່ສາ ຫລັງຈາກຂ້ອຍພາຊາວຫນຸ່ມກັບມາແຕ່ຟື້ນຟູ. ປະຈຸບັນນີ້ຂ້ອຍກຳລັງມີພາລະຫລາຍ."

ຫລັງຈາກຣົດໄດ້ແລ່ນອອກໄປຕາມທາງຫລວງແລ້ວ ລາວຈຶ່ງຄຶດສະເດີດຂຶ້ນແລ້ວເວົ້າວ່າ ລາວໄດ້ຫຍຸ້ງກັບວຽກຄຣິສຕະຈັກຫລາຍຈົນບໍ່ໄດ້ເຮັດວຽກຂອງພຣະເຈົ້າ.

8. ໃຫ້ຕັ້ງຄຳຖາມວ່າ,

- ເປັນໄປໄດ້ບໍ່ທີ່ພວກເຮົາຫຍຸ້ງກັບວຽກຄຣິສຕະຈັກຫລາຍ ຈົນບໍ່ມີເວລາສະແດງອອກເຖິງຄວາມສົງສານຕໍ່ຜູ້ຕ້ອງການຮ້ອງຂໍພວກເຮົາ? ຄຳເວົ້າສອງຄຳນີ້ໃຫ້ຄຳຕອບແຕກຕ່າງກັນຢ່າງໃດ, " ໃຫ້ເຂົາໄປຫາຊອກກິນເອົງເສັຽ" ແລະ "ຈົ່ງລ້ຽງເຂົາສາ" ໃນລັກສະນະຂອງການເປັນສາວົກຂອງທ່ານ? ຄຣິສຕະຈັກຂອງທ່ານ? ມີອັນໃດແດ່ທີ່ຈະພິສູດໄດ້ວ່າພວກສາວົກມີຄວາມສົງສານຕໍ່ຝູງຊົນທີ່ມານັ້ນ?
- ຄຣິສຕະຈັກຂອງທ່ານເຮັດຫຍັງແດ່ທີ່ມີການຊ່ອຍເຫລືອຄົນອື່ນ?
- ຄຣິສຕະຈັກຂອງທ່ານໃຫ້ໂອກາດເພື່ອມີພາກສ່ວນພົວພັນກັບການຮັບໃຊ້ບໍ່?
- ຈຳເປັນບໍ່ທີ່ຈະອາສັຍແຕ່ຄຣິສຕະຈັກປະກາດໃຫ້ທ່ານຊາບເຖິງຄວາມຕ້ອງການ?

9. ຫນູນໃຈນັກຮຽນໃນຫ້ອງ ຖ້າຜູ້ໃດບໍ່ມີໂອກາດນຳຄວາມຮັກຂອງພຣະເຈົ້າອອກໄປເຖິງຜູ້ໃດຜູ້ນຶ່ງໃຫ້ພວກເຂົາອອກໄປ. ຖ້າຜູ້ໃດໄດ້ໄປແລ້ວກໍໃຫ້ໄປຫາຜູ້ໃຫມ່ຕໍ່ອີກ.

10. ນຳພາອະທິຖານປິດ, ຂໍໃຫ້ພຣະຜູ້ເປັນເຈົ້າຊົງຊ່ອຍໃຫ້ນັກຮຽນໃນຫ້ອງໃຫ້ມີຄວາມສົງສານຄົນອື່ນເຫມືອນດັ່ງພຣະເຢຊູໄດ້ເປັນແບບຢ່າງໃຫ້ແກ່ພວກເຮົາ.

# <u>ບົດແນະນຳການສິດສອນ</u>
# <u>ບົດຮຽນທີ 7</u>
# <u>ພຣະເຢຊູຂະຫຍາຍວົງການຮັບໃຊ້</u>

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນ:</u>** ມາຣະໂກ 7:1-8, 14-30
**<u>ຂໍ້ພຣະຄັມພີສຳລັບເບື້ອງຫລັງ:</u>** ມາຣະໂກ 6:53-8:10
**<u>ຈຸດສຳຄັນຂອງບົດຮຽນນີ້:</u>** ພຣະເຢຊູຊົງຍົກເລີກເຣື່ອງຮີດຄອງ, ເຊື້ອຊາດ, ສັງຄົມ, ແລະວັທນະທັມເພື່ອທຸກຄົນຈະໄດ້ມາສູ່ຄວາມລອດພົ້ນ.
**<u>ຄຳຖາມເພື່ອການສຳຫລວດ:</u>** ຖ້າມີສິ່ງທີ່ກີດກັ້ນບໍ່ໃຫ້ຄົນໄດ້ຮັບຄວາມລອດພົ້ນພວກເຮົາຈະເຮັດຢ່າງໃດ?
**<u>ຈຸດປະສົງຂອງບົດຮຽນນີ້:</u>** ຈະຊ່ອຍໃຫ້ພວກເຮົາເຫັນວ່າມີອັນໃດແດ່ທີ່ກີດກັ້ນບໍ່ໃຫ້ຄົນໄດ້ຮັບຄວາມລອດພົ້ນຈາກພຣະເຈົ້າ.

## <u>ແຜນການສິດສອນ</u>

### <u>ຊີວິດສະພາບຕົວຈິງ</u>

1. ໃຫ້ນັກຮຽນມາລາຍງານວ່າພວກເຂົາໄດ້ອອກໄປຢ້ຽມຢາມ ຫລືວ່າຕິດຕໍ່ຜູ້ໃດຜູ້ນຶ່ງບໍ່. ຖາມພວກເຂົາວ່າຄົນທີ່ພວກເຂົາໄປຢ້ຽມຢາມນັ້ນເຂົາມີຄວາມຮູ້ສຶກຢ່າງໃດ? ຕົວເຈົ້າຂອງນັກຮຽນມີຄວາມຮູ້ສຶກຢ່າງໃດ?

2. ໃຫ້ຢາຍຂໍ້ສອບແກ່ນັກຮຽນໃນຫ້ອງ. ບອກພວກເຂົາວ່າເປັນຂໍ້ສອບຂອງບົດຮຽນໃນວັນນີ້ເພື່ອພວກເຂົາຈະໄດ້ຮູ້ວ່າພວກເຂົາຈະໄດ້ຮຽນເຣື່ອງອັນໃດໃນວັນນີ້.

### <u>ສຶກສາບົດຮຽນ</u>

3. ໃຫ້ຖາມຄຳຖາມຂໍ້ທີ 1 ຕາມໃບຂໍ້ສອບທີ່ຢາຍໃຫ້ນັກຮຽນນັ້ນ. (ຄຳຕອບແມ່ນຂໍ້ ຂ, ຄ, ສ)

4. ໃຫ້ຖາມຄຳຖາມຂໍ້ທີ 2 (ຄຳຕອບແມ່ນວ່າ ຖືກ). ໃຫ້ຮ້ອງຂໍໃຫ້ຄົນໃດຄົນນຶ່ງອ່ານ ມາຣະໂກ 1:38-39; 6:1-2.

5. ໃຫ້ຖາມຄຳຖາມຂໍ້ທີ 3 (ຄຳຕອບແມ່ນວ່າ ຜິດ). ໃຫ້ຮ້ອງຂໍໃຫ້ຄົນໃດຄົນນຶ່ງອ່ານ ມາຣະໂກ 7:1-5.
ໃຫ້ຖາມນັກຮຽນວ່າ ເປັນຫຍັງພວກຟາຣີຊາຍແລະນັກທັມຈຶ່ງມາຫາພຣະອົງ?

6. ໃຫ້ຖາມຄຳຖາມຂໍ້ທີ 4 (ຄຳຕອບແມ່ນຂໍ້ ຄ). ຫືວຂໍ້ "ການກີດກັ້ນຈາກຮີດຄອງທີ່ໄຮ້ປໂຍດ"

7. ໃຫ້ຖາມຄຳຖາມຂໍ້ທີ 5 (ຄຳຕອບແມ່ນຂໍ້ ງ). ໃຫ້ສຶກສາ ມາຣະໂກ 7:2. ອະທິບາຍຄວາມໝາຍຂອງຄຳວ່າ, "ເປັນມົນທິນ" ຫລືວ່າ "ບໍ່ສະອາດ".

8. ໃຫ້ຖາມຄຳຖາມຂໍ້ທີ 6 (ຄຳຕອບແມ່ນຂໍ້ ກ). ໃຫ້ຜູ້ນຶ່ງອ່ານ ມາຣະໂກ 7:6-8. ໃຫ້ອີກຜູ້ນຶ່ງອ່ານ ເອຊາຢາ 29:13-14.

9. ໃຫ້ຖາມຄຳຖາມຂໍ້ທີ 7 (ຄຳຕອບແມ່ນຂໍ້ ກ). ໃຫ້ອະທິບາຍຄຳວ່າ "ໂກຣະບານ" ຕາມຄວາມເຂົ້າໃຈຂອງພວກຟາຣີຊາຍ.

10. ໃຫ້ຜູ້ນຶ່ງອ່ານ ມາຣະໂກ 7:14-23, ແລະໃຫ້ອີກຜູ້ນຶ່ງອ່ານ ລະບຽບພວກເລວີ 11:1-3,9. ໃຫ້ອະທິບາຍ ຄຳສອນຂອງພຣະເຢຊູເປັນພຣະຄຳພີກປີ້ນປະວັດສາດໃນພຣະສັນຍາໃໝ່ ແລະເປັນຄຳສອນທີ່ພວກສາວົກບໍ່ສາມາດເຂົ້າໃຈໄດ້ງ່າຍ. ໃຫ້ຖາມຄຳຖາມຂໍ້ທີ 8 (ຄຳຕອບແມ່ນ "ເປໂຕ"), ແລະໃຫ້ຜູ້ນຶ່ງອ່ານກິຈການ 10:13-15.

11. ໃຫ້ຖາມຄຳຖາມຂໍ້ທີ 9 (ຄຳຕອບແມ່ນຂໍ້ ກ, ຂ, ແລະ ງ). ໃຫ້ຜູ້ນຶ່ງອ່ານ ມາຣະໂກ 7:24-30. ໃຫ້ສລຸບສິ່ງຈຳເປັນທີ່ຈະເອົາຊະນະການກີດກັ້ນເພື່ອຈະນຳພຣະເຢຊູເຂົ້າເຖິງຄົນໃຫ້ໄດ້.

**<u>ໜູນໃຊ້ໃນການກະທຳ</u>**

12. ໃຫ້ຖາມຄຳຖາມຂໍ້ທີ 10. ໃຫ້ນັກຮຽນໃນຫ້ອງຕຶກຕອງຄັກແນ່ສັ່ງຊາເບິ່ງໃນຄຣິສຕະຈັກຂອງຕົນມີອັນໃດແດ່ເປັນອຸປສັກກີດກັ້ນເຊັ່ນ: ເຣື່ອງຮີດຄອງປະເພນີ, ເຣື່ອງໜ້າຊື່ໃຈຄົດ, ການເຫັນວ່າຕົນດີກວ່າຄົນອື່ນ.

13. ໃຫ້ຄົນນຶ່ງອະທິຖານປິດໃຫ້ພຣະຜູ້ເປັນເຈົ້າຊ່ອຍແຕ່ລະຄົນຢ່າໃຫ້ເປັນຜູ້ສ້າງຄວາມກີດກັ້ນໃຫ້ຄົນອື່ນໄດ້ມາສູ່ຄວາມລອດພົ້ນຈາກອົງພຣະຜູ້ເປັນເຈົ້າ.

### ຂໍ້ສອບໃນຫົວເຣື່ອງ "ພຣະເຢຊູຂຍາຍວົງການການຮັບໃຊ້"

1. ໃນບົດຮຽນໄດ້ກ່າວເຖິງສາມຢ່າງທີ່ກີດກັ້ນບໍ່ໃຫ້ຄົນອື່ນມາສູ່ຄວາມລອດພົ້ນມີດັ່ງຕໍ່ໄປນີ້:
   ກ. ຈິດໃຈເຕັມໄປດ້ວຍຄວາມກຽດຊັງຄົນອື່ນ
   ຂ. ເຫັນວ່າຕົນດີກວ່າຄົນອື່ນ
   ຄ. ເປັນຄົນໜ້າຊື່ໃຈຄົດ
   ງ. ການບໍ່ເຊື່ອຟັງຢ່າງລີ້ລັບ
   ຈ. ການຜິດຊາຍຍິງ
   ສ. ຮີດຄອງປະເພນີ
   ຊ. ການຂ້າຄົນ

2. ຖືກ - ຜິດ  ໂຮງທັມມະເທສນາໃນແຂວງຄາລິເລຕ້ອນຮັບພຣະເຢຊູເປັນປະຈຳ.

3. ຖືກ - ຜິດ  ພວກຟາຣີຊາຍແລະນັກທັມມາຈາກກຸງເຢຣູຊາເລມບອກພຣະເຢຊູວ່າພວກເຂົາບໍ່ຕ້ອນຮັບພຣະອົງ.

4. ຫລັງຈາກນັ້ນ ກໍມີຄຳສອນທີ່ຕົກທອດມາຈາກເຖົ້າເກົ່າບູຮານຊຶ່ງກາຍມາເປັນພິທີຕາມຮີດຄອງ. ຫລັງຈາກສັຕວັດທີສາມກໍໄດ້ຂຽນຂຶ້ນມາເປັນລາຍລັກອັກສອນຢ່າງຄັກແນ່ເພື່ອໃຫ້ຊາວຢິວປະຕິບັດຕາມທີ່ເອີ້ນກັນວ່າ:
   ກ. ໂທຣາ 7+້ໍາ +ນພັ້8 ພຣະບັນຍັດ
   ຂ. ເພັນທາທັສ 7+້ໍາ ຽາີ້ະຈີ້ແ8 ພຣະທັມຫ້າເຫລັ້ມທຳອິດໃນພຣະສັນຍາເດີມທີ່ຊາວຢິວເອີ້ນກັນວ່າ ພຣະບັນຍັດ
   ຄ. ມິສນາ 7ຽຣທີ້8 ກົດບັນຍັດຈາກເຖົ້າເກົ່າບູຮານ
5. ຜູ້ນຳຂອງຊາວຢິວຖາມວ່າເປັນຫຍັງສາວົກຂອງພຣະເຢຊູຈຶ່ງ...

ກ. ຮັກສາຄົນເຈັບ

ຂ. ສອນຢູ່ໃນໂຮງທັມມະເທສນາ

ຄ. ກິນອາຫານທີ່ເປັນມົນທິນ (ບໍ່ສະອາດ)

ງ. ກິນອາຫານດ້ວຍມືທີ່ເປັນມົນທິນ (ບໍ່ສະອາດ)

6. ເມື່ອພຣະເຢຊູເອີ້ນພວກຟາຣີຊາຍວ່າ "ເປັນຄົນໜ້າຊື່ໃຈຄົດ" ພຣະອົງໃຊ້ພຣະທັມຂອງຜູ້ປະກາດພຣະທັມຄົນໃດ?

ກ. ເອຊາຢາ

ຂ. ເຢເຣມີຢາ

ຄ. ເອເຊກຽນ

ງ. ດານີເອນ

7. ຄຳວ່າ "ໂກຣະບານ" ມີຄວາມໝາຍວ່າ:

ກ. ເປັນຂອງຖວາຍໄວ້ແລ້ວ

ຂ. ເປັນທີ່ທຳໃຫ້ເສື່ອມເສັຽ

ຄ. ເປັນທີ່ຕ້ອງຫ້າມ

ງ. ເປັນທີ່ຈຳກັດ

8. ຄຳສອນຂອງພຣະເຢຊູກ່ຽວກັບເຣື່ອງອາຫານທີ່ເປັນມົນທິນ (ບໍ່ສະອາດ) ໄດ້ບອກເຫດການລ່ວງໜ້າເຖິງນິມິດທີ່ອັຄສາວົກຜູ້ນີ່ງຈະໄດ້ເຫັນຢູ່ຫລັງຄາຕຶກໃນຂນະທີ່ລາວລົມຄຶງໄປ.

ກ. ບາຣະນາບາ

ຂ. ໂປໂລ

ຄ. ເປໂຕ

ງ. ຕີໂມທຽວ

9. ຖ້າຫາກວ່າພຣະເຢຊູຖືກົດບັນຍັດ, ມີເຫດຜົນອັນໃດແດ່ທີ່ພຣະອົງບໍ່ສົມຄວນເວົ້າກັບຍິງຄົນນຶ່ງທີ່ເມືອງຕີໂຣ

ກ. ນາງເປັນຜູ້ຍິງ

ຂ. ນາງເປັນຄົນຕ່າງຊາດ

ຄ. ນາງຕິຕຽນພຣະອົງ

ງ. ນາງຖືສາສນາກຣີກ

10. ມີຮີດຄອງປະເພນີອັນໃດແດ່ໃນຄຣິສຕະຈັກຂອງພວກເຮົາທີ່ເປັນເຫດກໍ່ໃຫ້ເກີດມີຄວາມກີດກັ້ນຂ່າວປະເສີດ?

ກ. ພິທີສິນມະຫາສນິດ (ຜູ້ໃດ? ເປັນດ້ວຍເຫດໃດ? )

ຂ. ພິທີບັບຕິສມາ (ຜູ້ໃດ? ເປັນດ້ວຍເຫດໃດ? ເວລາໃດ?)

ຄ. ຕອນເຊື້ອເຊີນຫລັງຈາກການນະມັສການ

ງ. ສເນີສະມາຊິກໃຫມ່

ຈ. ດົນຕຣີປະເພດໃດໃຊ້ໃນຍາມນະມັສການ

ສ. ບໍ່ມີຈັກຂໍ້ດັ່ງທີ່ກ່າວມານີ້

ຊ. ແລະອື່ນໆ________________

# ບົດແນະນຳການສິດສອນ
# ບົດຮຽນທີ 8
# ພຣະເຢຊູຮຽກຮ້ອງໃຫ້ຕັດສິນໃຈ

---

**ຂໍ້ພຣະຄັມພີສຳລັບບົດຮຽນ:** ມາຣະໂກ 8:27-38
**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** ມາຣະໂກ 8:11-38
**ຈຸດສຳຄັນຂອງບົດຮຽນນີ້:** ພຣະເຢຊູຊົງຮຽກຮ້ອງໃຫ້ທຸກຄົນມອບກາຍຖວາຍໃຈໃຫ້ກັບພຣະອົງ.
**ຄຳຖາມເພື່ອການສຳຫລວດ:** ພຣະເຢຊູແມ່ນໃຜ?
**ຈຸດປະສົງຂອງບົດຮຽນນີ້:** ຈະຊ່ອຍໃຫ້ພວກເຮົາມອບກາຍຖວາຍໃຈໃຫ້ກັບພຣະເຢຊູ.

## ແຜນການສິດສອນ

**ຊີວິດສະພາບຕົວຈິງ**

1. ໃຫ້ບອກນັກຮຽນຜູ້ນຶ່ງລ່ວງຫນ້າໄວ້ກ່ອນ. ໃຫ້ລາວຕຽມຄຳສລຸບເຣື່ອງຄຣິສຕຽນໃນປະເທດຈີນ. ຖ້ານັກຮຽນຄົນອື່ນຢາກຈະແບ່ງປັນກໍຂໍໃຫ້ເຂົາມີພາກສ່ວນ. ສຳລັບຄຣິສຕຽນທີ່ຖືກຂົ່ມເຫງໃນປະເທດອື່ນໆອີກເຊັ່ນຄຣິສຕຽນໃນປະເທດລາວ. (ໃຫ້ຊອກອ່ານໃນວາຣະສານ (The Voice of the Martyrs), ຫນັງສືພິມ ຫລືວ່າ ໃນ Internet ເຊັ່ນ: www.persecution.com www.laohumright.org ) ບາງຄັ້ງ ສະຖານີ ເອເຊັຽເສຣີ ກໍອອກຂ່າວເຊັ່ນກັນ.

2. ແນະນຳຫົວຂໍ້ຂອງບົດຮຽນນີ້ນີ້ "ພຣະເຢຊູຮຽກຮ້ອງໃຫ້ຕັດສິນໃຈ." ໃຫ້ນັກຮຽນສຶກສາມາຣະໂກ ບົດທີ8 ໃຫ້ພວກເຂົາເຫັນວ່າບໍ່ພຽງແຕ່ເປໂຕຕ້ອງຕັດສິນໃຈເທົ່ານັ້ນ ພວກເຂົາກໍຕ້ອງຕັດສິນໃຈເຊັ່ນດຽວກັນ.

3. ໃຫ້ແຕ່ລະຄົນໃຊ້ "ໃບຕັດສິນໃຈຂອງຂ້າພະເຈົ້າ" ດັ່ງກ່າວ. ໃຫ້ນັກຮຽນຕື່ມຄຳຕອບແລະການຕັດສິນໃຈຂອງເຂົາໃສ່ຕາລາງທີສອງແລະທີສາມໃນຂນະທີ່ສຶກສາພຣະຄັມພີຫົວຂໍ້ຕໍ່ລົງໄປນີ້.

### ໃບຕັດສິນໃຈຂອງຂ້າພະເຈົ້າ

| ຄຳຖາມ | ຄຳຕອບ | ການຕັດສິນໃຈຂອງຂ້າພະເຈົ້າ |
|---|---|---|
| 1. ພຣະເຢຊູແມ່ນໃຜ? | | |
| 2. ອະນາຄົດຂອງພຣະເຢຊູຈະເປັນຢ່າງໃດ? | | |
| 3. ແມ່ນຫຍັງຄືການມອບກາຍຖວາຍໃຈ? | | |
| 4. ມີອັນໃດແດ່ທີ່ຈະຕ້ອງເສັຽ? | | |
| 5. ແມ່ນຫຍັງຄືການທ້າທາຍພຣະເຢຊູ? | | |

4. ໃຫ້ສຶກສາພຣະຄັມພີຕາມຫົວຂໍ້ດັ່ງຕໍ່ໄປນີ້:

ກ) ການເປີດເຜີຍເຖິງພຣະຄຣິດ (8:27-30)

ຂ) ການເປີດເຜີຍເຖິງໄມ້ກາງແຂນ (8:31-33)

ຄ) ການເປີດເຜີຍເຖິງການມອບກາຍຖວາຍໃຈ (8:34)

ງ) ການເປີດເຜີຍເຖິງຄວາມເສັຽສລະ (8:35-37),

ຈ) ຄຳທ້າທາຍຂອງພຣະອົງ (8:38)

**<u>ສຶກສາບົດຮຽນ</u>**

5. ໃຫ້ໃຊ້ເວລາສັ້ນໆທົບທວນບົດຮຽນຂອງອາທິດທີ່ຜ່ານມາໂດຍຖາມຄຳຖາມດັ່ງຕໍ່ໄປນີ້:

- ເປັນຫຍັງພຣະເຢຊູຈຶ່ງຮັບໃຊ້ຄົນຕ່າງຊາດ?
- ເປັນຫຍັງພຣະເຢຊູຈຶ່ງບໍ່ສະແດງໝາຍສຳຄັນໃຫ້ພວກຟາຣີຊາຍເບິ່ງ?
- ພຣະເຢຊູປົວຄົນຕາບອດ. ພຣະອົງໄດ້ຈູງຄົນຕາບອດໄປໃສ? (ຈູງລາວອອກໄປນອກເມືອງ.)
- ນັກເທດປົວພຍາດສມັຍນີ້ພວກເຂົາສະແດງການອັສຈັນຢູ່ບ່ອນໃດ? (ໃນບ່ອນທີ່ມີຊຸມຊົນຫລາຍໆ.)

6. ຫົວຂໍ້ ກ ໃຫ້ອ່ານ ມາຣະໂກ 8:27-30 ໃຫ້ທຸກຄົນໄດ້ຍິນ. ແລ້ວຖາມວ່າ:

- ມີໃຜແດ່ມີພຣະຄັມພີສະບັບອື່ນໃຫ້ອ່ານຂໍ້29 ດັງໆ?
  ໃຫ້ນັກຮຽນຂຽນຄຳຕອບລົງໄປໃນຊ່ອງຫວ່າງ "ຄຳຕອບ" ຂອງຄຳຖາມຂໍ້ທີນຶ່ງ. ຄຳຕອບນັ້ນແມ່ນ (ພຣະຄຣິດ ຫລື ພຣະເມຊີອາ).
- ເປັນຫຍັງພຣະເຢຊູຈຶ່ງບໍ່ໃຫ້ພວກສາວົກບອກຄົນອື່ນກ່ຽວກັບພຣະອົງ? (ພຣະອົງຮູ້ວ່າພວກເຂົາຕ້ອງການ ການແນະນຳຫລາຍຢ່າງກ່ຽວກັບເຣື່ອງສິ້ນພຣະຊົນຂອງພຣະອົງແລະການຄືນມາຈາກຕາຍ.)
- ບອກໃຫ້ນັກຮຽນວ່າ, "<u>ກ່ຽວກັບເຣື່ອງພຣະເຢຊູແມ່ນໃຜ ນັ້ນທ່ານຈະຕ້ອງຕັດສິນໃຈດ້ວຍຕົວທ່ານເອງ ທ່ານຈະໄປເອົາຄວາມຄິດເຫັນຂອງຄົນອື່ນບໍ່ໄດ້.</u> ບອກໃຫ້ນັກຮຽນຂຽນລົງໄປໃນຊ່ອງຫວ່າງ "ການຕັດສິນໃຈຂອງຂ້າພະເຈົ້າ" ຂອງຄຳຖາມຂໍ້ທີນຶ່ງ. ນີ້ເປັນການຕັດສິນໃຈທີ່ສຳຄັນທີ່ສຸດ.

7. ຫົວຂໍ້ ຂ ໃຫ້ອ່ານ ມາຣະໂກ 8:31-33 ໃຫ້ທຸກຄົນໄດ້ຍິນ. ແລ້ວຖາມວ່າ:

- ພຣະເຢຊູເວົ້າຫຍັງແດ່ກ່ຽວກັບເຫດການທີ່ຈະເກີດຂຶ້ນກັບພຣະອົງ? (ພຣະອົງຈະຕ້ອງຖືກຂ້າ ແລະພຣະອົງຈະຄືນຂຶ້ນມາ). ບອກໃຫ້ນັກຮຽນຂຽນຄຳຕອບລົງໄປໃນຊ່ອງຫວ່າງ "ຄຳຕອບ" ຂອງຄຳຖາມຂໍ້ທີສອງ.
- ເປັນຫຍັງເປໂຕຈຶ່ງທູນຫ້າມພຣະອົງ? (ເປໂຕບໍ່ໄດ້ຄາດໝາຍເອົາພຣະເມຊີອາປະເພດທີ່ພຣະອົງໄດ້ບັນລະຍາຍ).
- ທ່ານເຊື່ອວ່າພຣະເຢຊູເປັນພຣະເມຊີອາປະເພດໃດ? ບອກໃຫ້ນັກຮຽນຂຽນລົງໄປໃນຊ່ອງຫວ່າງ "ການຕັດສິນໃຈຂອງຂ້າພະເຈົ້າ" ຂອງຄຳຖາມຂໍ້ທີສອງ.

8. ຫົວຂໍ້ ຄ ໃຫ້ອ່ານ ມາຣະໂກ 8:34 ໃຫ້ທຸກຄົນໄດ້ຍິນ. ແລ້ວຖາມວ່າ:

- ພຣະເຢຊູຮຽກຮ້ອງການມອບກາຍຖວາຍໃຈຢ່າງໃດ? (ຕັດສິດຂອງຕົນ, ຮັບແບກໄມ້ກາງແຂນຂອງຕົນ, ຕິດຕາມພຣະອົງໄປ). ບອກໃຫ້ນັກຮຽນຂຽນຄຳຕອບລົງໄປໃນຊ່ອງຫວ່າງ "ຄຳຕອບ" ຂອງຄຳຖາມຂໍ້ທີສາມ.
- ພຣະອົງບໍ່ໄດ້ຮຽກຮ້ອງໃຫ້ພວກສາວົກປົກປ້ອງພຣະອົງ, ແຕ່ວ່າພຣະອົງພຽງບອກໃຫ້ພວກເຂົາຕິດຕາມພຣະອົງ.
- ບອກໃຫ້ນັກຮຽນຂຽນຄຳຕັດສິນໃຈຂອງພວກເຂົາລົງໄປໃນຊ່ອງຫວ່າງ "ການຕັດສິນໃຈຂອງຂ້າພະເຈົ້າ" ຂອງຄຳຖາມຂໍ້ທີສາມ. ໃຫ້ຖາມພວກເຂົາວ່າ, <u>ການຕັດສິນໃຈຂອງພວກເຂົານັ້ນໄດ້ຕັດສິນໃຈແບກໄມ້ກາງ</u>

แຂນຂອງເຂົາເອງໄປຕາມພຣະອົງບໍ່?

9. ຫົວຂໍ້ ໆ ໃຫ້ອ່ານ ມາຣະໂກ 8:35-37 ໃຫ້ທຸກຄົນໄດ້ຍິນ. ແລ້ວຖາມວ່າ:
- ແມ່ນຫຍັງຄືຄວາມສລະ? (ສິ່ງທີ່ເສັຽໄປ, ຫລື ສລະໃຫ້, ສລະຊີວິດ). ບອກໃຫ້ນັກຮຽນຂຽນຄຳຕອບລົງໄປໃນຊ່ອງຫວ່າງ "ຄຳຕອບ" ຂອງຄຳຖາມຂໍ້ທີສີ່.
- ກ່ອນຈະຂຽນລົງໄປໃນຊ່ອງຫວ່າງ "ການຕັດສິນໃຈຂອງຂ້າພະເຈົ້າ". ຂອງຄຳຖາມຂໍ້ທີສີ່. ໃຫ້ຖາມພວກເຂົາວ່າ, ເມື່ອຕິດຕາມພຣະຄຣິດທ່ານຈະຕ້ອງສລະຫຍັງແດ່? ທ່ານຈະຍອມໃຫ້ພຣະຄຣິດນຳພາຊີວິດຂອງທ່ານບໍ່ແທນທີ່ທ່ານຈະນຳເອງ? ທ່ານຈະຍອມສລະຄວາມເຫັນແກ່ຕົວຂອງທ່ານອອກໄປບໍ່? ໃຫ້ພວກເຂົາ ມີເວລາພຽງພໍທີ່ຈະຕອບ.

10. ຫົວຂໍ້ ຈ ໃຫ້ອ່ານ ມາຣະໂກ 8:38 ໃຫ້ທຸກຄົນໄດ້ຍິນ. ແລ້ວຖາມວ່າ:
- ຄຳທ້າທາຍຂອງພຣະອົງແມ່ນຫຍັງ? (ຢ່າໄດ້ປະຕິເສດພຣະອົງ ຫລື ມີຄວາມອາຍເພາະພຣະອົງ). ບອກໃຫ້ນັກຮຽນຂຽນຄຳຕອບລົງໄປໃນຊ່ອງຫວ່າງ "ຄຳຕອບ" ຂອງຄຳຖາມຂໍ້ທີຫ້າ. ໃຫ້ບັນລະຍາຍເຣື່ອງອຳນາດຂອງຄວາມອາຍຢູ່ໃນບົດຮຽນ. ໃຫ້ນັກຮຽນຜູ້ນຶ່ງອ່ານ ໂຣມ 1:16 ໃຫ້ໝູ່ໃນຫ້ອງຟັງ. ຖາມພວກເຂົາວ່າ, ພວກເຂົາເຄີຍມີຄວາມອາຍເພາະພຣະຄຣິດບໍ່? ບອກໃຫ້ນັກຮຽນຂຽນຄຳຕັດສິນໃຈຂອງພວກເຂົາລົງໄປໃນຊ່ອງຫວ່າງ "ການຕັດສິນໃຈຂອງຂ້າພະເຈົ້າ" ຂອງຄຳຖາມຂໍ້ທີຫ້າ.

**ໝູນໃຊ້ໃນການກະທຳ**

11. ໃຫ້ທົບທວນຄຳຕອບຕ່າງໆໃນຊ່ອງຫວ່າງ "ຄຳຕອບ". ແລ້ວກ່າວວ່າ, ນີ້ແມ່ນການຄາດໝາຍທີ່ພຣະອົງມີຕໍ່ພວກເຮົາ.

12. ໃຫ້ທົບທວນຄຳຕອບຕ່າງໆໃນຊ່ອງຫວ່າງ "ການຕັດສິນໃຈຂອງຂ້າພະເຈົ້າ". ບອກພວກເຂົາວ່າ, ຖ້າພວກເຂົາຍັງບໍ່ທັນໄດ້ຕອບຄຳຖາມໃນຊ່ອງຫວ່າງນີ້ ໃຫ້ຖືກັບເມືອເຮືອນ ແລ້ວໃຫ້ໃຊ້ເວລາຕຶກຕອງຄັກແນ່ແລະໃຫ້ພຣະວິນຍານບໍຣິສຸດນຳພາໃນຄຳຕອບທີ່ຈະຂຽນລົງໄປ.

13. ອະທິຖານປິດ, ຂໍໃຫ້ພຣະຜູ້ເປັນເຈົ້າຊົງຊ່ອຍໃຫ້ນັກຮຽນໃນຫ້ອງໃຫ້ມອບກາຍຖວາຍໃຈໃຫ້ແກ່ພຣະຄຣິດໂດຍບໍ່ຄຳນຶງເຖິງການສູນເສັຽໃດໆທັງສິ້ນ.

# ຄຳແນະນຳສຳລັບຄຣູສອນ
# ບົດຣຽນທີ 9
# ພຣະເຢຊູຊົງສອນເຣື່ອງການຮັບໃຊ້

---

ຂໍ້ພຣະຄັມພີສຳລັບບົດຣຽນນີ້: ມາຣະໂກ 9:30-37; 10:35-45
ຂໍ້ພຣະຄັມພີສຳລັບເບື້ອງຫຼັງ: ມາຣະໂກ 9:1--10:52
ຈຸດສຳຄັນຂອງບົດຣຽນນີ້: ພຣະເຢຊູຊົງສອນສາວົກຂອງພຣະອົງວ່າ ຄວາມຍິ່ງໃຫຍ່ເກີດມາຈາກການຮັບໃຊ້ແບບຖ່ອມຕົວຊຶ່ງພຣະອົງໄດ້ຊົງເປັນຕົວຢ່າງ.
ຄຳຖາມເພື່ອການສຳຣວດ: ແມ່ນຫຍັງເຮັດໃຫ້ຄົນກາຍເປັນຜູ້ຍິ່ງໃຫຍ່ຢ່າງແທ້ຈິງ?
ຈຸດປະສົງຂອງບົດຣຽນນີ້: ເພື່ອສຳຣວດເບິ່ງຊີວິດຂອງທ່ານເອງ ແລະມາຕການທີ່ພຣະເຢຊູຊົງຕັ້ງໄວ້.

## ແຜນສຳລັບການສອນ

ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)

1. ເຊີນນັກຣຽນບາງຄົນໃຫ້ສະແດງຄວາມຄິດເຫັນກ່ຽວກັບຄຸນນະພາບຂອງຜູ້ຮັບໃຊ້ຕາມຄວາມເຂົ້າໃຈຂອງເຂົາເຈົ້າແຕ່ລະຄົນ. ຫລັງຈາກນັ້ນໃຫ້ຂຽນຫົວເຣື່ອງຂອງບົດຣຽນໃສ່ກະດານ.

ພຣະເຢຊູຊົງສອນເຣື່ອງການຮັບໃຊ້

ກ. ການເດີນທາງໄປສູ່ ກາເປນາອູມ (ມາຣະໂກ 9:30-37)
    ພຣະເຢຊູຊົງຮັກຄົນບາບ (9:30-37)
    ພຣະເຢຊູຊົງສອນພວກສາວົກ (9:33-37)
ຂ. ການເດີນທາງໄປກຸງຢາຣູຊາເຣັມ (ມາຣະໂກ 10:30-45)
    ພຣະເຢຊູຊົງກ່າວລ່ວງໜ້າວ່າຈະຖືກຂ້າ (10:30-34)
    ຄຳທູນຂໍຂອງ ຢາໂກໂບ ແລະ ໂຢຮັນ (10:35-37)

ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)

2. ຫລັງຈາກການອະທິບາຍບົດຣຽນໂດຍຫຍໍ້ແລ້ວ ຊວນນັກຣຽນໃຫ້ເບິ່ງຂໍ້ຄວາມຕ່າງໆດັ່ງຕໍ່ໄປນີ້ທີ່ເຫັນວ່າຖືກຕ້ອງທີ່ສຸດ. ທ່ານອາດຈະພິມບົດຣຽນພາກນີ້ໃຫ້ນັກຣຽນແຕ່ລະຄົນ.
    ກ. ພຣະເຢຊູຊົງທຳນວາຍການຕາຍຂອງພຣະອົງ (9:30-32)
        _____(1). ມາຣະໂກ ຕື່ມຄຳທຳນວາຍນີ້ພາຍຫລັງເພື່ອໃຫ້ທຸກຄົນຄິດວ່າ ພຣະເຢຊູໄດ້ຊົງບອກເຖິງເຫດການນີ້ໄວ້ລ່ວງໜ້າ.
        _____(2). ພຣະເຢຊູອ່ານເບິ່ງສະຖານະການແລ້ວຄິດວ່າສິ່ງເຫລົ່ານັ້ນຈະຕ້ອງເກີດຂຶ້ນ.
        _____(3). ພຣະເຢຊູຊົງໃຊ້ຣິດອຳນາດຂອງພຣະອົງແລະສາມາດຮູ້ເຫດການຕ່າງໆກ່ອນທີ່ສິ່ງ

ເຫລົ່ານັ້ນຈະເກີດຂຶ້ນ.

ພວກສາວົກບໍ່ເຂົ້າໃຈຄຳທຳນວາຍຂອງພຣະເຢຊູກ່ຽວກັບການທໍຣະມານແລະການຕາຍທີ່ຈະມາເຖິງພຣະອົງ. ເປັນຫຍັງພວກສາວົກບໍ່ຖາມພຣະເຢຊູ ຫລືຂໍໃຫ້ພຣະອົງອະທິບາຍໃຫ້ແຈ່ມແຈ້ງ?

ຂ. ພຣະເຢຊູຊີ້ງປະນາມຄວາມເຫັນແກ່ຕົວຂອງພວກເຂົາ (9:33-34)

_____(1). ພຣະເຢຊູຊົງຮູ້ເຣື່ອງທີ່ພວກສາວົກຖຽງກັນນັ້ນລ່ວງໜ້າແລ້ວ.

_____(2). ພຣະເຢຊູຕ້ອງການຄຳຕອບຈາກພວກສາວົກເພື່ອພຣະອົງຈະໄດ້ຮູ້ວ່າພວກເຂົາຖຽງກັນເຣື່ອງຫຍັງແທ້.

ຄ. ພຣະເຢຊູຊົງຊ່ອຍພວກສາວົກໃຫ້ເຂົ້າໃຈເຖິງຄວາມຍິ່ງໃຫຍ່ທີ່ແທ້ (9:35-37)

_____(1). ພຣະເຢຊູຊົງໃຊ້ເດັກນ້ອຍເພື່ອອະທິບາຍເຣື່ອງຄວາມຍິ່ງໃຫຍ່ທີ່ແທ້ເພາະເດັກນ້ອຍເປັນຜູ້ບໍຣິສຸດແທ້.

_____(2). ພຣະເຢຊູຊົງໃຊ້ເດັກນ້ອຍເພື່ອອະທິບາຍເຣື່ອງຄວາມຍິ່ງໃຫຍ່ທີ່ແທ້ເພາະຄົນໃນສມັຍນັ້ນບໍ່ໄດ້ຖືວ່າເດັກນ້ອຍສຳຄັນ ແລະໄດ້ຖືວ່າເດັກນ້ອຍເປັນຜູ້ຮັບໃຊ້ຄົນອື່ນໆດ້ວຍ.

ມີຫຍັງແດ່ໃນຊີວິດຂອງທ່ານ ທີ່ສະແດງໃຫ້ເຫັນວ່າທ່ານເປັນຄົນຖ່ອມຕົວແລະເປັນຜູ້ຮັບໃຊ້?

ງ. ຄຳທຳນວາຍອັນອັສຈັນອີກເທື່ອນຶ່ງ (10:32-34)

_____(1). ພວກສາວົກບໍ່ເຊື່ອຄຳທຳນວາຍເຣື່ອງການຕາຍຂອງພຣະຄຣິດ.

_____(2). ພວກສາວົກບໍ່ເຂົ້າໃຈຄຳທຳນວາຍ.

_____(3). ພວກສາວົກບໍ່ສາມາດເຫັນຄຳທຳນວາຍກ່ຽວກັບການຕາຍຂອງພຣະຄຣິດເພາະພວກເຂົາເມົາມົວຢູ່ແຕ່ໃນຄວາມຕ້ອງການຂອງພວກເຂົາເອງ.

ຈ. ການທູນຂໍແບບເຫັນແກ່ຕົວ (10:35-37)

_____(1). ຢາໂກໂບ ແລະ ໂຢຮັນຄິດວ່າພຣະເຢຊູຈະໄດ້ຊັຍຊະນະແລະຈະເປັນກະສັດຄອງໂລກນີ້.

_____(2). ຢາໂກໂບ ແລະໂຢຮັນບໍ່ຄິດວ່າພຣະເຢຊູຈະຖືກປະຫານຊີວິດ.

ທ່ານຄິດວ່າການທູນຂໍຂອງຢາໂກໂບແລະໂຢຮັນແມ່ນການຂໍທີ່ເຕັມໄປດ້ວຍຄວາມຈອງຫອງແລະຄວາມຮັກຫລືບໍ່?

ສ. ບົດຮຽນກ່ຽວກັບຄວາມຍິ່ງໃຫຍ່ທີ່ແທ້ຈິງ (10:38-45)

_____(1). ພຣະເຢຊູຊົງສອນວ່າຄວາມຍິ່ງໃຫຍ່ທີ່ແທ້ແມ່ນເກີດມາຈາກການເປັນຜູ້ນຳທີ່ເຂັ້ມແຂງ.

_____(2). ພຣະເຢຊູຊົງສອນວ່າຄວາມຍິ່ງໃຫຍ່ທີ່ແທ້ແມ່ນເກີດມາຈາກການເປັນຂ້ອຍໃຊ້, ການເປັນຂ້າທາດ, ແລະການເປັນຜູ້ເສັຽສລະ.

3. ໃຫ້ນັກຮຽນຜູ້ທີ່ອ່ານເກ່ງອ່ານພຣະທັມແຕ່ລະພາກຂອງຫົວຂໍ້ໃຫຍ່ໆ. ຊັກຊວນໃຫ້ນັກຮຽນແຕ່ລະຄົນມີສ່ວນຮ່ວມໃນການຕອບຂໍ້ຄວາມຕ່າງໆທີ່ຜ່ານມາ. ໃຊ້ຄຳອະທິບາຍສຳລັບບົດຮຽນນີ້ເພື່ອຊ່ວຍໃນການບັລຍາຍ. ອ່ານຫົວຂໍ້ໃຫຍ່, ອະທິບາຍ, ຕອບຄຳຖາມ.

<u>ນຳບົດຮຽນໄປໃຊ້ໃນຊີວິດ</u> (ໃຊ້ເວລາ 15 ນາທີ)

4. ແບ່ງກະດານອອກເປັນສອງພາກ; ພາກນຶ່ງຂຽນ "ທັສນະຝ່າຍໂລກ" ແລະພາກທີສອງຂຽນ "ທັສນະຂອງພຣະຄຣິດ." ຂຽນຄວາມເຫັນເຣື່ອງ "ຄວາມຍິ່ງໃຫຍ່" ຕາມຄວາມຄິດຂອງໂລກລົງໃສ່ຝ່າຍໂລກ ແລະຕາມຄວາມຄິດຂອງຄຣິສຕຽນລົງໃສ່ຝ່າຍພຣະຄຣິດ. ຊັກຊວນນັກຮຽນໃຫ້ນຳຄວາມຄິດເຫັນບາງຢ່າງເຣື່ອງຄວາມຍິ່ງໃຫຍ່ທີ່ແທ້ໃນຝ່າຍພຣະຄຣິດໄປປະຕິບັດໃນຊີວິດ. ອະທິຖານປິດ.

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 10
# ພຣະເຢຊູຊົງໃຊ້ສິດອຳນາດ

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ມາຣະໂກ 11:15-18, 27--12:12
ຂໍ້ພຣະຄັມພີສຳລັບເບື້ອງຫຼັງ: ມາຣະໂກ 11:1--12:44
ຈຸດສຳຄັນຂອງບົດຮຽນນີ້: ການກະທຳແລະຄຳສັ່ງສອນຂອງພຣະເຢຊູໄດ້ສະແດງເຖິງສິດອຳນາດຂອງພຣະອົງໃນຖານະພຣະບຸດຂອງພຣະເຈົ້າ.
ຄຳຖາມເພື່ອການສຳຣວດ: ໃຜເປັນຄົນຮັບຜິດຊອບໃນຂົງເຂດນີ້?
ຈຸດປະສົງຂອງບົດຮຽນນີ້: ເພື່ອຈະຮູ້ຄວາມໝາຍຕ່າງໆຈາກຊີວິດຂອງພຣະເຢຊູທີ່ໄດ້ຊົງສະແດງໃຫ້ເຫັນຜ່ານການກະທຳແລະຄຳສັ່ງສອນຂອງພຣະອົງ.

## ແຜນສຳລັບການສອນ

ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)

1. ບົດຮຽນນີ້ນີ້ຈະເວົ້າເຖິງເຣື່ອງສິດອຳນາດ. ຊັກຊວນນັກຮຽນບາງຄົນໃຫ້ເລົ່າເຣື່ອງປະສົບການກ່ຽວກັບການໃຊ້ສິດອຳນາດຫລືການຖືກຄົນອື່ນໃຊ້ສິດເດັດຂາດກັບພວກເຂົາເຈົ້າ. ບອກນັກຮຽນໃຫ້ຮູ້ວ່າພຣະເຢຊູມີສິດອຳນາດເໜືອທຸກຢ່າງເພາະພຣະອົງເປັນພຣະເຈົ້າ; ໃນບົດຮຽນນີ້ ພຣະອົງບໍ່ແມ່ນຜູ້ຖືກເຄາະຮ້າຍ ແຕ່ພຣະອົງເປັນຜູ້ຊັຍຊະນະ. ຊັຍຊະນະອັນຍິ່ງໃຫຍ່ຂອງພຣະອົງຄືການຕາຍແທນມະນຸດແລະການຖືກເຮັດໃຫ້ຄືນມາຈາກຄວາມຕາຍ.

ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)

2. ຂຽນຫົວຂໍ້ໃຫຍ່ໃສ່ກະດານ

   ພຣະເຢຊູຊົງໃຊ້ສິດອຳນາດ

   ພຣະເຢຊູຊົງປ້ອຍຕົ້ນເດື່ອເທດ (ມາຣະໂກ 11:12-14, 20-26)
   ພຣະເຢຊູຊົງຊຳຣະພຣະວິຫານ (ມາຣະໂກ 11:11, 15-19)
   ການທ້າທາຍເຣື່ອງສິດອຳນາດ (ມາຣະໂກ 11:27-33)
   ຄວາມເຫັນແກ່ຕົວຂອງພວກນັກທັມ (ມາຣະໂກ 12:1-12)

3. ເລົ່າເຣື່ອງການສະເດັດເຂົ້າກຸງເຢຣູຊາເລັມຢ່າງມີຊັຍຂອງອົງພຣະເຢຊູໃນ ມາຣະໂກ 11:1-10 ໃຫ້ນັກຮຽນຟັງແບບສັ້ນ. ພຣະເຢຊູເຄີຍໄດ້ສັ່ງພວກສາວົກບໍ່ໃຫ້ເວົ້າວ່າພຣະອົງຄືກະສັດ; ແຕ່ໃນເວລານີ້ເປັນເວລາທີ່ທຸກຢ່າງຈະໄດ້ຖືກເປີດເຜີຍ. ພຣະອົງຈະເປີດເຜີຍຈຸດປະສົງຕ່າງໆຂອງພຣະອົງພ້ອມທັງຈະເຮັດໃຫ້ທຸກຢ່າງໄດ້ສຳເຣັດລົງ.

ທຸກຢ່າງຈະຕ້ອງເປັນໄປຕາມແຜນແລະຕາມຈຸດປະສົງທີ່ພຣະອົງໄດ້ຊົງລົງມາໃນໂລກນີ້. ຄຣິສຕຽນຈະຕ້ອງເຮັດທຸກຢ່າງຕາມພຣະປະສົງຂອງພຣະເຈົ້າໃນຊີວິດຂອງພວກເຂົາເຖິງຈະມີບັນຫາຫລືພັຍອັນຕະລາຍກໍຕາມ.

4. ພານັກຮຽນໃຫ້ເບິ່ງພຣະທັມມາຣະໂກ 11:12-22. ໃຊ້ຄໍາອະທິບາຍສໍາລັບບົດຮຽນນີ້ໃນການບັລຍາຍ. ອະທິບາຍຄໍາສອນທີ່ຊ້ອນຢູ່ເບື້ອງຫລັງຂອງການປ້ອຍຕົ້ນເດື່ອເທດ; ໂດຍສເພາະແລ້ວໃຫ້ອ້າງເຖິງສະພາບການໃນລະບົບສາສນາຂອງຄົນຢິວໃນສມັຍນັ້ນ ແລະການຕໍ່ຕ້ານນັກສາສນາຂອງພຣະເຢຊູຄຣິດ. ຄໍາສອນສໍາລັບຄຣິສຕຽນຄືໃຫ້ພວກເຮົາຕິດສນິດຢູ່ກັບພຣະຄຣິດ ແລະໃຫ້ຊີວິດຂອງພວກເຮົາເປັນຊີວິດທີ່ເກີດຜົນແທນທີ່ຈະເຕັມໄປດ້ວຍພິທີການຕ່າງໆແຕ່ບໍ່ມີຜົນຫຍັງເລີຍ.

5. ອ່ານ ມາຣະໂກ 11:15-18 ໃຫ້ທຸກຄົນໄດ້ຍິນ. ອະທິບາຍປະວັດເຣື່ອງພຣະວິຫານທີ່ກຸງເຢຣູຊາເລັມ ຈົນເຖິງເຣື່ອງການກໍ່ສ້າງວິຫານຂອງກະສັດເຮໂຣດ. ອະທິບາຍວ່າເປັນຫຍັງຈຶ່ງໄດ້ມີການແລກປ່ຽນເງິນແລະການຂາຍສັດຕ່າງໆໃນເຂດພຣະວິຫານ. ອະທິບາຍເຫດຜົນຂອງພຣະເຢຊູ ແລະການຊໍາຣະພຣະວິຫານ. ແນະນໍາຄວາມໝາຍຈາກເຣື່ອງນີ້ສໍາລັບຊີວິດຄຣິສຕຽນ.

6. ອ່ານມາຣະໂກ 11:27-12:12) ໃຫ້ທຸກຄົນໄດ້ຍິນ. ເລົ່າເຣື່ອງການຕອບຄໍາທ້າທາຍເຣື່ອງສິດອໍານາດຂອງພຣະເຢຊູໃຫ້ນັກຮຽນຟັງແບບສັ້ນໆ. ເນັ້ນຄໍາອະທິບາຍຂອງພຣະເຢຊູເຣື່ອງ ອິສຣາເອັນບໍ່ໄດ້ເຮັດຕາມຄໍາສັ່ງຂອງພຣະເຈົ້າ, ອິສຣາເອັນໄດ້ປະຕິເສດຜູ້ປະກາດພຣະທັມ, ແລະອິສຣາເອັນກໍາລັງຈະປະຫານພຣະບຸດຂອງພຣະເຈົ້າ. ອະທິບາຍພຣະທັມມາຣະໂກ 12 ໃຫ້ຈົບ ແລະຊີ້ໃຫ້ທຸກຄົນໄດ້ເຫັນການປ້ອງກັນສິດອໍານາດ ແລະການຫລີກຈາກບ້ວງມານຂອງພຣະເຢຊູຄຣິດ.

<u>ນໍາບົດຮຽນໄປໃຊ້ໃນຊີວິດ</u> (ໃຊ້ເວລາ 15 ນາທີ)

7. ຊັກຊວນນັກຮຽນໃຫ້ຈົດຈໍາຄວາມໝາຍສໍາຄັນສໍາລັບຊີວິດຈາກບົດຮຽນນີ້; ຊັກຊວນນັກຮຽນໃຫ້ອະທິຖານເພື່ອການປ່ຽນແປງບາງຢ່າງທີ່ເຂົາເຈົ້າຕ້ອງເຮັດໃນຊີວິດ.

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 11
# ພຣະເຢຊູຖວາຍຊີວິດຂອງພຣະອົງເອງ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ມາຣະໂກ 14: 12-26; 32-42

**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** ມາຣະໂກ 14:1-42

**ຈຸດສຳຄັນຂອງບົດຮຽນນີ້:** ພຣະເຢຊູສມັກໃຈທີ່ຈະຖວາຍຊີວິດຂອງຕົນດ້ວຍຄວາມເຊື່ອ ໃນພຣະເຈົ້າພຣະບິດາ ຜູ້ຊົງສົ່ງພຣະອົງລົງມາ.

**ຄຳຖາມເພື່ອສຳຣວດ:** ແມ່ນຫຍັງທີ່ມີຄຸນຄ່າຫລາຍກວ່າໝູ່ໃນຊີວິດຂອງຄົນໆນຶ່ງ?

**ຈຸດປະສົງຂອງບົດຮຽນ:** ເພື່ອຊ່ວຍໃຫ້ນັກຮຽນ ເຂົ້າໃຈໃນການຮູ້ບຸນຄຸນທີ່ພຣະເຢຊູໄດ້ສະລະຊີວິດ ຫລືການຖວາຍຕົວ ຂອງພຣະອົງ.

## ແຜນການສິດສອນ

## ນຳເຣື່ອງເຂົ້າສູ່ຊີວິດຈິງ

1. ກ່ອນເຂົ້າຫ້ອງຮຽນ ໃຫ້ຄຣູສອນ ຕຽມອັດເອກສານນີ້ໄວ້ລ່ວງໜ້າ ເພື່ອໃຫ້ພຽງພໍກັບນັກຮຽນຂອງຕົນ.

<u>ຊີວິດຂອງຂ້ອຍມີຄຸນຄ່າຫລາຍປານໃດ?</u>

ໃນນີ້ບໍ່ແມ່ນການບັງຄັບ, ແຕ່ໃຫ້ພິຈາຣະນາໃນການສັ່ງຊາຂ້າງລຸ່ມນີ້. ໃຫ້ຂີດເສັ້ນຕັດກັບເສັ້ນຂນານເທິງຊື່ຜູ້ທີ່ທ່ານອາດຈະຍອມຕາຍເພື່ອຜູ້ນັ້ນໄດ້.

<u>ບໍ່ຍອມຕາຍເພື່ອ</u> <u>ຍອມຕາຍເພື່ອ</u>

---

ສັດຕຣູ ການມີໂທດ ຄົນແປກໜ້າ ເພື່ອນບ້ານໃກ້ຄຽງ ມິດສະຫາຍ ພີ່ນ້ອງ ຄູ່ຄອງ ລູກ

ຫລັງຈາກທຸກຄົນໝາຍລົງແລ້ວ, ຂໍຄວາມເຫັນແຕ່ລະຄົນ. ແລ້ວໃຫ້ກ້າວເຂົ້າມາຫາບົດຮຽນ ວ່າພຣະເຢຊູພໍໃຈທີ່ຈະຕາຍເພື່ອຄົນບາບເທິງໄມ້ກາງແຂນ.

## ນຳພາສຶກສາພຣະທັມ

2. ໃຫ້ທວນຄືນບົດຮຽນທີ 10 ແດ່ເລັກນ້ອຍ. ໃຫ້ນັກຮຽນຄົນນຶ່ງອ່ານພຣະຄັມພີ ມາຣະໂກ 14 : 12-26 ແລ້ວໃຫ້ອອກຄຳຄິດເຫັນກ່ຽວກັບການທີ່ພຣະເຢຊູ ຊົງມີແຜນການນີ້. (ເຂົ້າໃນແຜນການຂອງພຣະບິດາ)

**ເຣື່ອງເປັນໜ້າຢາກຫົວຫລັງຈາກທີ່ຂ້ອຍກັບຈາກນ້ຳສ້າງ.**

ມີເຣື່ອງນຶ່ງເກີດຂຶ້ນກັບຂ້ອຍມື້ນີ້. ນາຍຂອງຂ້ອຍສົ່ງຂ້ອຍໄປຕັກນ້ຳ. ຕາມທັມມະດາແລ້ວ ງານນີ້ເປັນງານຂອງຜູ້ຍິງ ແຕ່ວ່າພວກເຂົາຄາວຽກກັນໝົດທຸກຄົນ. ມື້ນີ້ເປັນມື້ພິເສດໃນກຸງເຢຣູຊາເລັມ ຜູ້ຄົນກໍເຕັມທົ່ວໄປ. ອາກາດ

ກໍອີບອວນໄປດ້ວຍກິ່ນ ທີ່ເຜົາເຄື່ອງບູຊາ ແລະ ການທຳອາຫານຂອງແຕ່ລະເຮືອນ. ພວກເຮົາລຶ້ງເຄີຍກັບສຽງອຶກກະທຶກ ແບບນີ້ທຸກໆປີ.

ຢ່າງໃດກໍຕາມ, ຂ້ອຍຖືຫມໍ້ນ້ຳຍ່າງໄປ ຊາຍສອງຄົນກໍເຂົ້າມາຫາຂ້ອຍ. ພວກເຂົາເວົ້າວ່າ ພວກເຂົາຢາກຕາມໄປເບິ່ງເຮືອນຂ້ອຍ. ຂ້ອຍບໍ່ຮູ້ວ່າພວກນີ້ເຂົາຕ້ອງການຫຍັງ, ແຕ່ພວກເຂົາກໍບໍ່ຄືຄົນຂີ້ລັກຂີ້ສົກຫຍັງດອກ. ພວກເຂົາເປັນຄົນທັມມະດາໆ ດັ່ງນັ້ນຂ້ອຍຈຶ່ງອະນຸຍາດໃຫ້ເຂົານຳຂ້ອຍໄປ. ເມື່ອມາເຖິງເຮືອນ, ນາຍຂອງຂ້ອຍກໍມາພົບທີ່ຫນ້າປະຕູ, ເບິ່ງຄືວ່ານາຍຂອງຂ້ອຍຮູ້ມາກ່ອນແລ້ວວ່າຈະມີຄົນຕາມຂ້ອຍມາ. ເພິ່ນເຊີນພວກເຂົາເຂົ້າມາໃນເຮືອນ, ເຊີນໄປເບິ່ງຫ້ອງຊັ້ນເທິງ ແລະກ່າວກັບເຂົາວ່າ ເຊີນຕາມສະບາຍໂລດ. ຂ້ອຍກໍໄປເຮັດວຽກຂອງຂ້ອຍຕາມເຄີຍ.

ນາຍຂອງຂ້ອຍ ບອກຂ້ອຍໃຫ້ຊ່ວຍສອງຄົນນີ້ໃນການຈັດຕຽມ. ຂ້ອຍຮູ້ດີໃນການຈັດຕຽມນີ້ ຈະເປັນການຕຽມແກະ, ເຂົ້າຈີ່ບໍ່ມີເຊື້ອແປ້ງ, ຫລືເຫລົ້າອະງຸ່ນ ຂ້ອຍຮູ້ຈັກວ່າຈະປະສົມຢ່າງໃດ. ພວກເຮົາຈັດຕຽມທຸກຢ່າງ ແລ້ວກໍນຳຂຶ້ນໄປທີ່ຫ້ອງຊັ້ນເທິງ ລໍຖ້າເວລາຈະມາເຖິງ.

ຕໍ່ມາ ຜູ້ທີ່ຊື່ວ່າ ເຢຊູ ແລະສາວົກກໍມາເຖິງເຮືອນ. ຫລາຍຄົນໃນກຸງເຢຣູຊາເລັມ ຮູ້ຈັກພຣະເຢຊູດີ ແລະກໍເຄີຍໄດ້ຟັງຄຳສອນຂອງລາວ. ສຳຫລັບຕົວຂ້ອຍ, ຂ້ອຍບໍ່ເຄີຍໄດ້ຍິນອີ່ຫລີ ແຕ່ນາຍຂອງຂ້ອຍກໍໄດ້ຟັງລາວເຫມືອນກັນ.

ຢູ່ໃນພາເຂົ້າອາຫານແລງວັນນັ້ນ ຂ້ອຍໄດ້ສັງເກດເບິ່ງຢູ່ທາງນອກປະຕູ ວ່າທຸກສິ່ງເປັນໄປດ້ວຍດີຫລືບໍ່. ສາວົກຂອງລາວມີຄວາມເສັຽໃຈ ເພາະລາວກ່າວວ່າຈະມີຄົນນຶ່ງຈະທໍຣະຍົດຕໍ່ລາວ. ຫມົດທຸກຄົນກໍປະຕິເສດຕໍ່ຄຳເວົ້ານັ້ນ. ເມື່ອຮັປທານອາຫານເປັນທີ່ຮຽບຮ້ອຍແລ້ວ ພຣະເຢຊູກໍຫັກເຂົ້າຈີ່ ແລະກິນນ້ຳອະງຸ່ນກັນທຸກຄົນແລ້ວກໍພາກັນຈາກໄປ. ຂ້ອຍກໍໄປມ້ຽນພາເຂົ້າຕາມຫນ້າທີ່ຂອງຂ້ອຍ. ຂ້ອຍບໍ່ຮູ້ວ່າຈະອະທິບາຍຢ່າງໃດ, ຂ້ອຍຍັງຮູ້ສຶກວ່າຍັງມີພຣະວິນຍານບໍຣິສຸດຢູ່. ຫນ້າແປກປລາດ!!!!!!!!!

3. ໃຫ້ນັກຮຽນຄົນນຶ່ງອ່ານ ພຣະຄັມພີ ມາຣະໂກ 14:12-26 ຄຣູຈະອະທິບາຍ ສັ້ນໆ ໂດຍໃຫ້ນັກຮຽນປະກອບສ່ວນອອກຄຳເຫັນດ້ວຍ. ຕໍ່ໄປກໍອ່ານ ຂໍ້ 32-42 ແລະຕໍ່ໄປ ກໍ ເນັ້ນຫນັກ ຂໍ້ 36.

## <u>ນຳມາໃຊ້ໃນຊີວິດປະຈຳວັນ</u>

4. ຫນູນໃຈໃຫ້ນັກຮຽນອ່ານເພງສັຣເສີນບົດທີ 113 ຫາ ບົດທີ 118 ເວລາກັບບ້ານ. ເພາະຂໍ້ພຣະທັມເຫລົ່ານີ້ຈະເວົ້າກ່ຽວກັບ ເທສການປັສຄາ ຂອງຄົນອິສຣາເອນຕອນອອກຈາກອີຍິບ. ຫນູນໃຈ ໃຫ້ນັກຮຽນຮູ້ບຸນຄຸນທີ່ພຣະເຢຊູຊົງຕັ້ງວັນນີ້ເພື່ອພວກເຮົາ.
ອະທິຖານຂອບຄຸນພຣະເຈົ້າ , ໃຫ້ທຸກຄົນພ້ອມໃຈນະມັສການພຣະເຈົ້າຮ່ວມກັນ.

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 12
# ພຣະເຢຊູຖືກຕັດສິນລົງໂທດ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ມາຣະໂກ 14: 53 -- 15:20

**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** ມາຣະໂກ 14:43--15:20

**ຈຸດສຳຄັນຂອງບົດຮຽນນີ້:** ຫລາຍຄົນມີສ່ວນຮ່ວມ ໃນການສອບສວນ, ພຣະເຢຊູໂຕ້ຕອບດ້ວຍການມີດງຽບ ແລະ ວາງເສີຍ.

**ຄຳຖາມເພື່ອສຳຣວດ:** ທ່ານຈະເຮັດຢ່າງໃດ ໃນເມື່ອຖືກທ້າທາຍໃນຄວາມເຊື່ອ?

**ຈຸດປະສົງຂອງບົດຮຽນ:** ໃນການທົດລອງນີ້ ພຣະເຢຊູຊົງ ໂຕ້ຕອບຜູ້ທີ່ມາສອບສວນພຣະອົງຢ່າງໃດ?

## ແຜນການສິດສອນ

## ນຳເຣື່ອງເຂົ້າສູ່ຊີວິດຈິງ

1. ໃນເວລາທ່ານມີຄວາມຢ້ານ ແລະມີຄວາມຫວຸ້ນວາຍ ທ່ານເຮັດຢ່າງໃດ? ທ່ານມີຄວາມຮັບຜິດຊອບຢ່າງໃດ ເມື່ອເຫດການຍຸດຕິລົງ? ໃຫ້ສອງຄົນອອກຄຳຄິດເຫັນຕາມຄວາມສມັກໃຈ. ຄຣູຈະພະຍາຍາມດຶງຄວາມຄິດເຂົ້າມາຫາພຣະເຢຊູວ່າພຣະອົງກະທຳຢ່າງໃດ ເມື່ອມີບັນຫາເກີດຂຶ້ນ.

## ນຳພາສຶກສາພຣະທັມ

2. ມອບໜ້າທີ່ໃຫ້ແຕ່ລະຄົນ ຖ້າຫາກມີຫລາຍກວ່າຫົກຄົນໃຫ້ຮວມກັນເຂົ້າ (ບໍ່ໃຫ້ກາຍ ຫົກໝວດ) ແຕ່ລະໝວດໃຫ້ສຶກສາຂໍ້ພຣະຄັມທີ່ໃຫ້ໄວ້ໃນແຕ່ລະໝວດ.

3. ແຕ່ລະໝວດໃຫ້ ລາຍງານຕອບຕາມຄຳຖາມນີ້:

ໝວດທີ ນຶ່ງ ຢູດາອິສກາຣິອົດ (ສຶກສາມາຣະໂກ 14:43-52)

1. ເປັນຫຍັງເຈົ້າຈຶ່ງຂາຍພຣະເຢຊູ? 2. ແມ່ນຫຍັງຄືຄວາມໝາຍຂອງການຈູບ? 3. ເຈົ້າມີໜ້າທີ່ຮັບຫຍັງເວລາເຈົ້າຈູບພຣະເຢຊູ? 4. ເຈົ້າຮູ້ສຶກຢ່າງໃດເວລາທະຫານຈັບພຣະເຢຊູໄປແລ້ວ?

ໝວດທີ ສອງ ພວກນັກທັມ (ສຶກສາ ມາຣະໂກ 14:53-64)

1. ເປັນຫຍັງພຣະເຢຊູຈຶ່ງຖືກນຳມາຫາສະພາ ແຊນຮິດຣິນ? 2. ມີສິ່ງໃດທີ່ທ່ານຈະຮຽນຈາກພຣະເຢຊູ ສິ່ງທີ່ທ່ານຍັງບໍ່ທັນຮູ້? 3. ແມ່ນຫຍັງທີ່ພວກທ່ານເຮັດຜິດຕໍ່ພຣະເຢຊູ? 4. ທ່ານມີຄວາມຮູ້ສຶກຢ່າງໃດ ເມື່ອພຣະເຢຊູກ່າວວ່າທ່ານເປັນພຣະຄຣິດ? 5. ພຣະເຢຊູເປັນຢ່າງໃດໃນເວລາພຣະອົງຖືກນຳມາພິຈາຣະນາຄະດີ?
3. ໝວດທີ ສາມ ຊີໂມນ ເປໂຕ (ສຶກສາ ມາຣະໂກ 14:54,66-72)

1. ທ່ານຢ້ານເຂົາຈັບທ່ານບໍ່ ເວລາທ່ານຕິດຕາມຈອບເບິ່ງພຣະເຢຊູ? 2. ທ່ານຮູ້ສຶກຢ່າງໃດ ເມືອຍິງຄົນໃຊ້ຫ້ວງທ່ານວ່າ ທ່ານເຄີຍຢູ່ກັບພຣະເຢຊູ? 3. ເປັນຫຍັງເຈົ້າຈິ່ງປະຕິເສດວ່າບໍ່ຮູ້ຈັກລາວ? 4. ທ່ານຮູ້ສຶກຢ່າງໃດ ເມື່ອທ່ານໄດ້ຍິນໄກ່ຂັນເຖິງສາມຄັ້ງ? 5. ທ່ານສັງເກດເຫັນຫຍັງແດ່ (ການກະທຳແລະການປະພຶດ)ໃນພຣະເຢຊູເມື່ອເວລາພິຈາຣະນາຄະດີ?

4. ໝວດທີ ສີ່ ສະມາຊິກສະພາ ແຊນຮີດຣິນ (ສຶກສາ ມາຣະໂກ 14:53-65)
   1. ທ່ານວາງອຸບາຍຢ່າງໃດ ເພື່ອຈະຈັບພຣະເຢຊູ? 2. ເປັນຫຍັງສະພາແຊນຮີດຣິນຈິ່ງບໍ່ຮັບພຣະເຢຊູ ເມື່ອພຣະອົງກ່າວວ່າພຣະອົງເປັນພຣະເມຊີອາ? 3. ເປັນຫຍັງພວກທ່ານຈິ່ງປມາດແລະຖົ່ມນໍ້າລາຍໃສ່ພຣະອົງ?
   4. ທ່ານບອກໄດ້ບໍ່ວ່າ ພຣະອົງວາງຕົວຢ່າງໃດໃນເວລາພິຈາຣະນາຄະດີ?

5. ໝວດທີ ຫ້າ ປີລາດ (ສຶກສາ ມາຣະໂກ 15:1-15)
   1. ເຈົ້າຄິດຢ່າງໃດ ເມື່ອເຂົານຳພຣະເຢຊູມາຫາເຈົ້າ? 2. ເຈົ້າຄິດຢ່າງໃດເມື່ອຝູງຊົນຮ້ອງບອກໃຫ້ເຈົ້າປ່ອຍບາຣະບາ?
   3. ເຈົ້າເຊື່ອວ່າພຣະເຢຊູມີຄວາມຜິດແທ້ບໍ່? 4. ເປັນຫຍັງເຈົ້າຈິ່ງຟັງຄວາມພວກເຈົ້ານາຍແລະຝູງຊົນ?
   5. ໃນເວລາເຈົ້າສອບສວນພຣະເຢຊູເຈົ້າເຫັນພຶດຕິກັມຫຍັງແດ່ຈາກພຣະອົງ?

6. ໝວດທີ ຫົກ ທະຫານໂຣມັນ (ສຶກສາ ມາຣະໂກ 15:16-20)
   1. ມີທະຫານປະມານຫລາຍປານໃດທີ່ມາດູຖູກພຣະເຢຊູນຳເຈົ້າ? 2. ເຈົ້າຮູ້ສຶກຢ່າງໃດເມື່ອເຈົ້າໄດ້ທໍຣະມານພຣະເຢຊູແລ້ວ? 3. ເປັນຫຍັງເຈົ້າຈິ່ງເອົາຜ້າສີມ່ວງມາຄຸມແລະເອົາໝວກໜາມມາໃສ່ຫົວໃຫ້ພຣະເຢຊູ?
   4. ເມື່ອພຣະເຢຊູຖືກທໍຣະມານ ພຣະອົງມີອາການຢ່າງໃດ?

## <u>ນຳມາໃຊ້ໃນຊີວິດປະຈຳວັນ</u>

4. ໜູນໃຈໃຫ້ນັກຮຽນ ເຮັດຕາມຕົວຢ່າງທີ່ພຣະເຢຊູໄດ້ສະແດງອອກ ບໍ່ວ່າຈະເປັນການກະທຳ ແລະນິສັຍ. ໃນຊີວິດປະຈຳວັນພວກເຮົາກໍອາດຈະພົບເໝືອນພຣະອົງ ເຖິງແມ່ນຈະບໍ່ໜັກເໝືອນພຣະເຢຊູ ແຕ່ພວກເຮົາກໍຕ້ອງມີຄວາມອົດທົນ.

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 13
# ພຣະເຢຊູຊົງສິ້ນພຣະຊົນແລະເປັນຄືນມາອີກ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ມາຣະໂກ 15:21--41; 16:1-8

**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** ມາຣະໂກ 15:21--16:8

**ຈຸດສຳຄັນຂອງບົດຮຽນນີ້:** ການສິ້ນພຣະຊົນແລະການເປັນຄືນມາ ສະແດງວ່າພຣະເຢຊູຊົງເປັນພຣະບຸດຂອງພຣະເຈົ້າແທ້.

**ຄຳຖາມເພື່ອສຳຣວດ:** ແມ່ນຫຍັງທີ່ເຮັດໃຫ້ທ່ານເຊື່ອພຣະເຢຊູ ການດຳເນີນຊີວິດ,ການສິ້ນພຣະຊົນຫລືການຄືນພຣະຊົນ?

**ຈຸດປະສົງຂອງບົດຮຽນ:** ເພື່ອໃຫ້ເຫັນຈຸດເດັ່ນ ໃນການປ່າວປະກາດ, ໃນການຖວາຍຕົວ, ໃນການຄືນພຣະຊົນ ວ່າພຣະເຢຊູຊົງເປັນພຣະບຸດຂອງພຣະເຈົ້າແທ້ ຜູ້ທີ່ເຮົາມອບຊີວິດໃຫ້.

## ແຜນການສິດສອນ

## ນຳເຣື່ອງເຂົ້າສູ່ຊີວິດຈິງ

ເບື້ອງຊ້າຍຂອງກະດານ ໃຫ້ຂຽນຊື່ ນັກຟຸດບອນ, ນັກບັສແກັດບອນ ທີ່ທ່ານຮູ້.
ເບື້ອງຂວາຂອງກະດານ ໃຫ້ຂຽນ ວ່າ ເປັນຫຍັງເຂົາເຈົ້າຈຶ່ງສຳເຣັດ. (ເຂົາຕ້ອງຟັງຄວາມຂອງຜູ້ຝຶກ)
ຄຣູຕ້ອງອະທິບາຍເຖິງພຣະເຢຊູວ່າເປັນຍັງພຣະອົງຈຶ່ງສຳເຣັດເປົ້າຫມາຍໄດ້. ພຣະເຢຊູສຳເຣັດຢ່າງໃດໃນແຜ່ນດິນໂລກ.

## ນຳພາສຶກສາພຣະທັມ

2. ໃຫ້ຊອກຫາເຣື່ອງການສິ້ນພຣະຊົນຂອງພຣະເຢຊູ ວ່າ ໃນຕອນໃດທີ່ຢັ້ງຢືນວ່າພຣະເຢຊູເປັນບຸດຂອງພຣະເຈົ້າແທ້.
   1. ຊີໂມນຄົນກີເຣເນ ແບກກາງແຂນແທນພຣະອົງ (15:21)
   2. ທະຫານນຳນັກໂທດອອກໄປປະຫານ (15:22-27)
   3. ຝູງຊົນຫມິ່ນປມາດພຣະອົງ (15:29-32)
   4. ພຣະເຢຊູແບກຄວາມບາບຂອງໂລກ (15:33-39)
   5. ພວກຜູ້ຍິງຕິດຕາມພຣະອົງດ້ວຍຄວາມເຊື່ອ (15:40-41)

   ພຣະເຢຊູ ຊົງຟື້ນຄືນພຣະຊົນ (ມາຣະໂກ 15:42--16:8)
   1. ພຣະເຢຊູຊົງສິ້ນພຣະຊົນແລະ ຖືກຝັງໄວ້ (15: 42-47)
   2. ພຣະເຢຊູ ຟື້ນຂຶ້ນມາໃຫມ່ ແລະຍັງມີຊີວິດຢູ່ອີກ (16:1-8)

3. ແບ່ງຫ້ອງອອກເປັນສອງຝ່າຍງນຶ່ງໃຫ້ອ່ານ ມາຣະໂກ 15:22-27 ແລະອີກເຄິ່ງຫ້ອງ ໃຫ້ອ່ານ ມາຣະໂກ 15:29-32 ແລະໃຫ້ ຊອກຫາວ່າສິ່ງໃດທີ່ຢັ້ງຢືນວ່າ ພຣະເຢຊູເປັນພຣະບຸດຂອງພຣະເຈົ້າ. ຫລັງຈາກນັ້ນ ກໍໃຫ້ຜູ້ຕາງໜ້າໝູ່ ອະທິບາຍ.

4. ໂດຍອີງໃສ່ເຈັ້ຽບົດຮຽນ ໃຫ້ຄຣູອະທິບາຍ 15:33-39. (ຢ່າລືມ: ພຣະເຈົ້າຊົງຢູ່ໃນພຣະເຢຊູ, ພຣະອົງເໜືອມະນຸດ, ການຕາຍ, ການເສັຽສລະ, ການສມັກໃຈ, ການຈີກຂາດຂອງຜ້າກັ້ງ, ຄຳເວົ້າຂອງທະຫານໂຣມັນ.

5. ໃຫ້ນັກຮຽນຄົນນຶ່ງອ່ານ ມາຣະໂກ 15:40-41 ໃຫ້ສັງເກດເຖິງຄວາມເຊື່ອ ວ່າຜູ້ຍິງພວກນີ້ຕິດຕາມພຣະເຈົ້າຢ່າງແທ້ຈິງ, ເຖິງແມ່ນຈະມີບັນຫາກໍຕາມ.

6. ໃຫ້ຮວບຮວມ 15:42-47 ອະທິບາຍວ່າ ການຕາຍນັ້ນແມ່ນການຕາຍຢ່າງແທ້ຈິງ.

7. ອ່ານມາຣະໂກ 16:1-8 ແລະເປັນຫຍັງ ຂໍ້ 9 ແລະ ຂໍ້ 20 ຈຶ່ງບໍ່ຖືກນັບເຂົ້າໃນບົດຮຽນນີ້. ການຄືນພຣະຊົນຂອງພຣະເຢຊູຄຣິດກໍແມ່ນການຢັ້ງຢືນຢ່າງແນ່ນອນແລ້ວວ່າ ພຣະເຢຊູຊົງເປັນພຣະບຸດຂອງພຣະເຈົ້າຢ່າງບໍ່ມີຂໍ້ສົງສັຍ. ຜູ້ໃດຫາກເຊື່ອໃນພຣະເຢຊູ ຜູ້ນັ້ນກໍເປັນຜູ້ທີ່ເຊື່ອໃນພຣະເຈົ້າຢ່າງແທ້ຈິງ.

## <u>ນຳມາໃຊ້ໃນຊີວິດປະຈຳວັນ</u>

8. ຖ້າມີຄົນມາຖາມທ່ານໃນເວລາທ່ານທຳງານຫລື ຢູ່ບ້ານ ຫລືໄປງານລ້ຽງ ວ່າ ແມ່ນຫຍັງຄືສິ່ງສຳຄັນທີ່ສຸດທີ່ຢັ້ງຢືນວ່າ ພຣະເຢຊູຊົງເປັນພຣະເຈົ້ານັ້ນ ທ່ານຈະອະທິບາຍຫຍັ້ງ ໃຫ້ເຂົາເຂົ້າໃຈຢ່າງໃດ?

9. ໜູນໃຈນັກຮຽນໃຫ້ຖວາຍຕົວ ໃຫ້ພຣະເຢຊູ, ພຣະບຸດຂອງພຣະເຈົ້າ. ທ່ານສາມາດເວົ້າໄດ້ບໍ່ວ່າ " ພຣະເຢຊູເປັນຂອງຂານ້ອຍ, ຂານ້ອຍຮັກພຣະອົງຫລາຍກວ່າສິ່ງໃດທັງໝົດ "

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນເພີ້ມເຕີມ
# ພຣະເຢຊູຊົງສອນເຣື່ອງອະນາຄົດ

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ມາຣະໂກ 13:1-37
ຂໍ້ພຣະຄັມພີສຳລັບເບື້ອງຫຼັງ: ມາຣະໂກ 13:1-37
ຈຸດສຳຄັນຂອງບົດຮຽນນີ້: ພຣະເຢຊູຊົງສອນສາວົກຂອງພຣະອົງໃຫ້ຄອຍຣະວັງແລະໃຫ້ຕັ້ງໝັ້ນຢູ່ໃນພຣະອົງ ແລະໃຫ້ຣະວັງການຈະຫລອກໃຫ້ຫລົງທາງຂອງຜູ້ຄົນທີ່ອ້າງຕົວເອງວ່າພວກເຂົາຮູ້ທຸກຢ່າງທີ່ຈະເກີດຂື້ນ.

ຄຳຖາມເພື່ອການສຳຣວດ: ພວກເຮົາຄວນຈະດຳເນີນຊີວິດແນວໃດໃນສະພາບການທີ່ບໍ່ແນ່ນອນ?
ຈຸດປະສົງຂອງບົດຮຽນນີ້: ເພື່ອສລຸບຄຳສອນຂອງພຣະເຢຊູຄຣິດໃນ ມາຣະໂກ 13 ແລະຫາວິທີທີ່ຖືກຕ້ອງເພື່ອການຕຽມພ້ອມສຳລັບການກັບມາຄັ້ງທີສອງຂອງພຣະອົງ.

## ແຜນສຳລັບການສອນ

ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)

1. ຖາມນັກຮຽນວ່າມີໃຜເຄີຍອ່ານປື້ມຫລືໜັງສືພິມ ເຣື່ອງວັນສຸດທ້າຍ ແລະການກັບມາຄັ້ງທີສອງຂອງພຣະເຢຊູຄຣິດ ບໍ່? ຖ້າມີ, ກໍຂໍໃຫ້ນັກຮຽນຄົນນັ້ນແບ່ງປັນເຣື່ອງນີ້ແບບສັ້ນໆເພື່ອຄົນອື່ນໆຈະໄດ້ຮຽນຮູ້. ເຕືອນນັກຮຽນວ່າມາຣະໂກບົດທີ 13 ຈະເວົ້າເຣື່ອງຄຳທຳນວາຍກ່ຽວກັບການທຳລາຍພຣະວິຫານແລະການກັບມາຄັ້ງທີສອງ.

ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)

2. ກ່ອນນີ້ຈະສອນບົດຮຽນນີ້, ໃຫ້ຕຽມເຈັ້ຽ ຖາມດັ່ງຕໍ່ໄປນີ້ໄວ້ເພື່ອຈະໄດ້ແຈກຢາຍໃຫ້ພວກນັກຮຽນ

### ພຣະເຢຊູຊົງສອນເຣື່ອງອະນາຄົດ
(ໃຫ້ເລືອກແລະໝາຍຄຳຕອບທີ່ຖືກທີ່ສຸດ)

ກ. ຄຳເຕືອນກ່ຽວກັບການທຳລາຍພຣະວິຫານ (ມາຣະໂກ 13:1-23)

(1). ໃນມາຣະໂກ 13:1, ພວກສາວົກພາກັນຕົກຕະລຶງເມື່ອໄດ້ເຫັນຄວາມໃຫຍ່ຂອງກ້ອນຫີນທີ່ໃຊ້ໃນການສ້າງວິຫານໂດຍ:

(ກ). ___ໂຊໂລໂມນ (ຂ). ___ຊາຣູບາເບັນ (ຄ). ___ເຮໂຣດ

(2). ພຣະເຢຊູຄຣິດທຳນວາຍເຣື່ອງການທຳລາຍວິຫານຊຶ່ງເກີດຂື້ນໃນປີ:

(ກ). ___ຄ.ສ 40 (ຂ). ___ຄ.ສ 70 (ຄ). ___ຄ.ສ 330

(3). ໃນມາຣະໂກ 13:5-6, ພຣະເຢຊູຊົງເຕືອນພວກສາວົກໃຫ້ຄອຍລະວັງ:

(ກ). ___ຄຣູປອມ (ຂ). ___ຜູ້ນຳໂຣມ (ຄ). ___ຄຣິສຕຽນ

(4). ສົງຄາມແລະພັຍຕ່າງໆແມ່ນ:

(ກ). ___ໝາຍຂອງວັນສຸດທ້າຍ (ຂ). ___ສິ່ງເກີດຂື້ນໃນທຸກໆສມັຍ

(5). ພຣະເຢຊູທຳນວາຍວ່າພວກສາວົກຂອງພຣະອົງຈະ:

(ກ). ___ບໍ່ມີບັນຫາ (ຂ). ___ຖືກຂົ່ມເຫງ (ຄ). ___ມີຄົນຮັກແພງ

(6). ໃນ ຂໍ້ 14-20, ພຣະເຢຊູຊົງສັ່ງໃຫ້ໜີໂດຍໄວເພາະ:

(ກ). ___ການທຳລາຍພຣະວິຫານ (ຂ). ___ວັນສຸດທ້າຍ

ຂ. ຄຳເຕືອນກ່ຽວກັບການກັບມາຄັ້ງທີສອງແລະວັນສຸດທ້າຍ (ມາຣະໂກ 13:24-27)

(7). ພຣະເຢຊູຊົງບອກພວກສາວົກວ່າ:

(ກ). ___ວັນສຸດທ້າຍໄດ້ມາເຖິງແລ້ວ

(ຂ). ___ພວກເຂົາຈະຮູ້ເວລາວັນສຸດທ້າຍມາເຖິງ

(8). ພຣະເຢຊູຊົງທຳນວາຍວ່າຄົນທັງຫລາຍຈະໄດ້ເຫັນ "ບຸດມະນຸດ" ມາ:

(ກ). ___ໃນເມກ (ຂ). ___ໃນຮູບຂອງກະສັດໂລກທີ່ເຂັ້ມແຂງ

(9). ພຣະເຢຊູຊົງບອກວ່າພວກເທວະດາຈະ:

(ກ). ___ເຮັດໃຫ້ຄຣິສຕະຈັກແຕກຢາຍອອກໄປ (ຂ). ___ຮວບຮວມຜູ້ທີ່ໄດ້ຊົງເລືອກໄວ້

ຄ. ຄຳເຕືອນກ່ຽວກັບການຄອຍລະວັງ (ມາຣະໂກ 13:28-37)

(10). ຄຳອຸປມາເຣື່ອງຕົ້ນເດື່ອເທດເວົ້າເຖິງ:

(ກ). ___ການທຳລາຍພຣະວິຫານ (ຂ).___ການກັບມາຄັ້ງທີສອງ

(11). ຄຳອຸປມາເຣື່ອງເຈົ້ານາຍກັບຈາກການເດີນທາງເວົ້າເຖິງ:

(ກ). ___ການທຳລາຍພຣະວິຫານ (ຂ).___ການກັບມາຄັ້ງທີສອງ

(12). ພຣະເຢຊູຊົງເຕືອນພວກສາວົກໃຫ້:

(ກ). ___ນອນ (ຂ). ___ບໍ່ຕ້ອງເຮັດຫຍັງ (ຄ). ___ຄອຍລະວັງ

ໃຫ້ເວລານັກຮຽນເພື່ອການຕອບຄຳຖາມຂ້າງເທິງນີ້; ອ່ານ 13:1-4 ສຳລັບຄຳຖາມ (1) ແລະ (2). ອະທິບາຍເຣື່ອງການສ້າງພຣະວິຫານທັງສາມຄັ້ງ ແລະ ການທຳລາຍເຢຣູຊາເລັມຂອງພວກໂຣມ. ກວດເບິ່ງຄຳຕອບ; ຄຳຕອບທີ່ຖືກຕ້ອງສຳລັບຂໍ້ (1) ແມ່ນ (ຄ) ແລະ ຂໍ້ (2) ແມ່ນ (ຂ).

3. ອ່ານ ແລະອະທິບາຍ ມາຣະໂກ 13: 5-23 ສຳລັບຄຳຖາມ (3) ເຖິງ (6), 13:24-27 ສຳລັບຄຳຖາມ (7) ເຖິງ

(9), 13: 28-37 ສຳລັບຄຳຖາມ (10) ເຖິງ (12). ຄຳຕອບທີ່ຖືກຕ້ອງສຳລັບຂໍ້ (3) ແມ່ນ (ກ), (4) ແມ່ນ (ຂ), (5) ແມ່ນ (ຂ), (6) ແມ່ນ (ກ), (7) ແມ່ນ (ກ), (8) ແມ່ນ (ກ), (9) ແມ່ນ (ຂ), (10) ແມ່ນ (ກ), (11) ແມ່ນ (ຂ), (12) ແມ່ນ (ຄ).

<u>ນຳບົດຮຽນໄປໃຊ້ໃນຊີວິດ</u> (ໃຊ້ເວລາ 15 ນາທີ

4. ຊັກຊວນນັກຮຽນແຕ່ລະຄົນໃຫ້ສແວງຫາໂອກາດເພື່ອການເຮັດດີ ແທນທີ່ຈະເສັຽເວລາສຶກສາເພື່ອຈະໄດ້ຮູ້ວ່າ ພຣະເຢຊູຄຣິດຈະກັບມາປີໃດ, ເດືອນໃດ, ຫລືວັນເວລາໃດ. ອະທິຖານປິດ.

---

<u>ການສ້າງພຣະວິຫານທັງສາມຄັ້ງ</u>

1. ກະສັດໂຊໂລໂມນເປັນຄົນສ້າງພຣະວິຫານຫລັງທີນຶ່ງແລະສຳເຣັດໃນປີ 950 ກ່ອນຄຣິສຕະສັກຣາຊ. ພວກບາບີໂລນ ໄດ້ທຳລາຍພຣະວິຫານຫລັງນີ້ໃນປີ 587 ກ່ອນຄຣິສຕະສັກຣາດ.

2. ເຊຣູບາເບນໄດ້ສ້າງພຣະວິຫານຫລັງທີສອງຂຶ້ນແທນບ່ອນທີ່ໂຊໂລໂມນໄດ້ສ້າງມາກ່ອນ. ການສ້າງພຣະວິຫານຄັ້ງນີ້ໄດ້ສຳເຣັດໃນປີ 515 ກ່ອນຄຣິສຕະສັກຣາດ. ພຣະວິຫານນີ້ມີຂນາດນ້ອຍກວ່າຫລັງທີ່ຖືກທຳລາຍໄປ. ພວກຢິວໄດ້ໃຊ້ພຣະວິຫານນີ້ເປັນເວລາຫລາຍກວ່າ 500 ປີ.

3. ກະສັດເຮໂຣດໄດ້ເລີ້ມສ້າງພຣະວິຫານຫລັງທີ່ສາມຂຶ້ນໃນພື້ນທີ່ດຽວກັນໃນປີ 19 ກ່ອນຄຣິສຕະສັກຣາດ; ວິຫານຫລັງນີ້ໄດ້ເຕັມໄປດ້ວຍຄວາມສວຍງາມເກີນກວ່າສິ່ງອື່ນໃດທີ່ໄດ້ຖືກສ້າງຂຶ້ນທີ່ກຸງເຢຣູຊາເລັມ. ບໍຣິເວນພຣະວິຫານໃຊ້ພື້ນທີ່ທັງໝົດປະມານ 1/6 ຂອງກູງເຢຣູຊາເລັມ. ການສ້າງພຣະວິຫານຫລັງນີ້ຍັງບໍ່ທັນສຳເຣັດ ໃນເວລາທີ່ພວກສາວົກທູນພຣະເຢຊູວ່າ "ເບິ່ງດູ, ອາຈານເອີຍ ກ້ອນຫີນແລະຕຶກເຫລົ່ານີ້ເກີນວ່າງົດງາມ" (ມາຣະໂກ 13: 1). ພວກໂຣມໄດ້ທຳລາຍພຣະວິຫານຫລັງທີສາມນີ້ໃນປີ ຄຣິສຕະສັກຣາດ 70 ໃນຂນະທີ່ການສ້າງສາຍັງບໍ່ທັນໄດ້ສຳເຣັດເລີຍ.